# ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ເອກະສານລາຍງານການເງິນສະເພາະກິດຈະການ (ກ່ອນການກວດສອບ)

ວັນທີ 31 ມີນາ 2018

# ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

## ສາລະບານ


| | ໜ້າ |
|---|---|
| ຂໍ້ມູນທົ່ວໄປ | 1 - 3 |
| ໃບລາຍງານຜົນການດຳເນີນງານໃນການທຸລະກິດສະເພາະກິດຈະການ | 4 |
| ໃບລາຍງານຜົນການດຳເນີນງານນອກການທຸລະກິດສະເພາະກິດຈະການ | 5 |
| ໃບລາຍງານຖານະການເງິນສະເພາະກິດຈະການ | 6 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສະເພາະກິດຈະການ | 7 - 8 |
| ໃບລາຍງານກະແສເງິນສົດສະເພາະກິດຈະການ | 9 - 10 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສະເພາະກິດຈະການ | 11 - 57 |

## ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

### ຂໍ້ມູນທົ່ວໄປ

### ທະນາຄານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ໃນບົດລາຍງານສະບັບນີ້ ເອີ້ນວ່າ "ທະນາຄານ") ດຳເນີນທຸລະກິດໃນຮູບແບບມະຫາຊົນ ແລະ ຈົດທະບຽນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ).

### *ການສ້າງຕັ້ງ ແລະ ການດຳເນີນທຸລະກິດ*

ທະນະຄານຖືກສ້າງຕັ້ງຂຶ້ນໂດຍການປະກອບທຶນຂອງທະນາຄານການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989. ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມ ໃບທະບຽນວິສາຫະກິດ ເລກທີ 0061/ທຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ນະວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕາງໜ້າໂດຍ ກະຊວງການເງິນ ເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% ຂອງຮຸ້ນທັງໝົດ (ທຽບເທົ່າກັບ 13.657.759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ ທະນາຄານ Compagnie Financière de la BRED (“COFIBRED’ ’ ). ອີງຕາມສັນຍາການຊື້ຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED. COFIBRED ແມ່ນທະນາຄານໃນເຄືອຂອງ BRED, ທະນາຄານດັ່ງກ່າວເປັນທະນາຄານທີ່ໃຫຍ່ທີ່ສຸດໃນພາກພື້ນຂອງສະມາຄົມທະນາຄານ ພາຍໃຕ້ກຸ່ມຂອງ Banque Populare Group ເຊິ່ງເປັນກຸ່ມຮ່ວມມືຂອງທະນາຄານຂອງປະເທດຝຣັ່ງ. ມູນຄ່າຊື້ທັງໝົດ ເຊິ່ງເທົ່າກັບ 150.235.349.000 ກີບ ໄດ້ຖືກຈ່າຍເຕັມມູນຄ່າໂດຍທະນາຄານ COFIBRED.

ໃນວັນທີ 17 ສິງຫາ 2017, ຫ້ອງການຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອະນຸມັດໃຫ້ທະນາຄານເພີ່ມທຶນໂດຍການສະເໜີຂາຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ຈຳນວນ 68.047.300 ຮຸ້ນ ແລະ ສາທາລະນະຊົນ ຈຳນວນ 3.098.400 ຮຸ້ນ ໃນຕະຫຼາດຫຼັກຊັບລາວເພື່ອເພີ່ມທຶນຈົດທະບຽນ. ທະນາຄານໄດ້ຮັບໃບທະບຽນວິສາຫະກິດທະນາຄານສະບັບໃໝ່ ເລກທີ 21/ທຫລ, ລົງວັນທີ 13 ກັນຍາ 2017 ອອກໂດຍ ທະນາຄານແຫ່ງ ສປປ ລາວ. ໃນວັນທີ 15 ກັນຍາ 2017, ຕະຫລາດຫລັກຊັບລາວໄດ້ຢັ້ງຢືນວ່າທະນາຄານໄດ້ເພີ່ມທຶນຈົດທະບຽນ ຈຳນວນ 355.728.500.000 ກີບ (ເທົ່າກັບ 71.145.700 ຮຸ້ນ) ຕາມໃບຢັ້ງຢືນເລກທີ 01/ຕລຊລ, ລົງວັນທີ 15 ກັນຍາ 2017 ແລະ ໃບທະບຽນວິສາຫະກິດສະບັບປັບປຸງໃໝ່ ເລກທີ 0889/ERO, ລົງວັນທີ 15 ກັນຍາ 2017 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ

ອີງຕາມການແຈ້ງການຂອງຄະນະກຳມະການຄຸ້ມຄອງຫຼັກຊັບ, ໂຄງສ້າງການຖືຮຸ້ນຂອງທະນາຄານ ນະວັນທີ 31 ມີນາ 2018 ມີດັ່ງລຸ່ມນີ້:

| *ຜູ້ຖືຮຸ້ນ* | *ຈຳນວນຮຸ້ນ* | *%* |
|---|---:|---:|
| ລັດຖະບານ | 145.406.321 | 70% |
| ຄູ່ຮ່ວມຮຸ້ນທາງຍຸດທະສາດ | 20.772.359 | 10% |
| ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ) ແລະ ນັກລົງທຶນຕ່າງປະເທດ | 41.544.620 | 20% |
| | **207.723.300** | 100% |

ກິດຈະກຳຫລັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການລວມທັງ ການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກອົງກອນ ແລະ ບຸກຄົນ; ເງິນກູ້ໄລຍະສັ້ນ, ກາງ, ຍາວ ແລະ ເງິນລ່ວງໜ້າໃຫ້ແກ່ອົງກອນ ແລະ ບຸກຄົນ ອີງຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ການບໍລິການການຄ້າລະຫວ່າງປະເທດ, ສ່ວນຫລຸດຂອງເອກະສານທາງດ້ານການຄ້າ, ພັນທະບັດ ແລະ ເອກະສານທີ່ມີຄຸນຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງສປປລາວ.

## ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

**ຂໍ້ມູນທົ່ວໄປ** (ຕໍ່)

***ທຶນຈົດທະບຽນ***

ທຶນຈົດທະບຽນ ນະວັນທີ 31 ມີນາ 2018 ແມ່ນ 1.038.617 ລ້ານກີບ. (ວັນທີ 31 ທັນວາ 2017: 1.038.617 ລ້ານກີບ).

***ທີ່ຕັ້ງ ແລະ ເຄືອຂ່າຍ***

ສໍານັກງານໃຫຍ່ຂອງທະນາຄານຕັ້ງຢູ່ເລກທີ 01, ຖະໜົນປາງຄໍາ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ໃນວັນທີ 31 ມີນາ 2018 ທະນາຄານມີໜຶ່ງ (1) ສໍານັກງານໃຫຍ່, ໜຶ່ງ (1) ບໍລິສັດໃນເຄືອ, ສີ່ (4) ບໍລິສັດຮ່ວມທຶນ, ສິບເກົ້າ (19) ສາຂາຫລັກ, ແປດສິບຫົກ (86) ໜ່ວຍບໍລິການ ແລະ ສິບຫົກ (16) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

***ບໍລິສັດໃນເຄືອ***

ນະວັນທີ 31 ມີນາ 2018 ທະນາຄານມີ ໜຶ່ງ (01) ບໍລິສັດໃນເຄືອຄື:

| *ຊື່* | *ໃບທະບຽນວິສາຫະກິດ* | *ຂະແໜງການ* | *% ຖືຮຸ້ນຂອງ ທະນາຄານ* |
|---|---|---|---|
| ບໍລິສັດຫລັກຊັບ ທຄຕລ - ກທ ຈໍາກັດ | ເລກທີ 180-10 ລົງວັນທີ 14 ທັນວາ 2010 ໂດຍ ກົມ ສົ່ງເສີມການລົງທຶນຂອງກະຊວງແຜນການ ແລະ ການລົງທຶນ ຂອງ ສປປ ລາວ | ຫລັກຊັບ | 70% |

***ບໍລິສັດຮ່ວມທຶນ***

ນະວັນທີ 31 ມີນາ 2018, ທະນາຄານມີ ສີ່ (04) ບໍລິສັດຮ່ວມທຶນຄື:

| *ຊື່* | *ໃບທະບຽນວິສາຫະກິດ* | *ຂະແໜງການ* | *% ຮຸ້ນຂອງ ທະນາຄານ* |
|---|---|---|---|
| ທະນາຄານຮ່ວມທຸລະກິດ ລາວ - ຫວຽດ | ເລກທີ 732/ ERO ລົງວັນທີ 29 ສິງຫາ 2016 ໂດຍ ກະຊວງອຸດສາຫະກໍາ ແລະ ການຄ້າ | ການທະນາຄານ & ການເງິນ | 25% |
| ທະນາຄານລາວ - ຝຣັ່ງ | 121-09/ຜທ ລົງວັນທີ 26 ສິງຫາ 2009 ໂດຍ ກະຊວງ ແຜນການ ແລະ ການລົງທຶນ ຂອງ ສປປ ລາວ | ການທະນາຄານ & ການເງິນ | 46% |
| ບໍລິສັດປະກັນໄພ ລາວ - ຫວຽດ | 0600 ລົງວັນທີ 16 ສິງຫາ 2013 ໂດຍ ກະຊວງ ອຸດສະຫະກໍາ ແລະ ການຄ້າ. | ປະກັນໄພ | 35% |
| ທະນາຄານ ລາວ - ຈີນ ຈໍາກັດ | ເລກທີ 041/ທຈທ ລົງວັນທີ 27 ມັງກອນ 2014 ໂດຍ ພະແນກທະບຽນວິສາຫະກິດ ຂອງ ສປປ ລາວ. | ການທະນາຄານ & ການເງິນ | 49% |

**ຂໍ້ມູນທົ່ວໄປ** (ຕໍ່)

**ສະພາບໍລິຫານ**

ສະມາຊິກສະພາບໍລິຫານຂອງທະນາຄານ ສຳລັບໄລຍະສາມເດືອນ ສິ້ນສຸດວັນທີ 31 ມີນາ 2018 ແລະ ນະວັນທີທີ່ອອກເອກະສານລາຍງານສະບັບນີ້ປະກອບມີ:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ ບຸນເຫຼືອ ສິນໄຊວໍລະວົງ | ປະທານ | 9 ເມສາ 2015 |
| ທ່ານ ຄຳສຸກ ສູນດາລາ | ຮອງປະທານ | 9 ເມສາ 2015 |
| ທ່ານ ພູຂົງ ຈັນທະຈັກ | ສະມາຊິກ | 9 ເມສາ 2015 |
| ທ່ານ ພັນຊະນະ ຄຸນນຸວົງ | ສະມາຊິກ | 9 ເມສາ 2015 |
| ທ່ານ ນ. ຂັນທະລີ ວົງໄຊຍະລາດ | ສະມາຊິກ | 9 ເມສາ 2015 |
| ທ່ານ ມາກ ໂຣເບີດ | ສະມາຊິກ | 9 ເມສາ 2015 |
| ທ່ານ ວຽງໄຊ ຈັນທະວິສຸກ | ສະມາຊິກ | 9 ເມສາ 2015 |

**ຄະນະອຳນວຍການ**

ສະມາຊິກຄະນະອຳນວຍການຂອງທະນາຄານ ສຳລັບໄລຍະສາມເດືອນ ສິ້ນສຸດວັນທີ 31 ມີນາ 2018 ແລະ ນະວັນທີທີ່ອອກເອກະສານລາຍງານສະບັບນີ້ປະກອບມີ:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ/ລາອອກ* |
|---|---|---|
| ທ່ານ ພູຂົງ ຈັນທະຈັກ | ຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງ ວັນທີ 15 ມັງກອນ 2016 |
| ທ່ານ ພັນຊະນະ ຄຸນນຸວົງ | ຮອງຜູ້ອຳນວຍການ | ແຕ່ງຕັ້ງ ວັນທີ 06 ມິຖຸນາ 2008 |
| ທ່ານ ລາໃຈ ຄັນພຣະວົງສ໌ | ຮອງຜູ້ອຳນວຍການ | ແຕ່ງຕັ້ງ ວັນທີ 30 ກັນຍາ 2014 |
| ທ່ານ ນັນທະລາດ ແກ້ວປະເສີດ | ຮອງຜູ້ອຳນວຍການ | ແຕ່ງຕັ້ງ ວັນທີ 30 ກັນຍາ 2014 |
| ທ່ານ ຄຳຊຽນ ມິ່ງບຸບຜາ | ຮອງຜູ້ອຳນວຍການ | ແຕ່ງຕັ້ງ ວັນທີ 23 ພະຈິກ 2015 |
| ທ່ານ ສຸພັກ ຖິ່ນໄຊພອນ | ຮອງຜູ້ອຳນວຍການ | ແຕ່ງຕັ້ງ ວັນທີ 23 ພະຈິກ 2015 |
| ທ່ານ ບົວວັນ ສີມະລີວົງ | ຮອງຜູ້ອຳນວຍການ | ແຕ່ງຕັ້ງ ວັນທີ 1 ພະຈິກ 2016 |

**ຕົວແທນທາງດ້ານກົດໝາຍ**

ຕົວແທນທາງດ້ານກົດໝາຍຂອງທະນາຄານ ພາຍໃນຊ່ວງໄລຍະ ແລະ ນະມື້ອອກເອກະສານລາຍງານການເງິນສະບັບນີ້ແມ່ນທ່ານ ພູຂົງ ຈັນທະຈັກ - ຜູ້ອຳນວຍການໃຫຍ່.

## ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນການດໍາເນີນງານໃນການທຸລະກິດສະເພາະກິດຈະການ (ກ່ອນການກວດສອບ)
ສໍາລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 31 ມີນາ 2018

| | ບົດອະທິບາຍ ເລກທີ | *ສໍາລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2018 ລ້ານກີບ* | *ສໍາລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2017 ລ້ານກີບ* |
|---|---|---|---|
| ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ | 7 | 460.610 | 411.074 |
| ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ | 8 | (234.168) | (221.549) |
| **ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | | **226.442** | **189.525** |
| ລາຍຮັບຄ່າທໍານຽມ ແລະ ຄ່າບໍລິການ | 9 | 61.508 | 43.567 |
| ລາຍຈ່າຍຄ່າທໍານຽມ ແລະ ຄ່າບໍລິການ | 9 | (6.034) | (6.052) |
| **ລາຍຮັບສຸດທິຈາກຄ່າທໍານຽມ ແລະ ຄ່າບໍລິການ** | **9** | **55.474** | **37.515** |
| ກໍາໄລສຸດທິຈາກການແລກປ່ຽນເງິນຕາຕ່າງປະເທດ | 10 | 15.754 | 11.427 |
| ລາຍຮັບອື່ນໆຈາກການດໍາເນີນງານ | 11 | 8.027 | 7.935 |
| **ລາຍຮັບທັງໝົດຈາກການດໍາເນີນງານ** | | **305.697** | **246.402** |
| ລາຍຈ່າຍໜີ້ເສຍຈາກເງິນກູ້ໃຫ້ລູກຄ້າ | 17 | (7.964) | (56.623) |
| ເກັບຄືນຈາກ/(ຫັກເພີ່ມ) ຄ່າເສື່ອມມູນຄ່າການລົງທຶນທາງດ້ານການເງິນ | 19 | 580 | 4.412 |
| **ລາຍຮັບສຸດທິຈາກການດໍາເນີນງານ** | | **298.313** | **194.191** |
| ລາຍຈ່າຍພະນັກງານ | 12 | (57.492) | (51.217) |
| ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | 21, 22 | (18.912) | (17.990) |
| ລາຍຈ່າຍອື່ນໆຈາກການດໍາເນີນງານ | 13 | (29.614) | (44.727) |
| **ລາຍຈ່າຍທັງໝົດຈາກການດໍາເນີນງານ** | | **(106.018)** | **(113.934)** |
| **ກໍາໄລກ່ອນອາກອນ** | | **192.295** | **80.257** |
| ລາຍຈ່າຍອາກອນກໍາໄລພາຍໃນໄລຍະ | 27.1 | (52.219) | (17.424) |
| ລາຍຈ່າຍອາກອນກໍາໄລເຍື້ອນຊໍາລະ | 27.1 | (2.724) | (1.709) |
| **ກໍາໄລສຸດທິພາຍໃນໄລຍະ** | | **137.352** | **61.124** |
| **ກໍາໄລຕໍ່ຮຸ້ນ (ກີບ)** | **35** | **661** | **448** |

| ກະກຽມໂດຍ: | ອະນຸມັດໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ ນ. ລໍາມະນີແສງ ໄຊຍະເພັດ<br>ຫົວໜ້າພະແນກບັນຊີສັງລວມ | ທ່ານ ນ. ພູແສງທອງ ອະນຸລັກຄໍາ<br>ຫົວໜ້າພະແນກກວດກາພາຍໃນ | ທ່ານ ບົວວັນ ສີມະລີວົງ<br>ຮອງຜູ້ອໍານວຍການໃຫຍ່ |

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ນະຄອນຫລວງວຽງຈັນ, ສປປ ລາວ
9 ພຶດສະພາ 2018

## ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານນອກການທຸລະກິດສະເພາະກິດຈະການ (ກ່ອນການກວດສອບ)
ສຳລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 31 ມີນາ 2018

| | ບົດອະທິບາຍ ເລກທີ | ສຳລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2018 ລ້ານກີບ | ສຳລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2017 ລ້ານກີບ |
|---|---|---|---|
| **ກຳໄລສຸດທິພາຍໃນໄລຍະ** | | **137.352** | **61.124** |
| **ລາຍຮັບອື່ນໆນອກການທຸລະກິດ** | | | |
| ການປ່ຽນແປງມູນຄ່າຍຸດຕິທຳຂອງເຄື່ອງມືທາງການເງິນມີໄວ້ເພື່ອຂາຍ | | (2.099) | 15.340 |
| ອາກອນກຳໄລທີ່ເກີດຂຶ້ນຈາກອົງປະກອບລາຍຮັບນອກການທຸລະກິດ | | 2.034 | (3.682) |
| **ລາຍຮັບນອກການທຸລະກິດພາຍໃນໄລຍະ ຫຼັງຫັກອາກອນ** | | **(65)** | **11.658** |
| **ຍອດລວມລາຍຮັບນອກການທຸລະກິດພາຍໃນໄລຍະ ຫຼັງຫັກອາກອນ** | | **137.287** | **72.782** |

ກະກຽມໂດຍ:

ທ່ານ ນ. ລຳມະນີແສງ ໄຊຍະເພັດ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ນ. ພູແສງທອງ ອະນຸລັກຄຳ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ບົວວັນ ສີມະລີວົງ
ຮອງຜູ້ອຳນວຍການໃຫຍ່

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ນະຄອນຫລວງວຽງຈັນ, ສປປ ລາວ

9 ພຶດສະພາ 2018

## ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຖານະການເງິນສະເພາະກິດຈະການ (ກ່ອນການກວດສອບ)
ນະວັນທີ 31 ມີນາ 2018

| | ບົດອະທິບາຍ ເລກທີ | 31 ມີນາ 2018 ລ້ານກີບ | 31 ທັນວາ 2017 ລ້ານກີບ |
|---|---|---|---|
| **ຊັບສິນ** | | | |
| ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ | 14 | 5.508.335 | 5.812.734 |
| ເງິນຝາກຢູ່ທະນາຄານອື່ນ | 15 | 3.203.747 | 3.142.501 |
| ເງິນກູ້ໃຫ້ແກ່ລູກຄ້າ | 16 | 21.946.881 | 22.425.778 |
| ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ | 18 | 172.575 | 184.843 |
| ການລົງທຶນທາງການເງິນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ | 19 | 3.769.271 | 2.574.671 |
| ການລົງທຶນໃນບັນດາບໍລິສັດໃນເຄືອ ແລະ ບໍລິສັດຮ່ວມທຶນ | 20 | 561.623 | 561.623 |
| ຊັບສິນບັດຄົງທີ່ ແລະ ອຸປະກອນ | 21 | 451.276 | 456.237 |
| ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 22 | 247.409 | 247.582 |
| ຊັບສິນອາກອນເຍື້ອນຊຳລະ | 27.4 | 6.795 | 17.955 |
| ຊັບສິນອື່ນໆ | 23 | 495.522 | 377.643 |
| **ລວມຊັບສິນ** | | **36.363.434** | **35.801.567** |
| **ໜີ້ສິນ** | | | |
| ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນ | 24 | 3.441.962 | 3.275.546 |
| ໜີ້ຕ້ອງສົ່ງລູກຄ້າ | 25 | 28.624.270 | 28.403.957 |
| ກູ້ຢືມຈາກທະນາຄານອື່ນ | 26 | 2.172.590 | 2.145.402 |
| ໜີ້ສິນອາກອນພາຍໃນງວດ | 27.2 | 65.702 | 20.656 |
| ໜີ້ສິນອາກອນເຍື້ອນຊຳລະ | 27.4 | 2.379 | 13.576 |
| ໜີ້ສິນອື່ນໆ | 28 | 195.912 | 210.418 |
| **ລວມໜີ້ສິນ** | | **34.502.815** | **34.069.555** |
| **ທຶນ** | | | |
| ທຶນຈົດທະບຽນ | 29 | 1.038.617 | 1.038.617 |
| ຄັງສະສົມຕາມລະບຽບການ ແລະ ຄັງສະສົມອື່ນໆ | 30 | 380.382 | 380.382 |
| ເງິນແຮສຳລັບຫຼັກຊັບມີໄວ້ເພື່ອຂາຍ | 31 | (6.558) | 2.186 |
| ກຳໄລສະສົມ | | 448.178 | 310.827 |
| **ລວມທຶນ** | | **1.860.619** | **1.732.012** |
| **ລວມໜີ້ສິນ ແລະ ທຶນ** | | **36.363.434** | **35.801.567** |

| ກະກຽມໂດຍ: | ອະນຸມັດໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ ນ .ລຳມະນີແສງ ໄຊຍະເພັດ | ທ່ານ ນ. ພູແສງທອງ ອະນຸລັກຄຳ | ທ່ານ ບົວວັນ ສີມະລີວົງ |
| ຫົວໜ້າພະແນກບັນຊີສັງລວມ | ຫົວໜ້າພະແນກກວດກາພາຍໃນ | ຮອງຜູ້ອຳນວຍການໃຫຍ່ |

ນະຄອນຫລວງວຽງຈັນ, ສປປ ລາວ

9 ພຶດສະພາ 2018

## ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສະເພາະກິດຈະການ (ກ່ອນການກວດສອບ)
ສຳລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 31 ມີນາ 2018

| | *ທຶນຈົດທະບຽນ*<br>*ລ້ານກີບ* | *ຄັງສະສົມ ຕາມລະບຽບການ*<br>*ລ້ານກີບ* | *ເງິນແຮສຳລັບຫລັກຊັບມີໄວ້ເພື່ອຂາຍ*<br>*ລ້ານກີບ* | *ກຳໄລສະສົມ*<br>*ລ້ານກີບ* | *ລວມ*<br>*ລ້ານກີບ* |
|---|---|---|---|---|---|
| **ຍອດເຫຼືອໃນວັນທີ 31 ທັນວາ 2017** | **1.038.617** | **380.382** | **2.186** | **310.827** | **1.732.012** |
| ກຳໄລສຸດທິພາຍໃນງວດ | - | - | - | 137.352 | 137.352 |
| ການເຄື່ອນໄຫວສຸດທິໃນສຳຮອງທີ່ມີໄວ້ເພື່ອຂາຍ | - | - | (8.744) | - | (8.744) |
| **ຍອດເຫຼືອນະວັນທີ 31 ມີນາ 2018** | **1.038.617** | **380.382** | **(6.558)** | **448.179** | **1.860.619** |

| ກະກຽມໂດຍ: | ອະນຸມັດໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ ນ. ລຳມະນີແສງ ໄຊຍະເພັດ | ທ່ານ ນ. ພູແສງທອງ ອະນຸລັກຄຳ | ທ່ານ ບົວວັນ ສີນະລີວົງ |
| ຫົວໜ້າພະແນກບັນຊີສັງລວມ | ຫົວໜ້າພະແນກກວດກາພາຍໃນ | ຮອງຜູ້ອຳນວຍການໃຫຍ່ |

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນະຄອນຫລວງວຽງຈັນ, ສປປ ລາວ

9 ພຶດສະພາ 2018

## ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດສະເພາະກິດຈະການ (ກ່ອນການກວດສອບ)
ສໍາລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 31 ມີນາ 2018

| | *ບົດອະທິບາຍ ເລກທີ* | *ສໍາລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2018 ລ້ານກີບ* | *ສໍາລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2017 ລ້ານກີບ* |
|---|---|---|---|
| **ກິດຈະກໍາການດໍາເນີນງານ** | | | |
| **ກໍາໄລກ່ອນອາກອນ** | | **192.295** | **80.257** |
| *ການດັດແກ້ສໍາລັບ:* | | | |
| ຄ່າຫຼູ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | 21, 22 | 18.912 | 17.990 |
| ລາຍຈ່າຍຄ່າເສື່ອມ | 17 | 7.964 | 56.623 |
| ລາຍຈ່າຍຄ່າສູນເສຍເງິນລົງທຶນ | | 580 | - |
| ລາຍຈ່າຍສໍາລັບພະນັກງານຫຼຸ້ງອອກການ | 28 | 2.411 | - |
| ລາຍຮັບເງິນປັນຜົນ | | (5.404) | (3.073) |
| **ກະແສເງິນສົດຈາກ ກໍາໄລຈາກການດໍາເນີນງານກ່ອນການປ່ຽນແປງດ້ານຊັບສິນ ແລະ ໜີ້ສິນ** | | **216.757** | **151.797** |
| *ສ່ວນປ່ຽນແປງໃນຊັບສິນຈາກການດໍາເນີນງານ* | | | |
| ປ່ຽນແປງສຸດທິໃນຍອດເຫຼືອຢູ່ທະນາຄານອື່ນ | | (178.339) | 59.037 |
| ປ່ຽນແປງສຸດທິໃນເງິນກູ້ໃຫ້ແກ່ລູກຄ້າ | | 470.934 | (579.122) |
| ລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກໍານົດ | | (1.194.600) | (15.340) |
| ລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ | | 12.268 | (4.112) |
| ປ່ຽນແປງສຸດທິໃນຊັບສິນອື່ນໆ | | (107.424) | (31.662) |
| *ສ່ວນປ່ຽນແປງໃນໜີ້ສິນຈາກການດໍາເນີນງານ* | | | |
| ປ່ຽນແປງສຸດທິໃນໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ | | 193.604 | (765.679) |
| ປ່ຽນແປງສຸດທິໃນໜີ້ຕ້ອງສົ່ງລູກຄ້າ | | 220.313 | 492.159 |
| ປ່ຽນແປງສຸດທິໃນໜີ້ສິນອື່ນໆ | | 26.590 | 15.771 |
| ອາກອນທີ່ໄດ້ຈ່າຍພາຍໃນງວດ | | (7.247) | (20.773) |
| **ກະແສເງິນສົດສຸດທິ/(ນໍາໃຊ້)ຈາກ ການດໍາເນີນງານ** | | **(347.144)** | **(697.923)** |
| **ການເຄື່ອນໄຫວດ້ານການລົງທຶນ** | | | |
| ການຈັດຊື້ ແລະ ການກໍ່ສ້າງຊັບສົມບັດຄົງທີ່ | | (13.964) | (4.009) |
| ຮັບຈາກການຂາຍຊັບສົມບັດຄົງທີ່ | | 185 | 669 |
| ຮັບເງິນປັນຜົນ | | 5.404 | 3.073 |
| **ກະແສເງິນສົດສຸດທິທີ່ໄດ້ນໍາໃຊ້ເຂົ້າໃນການເຄື່ອນໄຫວການລົງທຶນ** | | **(8.374)** | **(267)** |
| **ກິດຈະກໍາການດໍາເນີນງານການເຄື່ອນໄຫວທາງການເງິນ** | | | |
| ຈ່າຍເງິນປັນຜົນ | | - | (25.000) |
| **ກະແສເງິນສົດສຸດທິຈາກ/ (ທີ່ນາໃຊ້ໃນ) ການເຄື່ອນໄຫວທາງການເງິນ** | | **-** | **(25.000)** |
| **ຫຼຸດລົງສຸດທິ ຂອງເງິນສົດ ແລະ ທຽບເທົ່າເງິນສົດ** | | **(355.519)** | **(723.191)** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ** | | **7.315.158** | **7.119.186** |
| **ສ່ວນຜິດດ່ຽງອັດຕາແລກປ່ຽນ** | | **-** | **1.204** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ** | **32** | **6.959.639** | **6.397.199** |

## ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດສະເພາະກິດຈະການ (ກ່ອນການກວດສອບ) (ຕໍ່)
ສໍາລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 31 ມີນາ 2018

| | | |
|---|---|---|
| ກະກຽມໂດຍ: | ອະນຸມັດໂດຍ: | ອະນຸມັດໂດຍ: |
| ທ່ານ ນ. ລໍາມະນີແສງ ໄຊຍະເພັດ | ທ່ານ ນ. ພູແສງທອງ ອະນຸລັກຄໍາ | ທ່ານ ບົວວັນ ສີມະລີວົງ |
| ຫົວໜ້າພະແນກບັນຊີສັງລວມ | ຫົວໜ້າພະແນກກວດກາພາຍໃນ | ຮອງຜູ້ອໍານວຍການໃຫຍ່ |

ນະຄອນຫຼວງວຽງຈັນ, ສປປ ລາວ.

9 ພຶດສະພາ 2018

## 1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ໃນບົດລາຍງານສະບັບນີ້ ເອີ້ນວ່າ "ທະນາຄານ") ດໍາເນີນທຸລະກິດໃນຮູບແບບມະຫາຊົນ ແລະ ຈົດທະບຽນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ).

### *ການສ້າງຕັ້ງ ແລະ ການດໍາເນີນທຸລະກິດ*

ທະນະຄານຖືກສ້າງຕັ້ງຂຶ້ນໂດຍການປະກອບທຶນຂອງທະນາຄານການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989. ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສໍາເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມໃບທະບຽນວິສາຫະກິດ ເລກທີ 0061/ທຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກໍາ ແລະ ການຄ້າ ຂອງ ສປປ ລາວ. ນະວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕາງໜ້າໂດຍ ກະຊວງການເງິນ ເປັນຜູ່ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% ຂອງຮຸ້ນທັງໝົດ (ທຽບເທົ່າກັບ 13.657.759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ ທະນາຄານ Compagnie Financière de la BRED (“COFIBRED’’). ອີງຕາມສັນຍາການຊື້ຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED. COFIBRED ແມ່ນທະນາຄານໃນເຄືອຂອງ BRED, ທະນາຄານດັ່ງກ່າວເປັນທະນາຄານທີ່ໃຫຍ່ທີ່ສຸດໃນພາກພື້ນຂອງສະມາຄົມທະນາຄານພາຍໃຕ້ກຸ່ມຂອງ Banque Populare Group ເຊິ່ງເປັນກຸ່ມຮ່ວມມືຂອງທະນາຄານຂອງປະເທດຝຣັ່ງ. ມູນຄ່າຊື້ທັງໝົດເຊິ່ງເທົ່າກັບ 150.235.349.000 ກີບ ໄດ້ຖືກຈ່າຍເຕັມມູນຄ່າໂດຍທະນາຄານ COFIBRED.

ໃນວັນທີ 17 ສິງຫາ 2017, ຫ້ອງການຄະນະກໍາມະການຄຸ້ມຄອງຫຼັກຊັບໄດ້ອະນຸມັດໃຫ້ທະນາຄານເພີ່ມທຶນໂດຍການສະເຫນີຂາຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ຈໍານວນ 68.047.300 ຮຸ້ນ ແລະ ສາທາລະນະຊົນ ຈໍານວນ 3.098.400 ຮຸ້ນ ໃນຕະຫຼາດຫຼັກຊັບລາວເພື່ອເພີ່ມທຶນຈົດທະບຽນ. ທະນາຄານໄດ້ຮັບໃບທະບຽນວິສາຫະກິດທະນາຄານສະບັບໃໝ່ ເລກທີ 21/ທຫລ, ລົງວັນທີ 13 ກັນຍາ 2017 ອອກໂດຍ ທະນາຄານແຫ່ງ ສປປ ລາວ. ໃນວັນທີ 15 ກັນຍາ 2017, ຕະຫລາດຫລັກຊັບລາວໄດ້ຢັ້ງຢືນວ່າທະນາຄານໄດ້ເພີ່ມທຶນຈົດທະບຽນ ຈໍານວນ 355.728.500.000 ກີບ (ເທົ່າກັບ 71.145.700 ຮຸ້ນ) ຕາມໃບຢັ້ງຢືນເລກທີ 01/ຕລຊລ, ລົງວັນທີ 15 ກັນຍາ 2017 ແລະ ໃບທະບຽນວິສາຫະກິດສະບັບປັບປຸງໃໝ່ ເລກທີ 0889 /ERO, ລົງວັນທີ 15 ກັນຍາ 2017 ອອກໂດຍ ກະຊວງອຸດສາຫະກໍາ ແລະ ການຄ້າ

ອີງຕາມການແຈ້ງການຂອງຄະນະກໍາມະການຄຸ້ມຄອງຫຼັກຊັບ, ໂຄງສ້າງການຖືຮຸ້ນຂອງທະນາຄານ ນະວັນທີ 31 ມີນາ 2018 ມີດັ່ງລຸ່ມນີ້:

| *ຜູ່ຖືຮຸ້ນ* | *ຈໍານວນຮຸ້ນ* | *%* |
|---|---:|---:|
| ລັດຖະບານ | 145.406.321 | 70% |
| ຄູ່ຮ່ວມຮຸ້ນທາງຍຸດທະສາດ | 20.772.359 | 10% |
| ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ) ແລະ ນັກລົງທຶນຕ່າງປະເທດ | 41.544.620 | 20% |
| | **207.723.300** | 100% |

## 1. ຂໍ້ມູນກ່ຽວກັບທະນາຄານ (ຕໍ່)

ກິດຈະກຳຫລັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການລວມທັງ ການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກອົງກອນ ແລະ ບຸກຄົນ; ເງິນກູ້ໄລຍະສັ້ນ, ກາງ, ແລະ ຍາວ ໃຫ້ແກ່ອົງກອນ ແລະ ບຸກຄົນ ອີງຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ການບໍລິການການຄ້າລະຫວ່າງປະເທດ, ສ່ວນຫລຸດຂອງເອກະສານທາງດ້ານການຄ້າ, ພັນທະບັດ ແລະ ເອກະສານທີ່ມີຄຸນຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

***ທຶນຈົດທະບຽນ***

ທຶນຈົດທະບຽນ ນະວັນທີ 31 ມີນາ 2018 ແມ່ນ 1.038.617 ລ້ານກີບ. (ນະວັນທີ 31 ທັນວາ 2017: 1.038.617 ລ້ານກີບ).

***ທີ່ຕັ້ງ ແລະ ເຄືອຂ່າຍ***

ສຳນັກງານໃຫຍ່ຂອງທະນາຄານຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ໃນວັນທີ 31 ມີນາ 2018 ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ໜຶ່ງ (1) ບໍລິສັດໃນເຄືອ, ສີ່ (4) ບໍລິສັດຮ່ວມທຶນ, ສິບເກົ້າ (19) ສາຂາຫລັກ, ແປດສິບຫົກ (86) ໜ່ວຍບໍລິການ ແລະ ສິບຫົກ (16) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

***ບໍລິສັດໃນເຄືອ***

ນະວັນທີ 31 ມີນາ 2018, ທະນາຄານມີ ໜຶ່ງ (01) ບໍລິສັດໃນເຄືອຄື:

| *ຊື່* | *ໃບທະບຽນວິສາຫະກິດ* | *ຂະແໜງການ* | *% ຮຸ້ນຂອງ ທະນາຄານ* |
|---|---|---|---|
| ບໍລິສັດຫລັກຊັບ ທຄຕລ-ກຊທ ຈຳກັດ | ເລກທີ 180 -10 ລົງວັນທີ 14 ທັນວາ 2010 ໂດຍ ກົມ ສົ່ງເສີມການລົງທຶນ ຂອງກະຊວງ ແຜນການ ແລະ ການລົງທຶນ ຂອງ ສປປ ລາວ. | ຫລັກຊັບ | 70% |

***ບໍລິສັດຮ່ວມທຶນ***

ນະວັນທີ 31 ມີນາ 2018, ທະນາຄານມີ ສີ່ (04) ບໍລິສັດຮ່ວມທຶນຄື:

| *ຊື່* | *ໃບທະບຽນວິສາຫະກິດ* | *ຂະແໜງການ* | *% ຮຸ້ນຂອງ ທະນາຄານ* |
|---|---|---|---|
| ທະນາຄານຮ່ວມທຸລະກິດ ລາວ-ຫວຽດ | ເລກທີ 732/ERO ລົງວັນທີ 29 ສິງຫາ 2016 ໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ | ການທະນາຄານ & ການເງິນ | 25% |
| ທະນາຄານລາວ-ຝຣັ່ງ | ເລກທີ 121-09/ຜທ ລົງວັນທີ 26 ສິງຫາ 2009 ໂດຍ ກະຊວງ ແຜນການ ແລະ ການລົງທຶນ ຂອງ ສປປ ລາວ | ການທະນາຄານ & ການເງິນ | 46% |
| ບໍລິສັດປະກັນໄພ ລາວ-ຫວຽດ | 0600 ລົງວັນທີ 16 ສິງຫາ 2013 ໂດຍ ກະຊວງ ອຸດສະຫະກຳ ແລະ ການຄ້າ. | ປະກັນໄພ | 35% |
| ທະນາຄານ ລາວ-ຈີນ ຈຳກັດ | ເລກທີ 041/ERM ລົງວັນທີ 27 ມັງກອນ 2014 ໂດຍ ພະແນກທະບຽນວິສາຫະກິດ ຂອງ ສປປ ລາວ. | ການທະນຄານ & ການເງິນ | 49% |

## 1. ຂໍ້ມູນກ່ຽວກັບທະນາຄານ (ຕໍ່)

### *ສະພາບໍລິຫານ*

ສະມາຊິກສະພາບໍລິຫານຂອງທະນາຄານ ສຳລັບໄລຍະສາມເດືອນ ສິ້ນສຸດວັນທີ 31 ມີນາ 2018 ແລະ ນະວັນທີທີ່ອອກເອກະສານລາຍງານສະບັບນີ້ປະກອບມີ:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ ບຸນເຫຼືອ ສິນໄຊວໍລະວົງ | ປະທານ | 9 ເມສາ 2015 |
| ທ່ານ ຄຳສຸກ ສູນດາລາ | ຮອງປະທານ | 9 ເມສາ 2015 |
| ທ່ານ ພູຊົງ ຈັນທະຈັກ | ສະມາຊິກ | 9 ເມສາ 2015 |
| ທ່ານ ພັນຊະນະ ຄູນນຸວົງ | ສະມາຊິກ | 9 ເມສາ 2015 |
| ທ່ານ ນ. ຂັນທະລີ ວົງໄຊຍະລາດ | ສະມາຊິກ | 9 ເມສາ 2015 |
| ທ່ານ ມາກ ໂຣເບີດ | ສະມາຊິກ | 9 ເມສາ 2015 |
| ທ່ານ ວຽງໄຊ ຈັນທະວິສຸກ | ສະມາຊິກ | 9 ເມສາ 2015 |

### *ຄະນະອຳນວຍການ*

ສະມາຊິກຄະນະອຳນວຍການຂອງທະນາຄານ ສຳລັບໄລຍະສາມເດືອນ ສິ້ນສຸດວັນທີ 31 ມີນາ 2018 ແລະ ນະວັນທີທີ່ອອກເອກະສານລາຍງານນີ້ປະກອບມີ:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ/ລາອອກ* |
|---|---|---|
| ທ່ານ ພູຊົງ ຈັນທະຈັກ | ຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງ ວັນທີ 15 ມັງກອນ 2016 |
| ທ່ານ ພັນຊະນະ ຄູນນຸວົງ | ຮອງຜູ້ອຳນວຍການ | ແຕ່ງຕັ້ງ ວັນທີ 06 ມິຖຸນາ 2008 |
| ທ່ານ ລາໃຈ ຄັນພຣະວົງສ໌ | ຮອງຜູ້ອຳນວຍການ | ແຕ່ງຕັ້ງ ວັນທີ 30 ກັນຍາ 2014 |
| ທ່ານ ບັນທະລາດ ແກ້ວປະເສີດ | ຮອງຜູ້ອຳນວຍການ | ແຕ່ງຕັ້ງ ວັນທີ 30 ກັນຍາ 2014 |
| ທ່ານ ຄຳຊ່ຽນ ມິ່ງບຸບຜາ | ຮອງຜູ້ອຳນວຍການ | ແຕ່ງຕັ້ງ ວັນທີ 23 ພະຈິກ 2015 |
| ທ່ານ ສຸພັກ ຖິ່ນໄຊພອນ | ຮອງຜູ້ອຳນວຍການ | ແຕ່ງຕັ້ງ ວັນທີ 23 ພະຈິກ 2015 |
| ທ່ານ ບົວວັນ ສີມະລີວົງ | ຮອງຜູ້ອຳນວຍການ | ແຕ່ງຕັ້ງ ວັນທີ 1 ພະຈິກ 2016 |

### *ພະນັກງານ*

ພະນັກງານ ທັງໝົດຂອງທະນາຄານ ນະວັນທີ 31 ມີນາ 2018 ແມ່ນ 1.750 ຄົນ (31 ທັນວາ 2017: 1.686 ຄົນ).

## 2. ພື້ນຖານໃນການກຽມ

ທະນາຄານສ້າງເອກະສານລາຍງານການເງິນສະເພາະກິດຈະການແມ່ນໄດ້ຮັບການກະກຽມໂດຍອີງຕາມພື້ນຖານຕົ້ນທຶນເດີມ, ເວັ້ນແຕ່ໄດ້ເປີດເຜີຍຢູ່ໃນບົດອະທິບາຍຊ້ອນທ້າຍເລກທີໃດໜຶ່ງຂອງເອກະສານລາຍງານການເງິນສະບັບນີ້.

ທະນາຄານຮັກສາການບັນທຶກບັນຊີເປັນເງິນກີບ ("ກີບ") ເຊິ່ງເປັນສະກຸນ ເງິນຫລັກຂອງທະນາຄານ ແລະ ໄດ້ສ້າງເອກະສານລາຍງານການເງິນສະເພາະກິດຈະການເປັນຫົວໜ່ວຍລ້ານກີບ. ທະນາຄານນໍາໃຊ້ເຄື່ອງໝາຍຈຸດ (,) ທີ່ເປັນເລກທົດສະນິຍົມ ແລະ ນໍາໃຊ້ເຄື່ອງໝາຍຈໍ້າ (.) ເພື່ອແຍກຫົວໜ່ວຍພັນ.

ເອກະສານລາຍງານການເງິນສະເພາະກິດຈະການ ໄດ້ຖືກກະກຽມເພື່ອຈຸດປະສົງໃນການນໍາສະເໜີຖານະການເງິນສະເພາະກິດຈະການຂອງທະນາຄານ, ລວມທັງ ຜົນການດໍາເນີນງານ ແລະ ກະແສເງິນສົດສະເພາະກິດຈະການ ຂອງທະນາຄານ, ເວົ້າສະເພາະແມ່ນເພື່ອ:

- ເອກະສານລາຍງານການເງິນສະເພາະກິດຈະການສະບັບນີ້ແມ່ນລວມເອົາແຕ່ສະເພາະການດໍາເນີນງານຂອງ ສໍານັກງານໃຫຍ່ ແລະ ສາຂາຂອງທະນາຄານເທົ່ານັ້ນ;
- ການລົງທຶນໃນບໍລິສັດໃນເຄືອ ແລະ ບໍລິສັດຮ່ວມທຶນໄດ້ຖືກບັນທຶກບັນຊີ ອີງຕາມວິທີຕົ້ນທຶນ.

***ຈຸດປະສົງຂອງການກະກຽມເອກະສານລາຍງານທາງການເງິນສະເພາະກິດຈະການ***

ທະນາຄານໄດ້ກະກຽມ ແລະ ອອກເອກະສານລາຍງານທາງການເງິນສະເພາະກິດຈະການອີງຕາມມາດຕະຖານສາກົນດ້ານການລາຍງານການເງິນ. ນອກຈາກນັ້ນ ທະນາຄານຍັງໄດ້ກະກຽມ ແລະ ອອກເອກະສານລາຍງານການເງິນລວມກິດຈະການສໍາລັບໄລຍະສາມເດືອນ ທີ່ສິ້ນສຸດວັນທີ 31 ມີນາ 2018.

ຜູ້ນໍາໃຊ້ເອກະສານລາຍງານການເງິນສະເພາະກິດຈະການຄວນອ່ານພ້ອມກັບເອກະສານລາຍງານການເງິນລວມກິດຈະການຂອງທະນາຄານ ແລະ ບໍລິສັດໃນເຄືອ ສໍາລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 31 ມີນາ 2018 ເພື່ອໄດ້ຮັບຂໍ້ມູນຄົບຖ້ວນກ່ຽວກັບຖານະການເງິນລວມກິດຈະການ, ຜົນການດໍາເນີນງານລວມກິດຈະການ ແລະ ກະແສເງິນລວມກິດຈະການຂອງທະນາຄານ ແລະ ບໍລິສັດໃນເຄືອ.

ປີການບັນຊີຂອງທະນາຄານແມ່ນເລີ່ມຕົ້ນແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດ 31 ທັນວາ.

## 3. ຄໍາຖະແຫຼງການ

ເອກະສານລາຍງານການເງິນສະເພາະກິດຈະການຂອງທະນາຄານ ຖືກກະກຽມໂດຍສອດຄ່ອງກັບມາດຕະຖານສາກົນດ້ານການລາຍງານການເງິນ (“IFRS”).

## 4. ການນໍາສະເໜີເອກະສານລາຍງານການເງິນສະເພາະກິດຈະການ

ທາງທະນາຄານໄດ້ນໍາສະເໜີໃບລາຍງານຖານະການເງິນ ໂດຍລຽງລໍາດັບຕາມສະພາບຄ່ອງ. ຊັບສິນ ແລະ ໜີ້ສິນທາງການເງິນ ແມ່ນໄດ້ຖືກລາຍງານເປັນມູນຄ່າລວມໃນໃບລາຍງານຖານະການເງິນສະເພາະກິດຈະການ. ຊັບສິນ ແລະ ໜີ້ສິນທາງການເງິນ ຈະຖືກນໍາມາຫັກລ້າງກັນ ແລະ ລາຍງານເປັນມູນຄ່າສຸດທິ ໃນເວລາທີ່ ບັນດາພາກສ່ວນທີ່ມີສ່ວນກ່ຽວຂ້ອງຫາກມີຄວາມຕ້ອງການຢາກຫັກລ້າງ ໃນທຸກໆກໍລະນີຂ້າງລຸ່ມນີ້:

- ການດໍາເນີທຸລະກິດປົກກະຕິ
- ໃນກໍລະນີທີ່ທຸລະກິດມີການກະທໍາຄວາມຜິດ
- ໃນກໍລະນີຂອງການລົ້ມລະລາຍ ຫຼື ການລົ້ມລະລາຍຂອງທະນາຄານແລະ/ຫຼື ຄູ່ຄ້າຂອງຕົນ.

## 5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

### *5.1 ການແລກປ່ຽນເງິນຕ່າງປະເທດ*

ການເຮັດທຸລະກຳທີ່ເປັນເງິນຕາຕ່າງປະເທດແມ່ນ ຖືກບັນທຶກ ແລະ ແລກປ່ຽນເປັນສະກຸນເງິນກີບ ໂດຍນຳໃຊ້ອັດຕາແລກປ່ຽນນະວັນທີທີ່ເຮັດທຸລະກຳ. ຊັບສິນ ແລະ ໜີ້ສິນທີ່ເປັນສະກຸນເງິນຕ່າງປະເທດ ແມ່ນຈະໄດ້ ຖືກແລກປ່ຽນຄືນເປັນເງິນກີບ ໂດຍໃຊ້ອັດຕາແລກປ່ຽນນະວັນທີສ້າງບົດລາຍງານ (ເບິ່ງລາຍລະອຽດອັດຕາແລກປ່ຽນຂອງສະກຸນເງິນຕາຕ່າງປະເທດທີ່ໃຊ້ໃນການແລກປ່ຽນເປັນເງິນກີບ ນະວັນທີ 31 ມີນາ 2018 ແລະ 31 ທັນວາ 2017 ໃນເອກະສານຊ້ອນທ້າຍເລກທີ 40). ສ່ວນຜິດດ່ຽງທີ່ເກີດຂຶ້ນຈາກການຕີມູນຄ່າຊັບສິນ ແລະ ໜີ້ສິນ ໃນມື້ສ້າງບົດລາຍງານແມ່ນຖືກບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການ.

### *5.2 ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ*

#### *5.2.1 ວັນທີຂອງການຮັບຮູ້*

ຊັບສິນ ແລະ ໜີ້ສິນທາງການເງິນທັງໝົດ, ຍົກເວັ້ນເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ ແລະ ໜີ້ຕ້ອງສົ່ງລູກຄ້າ, ຖືກຮັບຮູ້ເບື້ອງຕົ້ນໃນມື້ທີ່ຖືກຊື້ - ຂາຍ ເຊັ່ນ ມື້ທີ່ທະນາຄານກາຍເປັນພາກສ່ວນໜຶ່ງໃນພັນທະສັນຍາຂອງເຄື່ອງມືທາງການເງິນ. ນີ້ລວມທັງ "ວິທີການຄ້າປົກກະຕິ" - ການຊື້ ຫຼື ການຂາຍຂອງຊັບສິນທາງການເງິນ ທີ່ຮຽກຮ້ອງໃຫ້ມີການນຳສົ່ງຕາມກຳນົດເວລາທີ່ໄດ້ຖືກກຳນົດໂດຍກົດໝາຍ ຫຼື ລະບຽບການເງິນໃນສະຖານທີ່ຊື້ຂາຍ. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ ແມ່ນຖືກຮັບຮູ້ໃນເມື່ອເງິນໄດ້ໂອນເຂົ້າບັນຊີ ຂອງລູກຄ້າຮຽບຮ້ອຍແລ້ວ. ທະນາຄານຮັບຮູ້ໜີ້ຕ້ອງສົ່ງລູກຄ້າເມື່ອທະນາຄານໄດ້ຮັບເງິນຈາກລູກຄ້າເປັນທີ່ຮຽບຮ້ອຍແລ້ວ.

#### *5.2.2 ການຕີມູນຄ່າເບື້ອງຕົ້ນຂອງເຄື່ອງມືທາງການເງິນ*

ການຈັດປະເພດເຄື່ອງມືທາງການເງິນຕາມການຮັບຮູ້ມູນຄ່າເບື້ອງຕົ້ນ ແມ່ນຂຶ້ນກັບລັກສະນະຂອງເຄື່ອງມືທາງການເງິນ ແລະ ຈຸດປະສົງຂອງຄະນະບໍລິຫານຕໍ່ເຄື່ອງມືທາງການເງິນທີ່ຕ້ອງການ. ເຄື່ອງມືທາງການເງິນທັງໝົດແມ່ນຖືກຕີມູນຄ່າໃນເບື້ອງຕົ້ນຕາມມູນຄ່າຍຸດຕິທຳບວກກັບລາຍຈ່າຍທີ່ເກີດຈາກການຊື້, ຍົກເວັ້ນໃນກໍລະນີຂອງຊັບສິນ ແລະ ໜີ້ສິນທາງການເງິນທີ່ມູນຄ່າຍຸດຕິທຳຖືກບັນທຶກໂດຍຜ່ານກຳໄລ ແລະ ຂາດທຶນ.

#### *5.2.3 ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ*

ອັດຕາດອກເບ້ຍທີ່ແທ້ຈິງ (EIR) ແມ່ນອັດຕາສ່ວນຫຼຸດຕົວຈິງທີ່ໄດ້ຈາກການຄາດຄະເນການຊຳລະເງິນສົດໃນອະນາຄົດ ຫຼື ລາຍຮັບຕາມອາຍຸການທີ່ໄດ້ຄາດຄະເນຂອງເຄື່ອງມືການເງິນ ຫຼື ໄລຍະສັ້ນກວ່າທີ່ຍອມຮັບໄດ້ຂອງ ຍອດຍົກມາສຸດທິຂອງຊັບສິນ ຫຼື ໜີ້ສິນທາງການເງິນ. ຄ່າເສື່ອມຕົ້ນທຶນຂອງຊັບສິນ ຫຼື ໜີ້ສິນທາງການເງິນແມ່ນຖືກດັດແກ້ ເມື່ອທະນາຄານໄດ້ແກ້ໄຂການຄາດຄະເນລາຍຮັບ ຫຼື ລາຍຈ່າຍຂອງທະນາຄານ ໂດຍຖືກຄິດໄລ່ໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງ ແລະ ສ່ວນຜິດດ່ຽງຂອງ ມູນຄ່າດັ່ງກ່າວຈະຖືກບັນທຶກເປັນ ‘ດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືດອກເບ້ຍ’ ສຳລັບຊັບສິນທາງການເງິນ ແລະ ‘ດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືດອກເບ້ຍ’ ສຳລັບໜີ້ສິນທາງການເງິນ. ນະໂຍບາຍການບັນຊີສຳລັບວິທີ EIR ແມ່ນມີຄວາມແຕກຕ່າງຕາມແຕ່ລະປະເພດຂອງການນຳໃຊ້ເຄື່ອງມື ເຊິ່ງໄດ້ອະທິບາຍເພີ່ມເຕີມເອກະສານຊ້ອນທ້າຍເລກທີ:

- 5.2.6 ສຳລັບ ‘ການລົງທຶນທີ່ຖືໄວ້ຈົນຄົບກຳນົດ’
- 5.2.7 ສຳລັບ ‘ຕ້ອງຮັບຈາກທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ’
- 5.2.8 ສຳລັບ ‘ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ແຫຼ່ງທຶນກູ້ຢືມອື່ນ’
- 5.4 ສຳລັບ ‘ການເສື່ອມມູນຄ່າຂອງຊັບສິນທາງການເງິນ’
- 5.8 ສຳລັບ ‘ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ’

## 5. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ (ຕໍ່)

### *5.2 ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ* (ຕໍ່)

### *5.2.4 ມື້ທີ 1 ກໍາໄລ ຫຼື ຂາດທຶນ*

ເມື່ອລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ຕ່າງຈາກມູນຄ່າຍຸດຕິທໍາຂອງລາຄາຕາມທ້ອງຕະຫລາດໃນປັດຈຸບັນ ຂອງເຄື່ອງມືການເງິນອັນດຽວກັນ ຫຼື ອີງຕາມມູນຄ່າທີ່ໄດ້ສໍາຫຼວດໃນຕະຫລາດ, ທະນາຄານຮັບຮູ້ສ່ວນຜິດດ່ຽງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າຍຸດຕິທໍາ ('ມື້ທີ 1' ກໍາໄລ ຫຼື ຂາດທຶນ) ໃນ "ລາຍຮັບສຸດທິຈາກການຄ້າ". ໃນກໍລະນີທີ່ມູນຄ່າຍຸດຕິທໍາຖືກໍານົດຕາມຖານຂໍ້ມູນທີ່ບໍ່ໄດ້ຖືກສໍາຫຼວດ, ສ່ວນຜິດດ່ຽງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າທີ່ໄດ້ຈາກນໍາໃຊ້ເຕັກນິກການຕີມູນຄ່າດັ່ງກ່າວ ແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນການດໍາເນີນງານກໍ່ຕໍ່ເມື່ອຂໍ້ມູນສາມາດຊອກຫາໄດ້ ຫຼື ເມື່ອເຄື່ອງມືການເງິນບໍ່ຖືກຮັບຮູ້.

### *5.2.5 ການລົງທຶນໃນຫຼັກຊັບປະເພດມີໄວ້ເພື່ອຂາຍ*

ການລົງທຶນໃນຫຼັກຊັບປະເພດມີໄວ້ເພື່ອຂາຍ ປະກອບມີ ຫຼັກຊັບທຶນ. ຫຼັກຊັບທຶນຈະຖືກຈັດປະເພດເປັນຫຼັກຊັບປະເພດມີໄວ້ເພື່ອຂາຍ ຖ້າໃນກໍລະນີທີ່ຫຼັກຊັບດັ່ງກ່າວ ບໍ່ໄດ້ຖືກຈັດເປັນປະເພດຫຼັກຊັບມີໄວ້ເພື່ອການຄ້າ ຫຼື ຫຼັກຊັບທີ່ບັນທຶກມູນຄ່າຍຸດຕິທໍາ ໂດຍຜ່ານ ກໍາໄລ ແລະ ຂາດທຶນ.

ທະນາຄານຍັງບໍ່ໄດ້ຮັບຮູ້ບັນດາເງິນກູ້ ຫຼື ໜີ້ຕ້ອງຮັບເປັນການລົງທຶນການເງິນມີໄວ້ເພື່ອຂາຍ.

ຫລັງຈາກການຕີມູນຄ່າໃນເບື້ອງຕົ້ນ, ການລົງທຶນທາງການເງິນມີໄວ້ເພື່ອຂາຍ ໄດ້ຖືກຕີມູນຄ່າເປັນມູນຄ່າຍຸດຕິທໍາ.

ກໍາໄລ ຫຼື ຂາດທຶນທີ່ບໍ່ເກີດຂຶ້ນຈິງ ແມ່ນຖືກຮັບຮູ້ໂດຍກົງໃນປະເພດທຶນ (ໃນໃບລາຍງານຜົນການດໍາເນີນງານນອກການທຸລະກິດ) ເປັນ "ເງິນແຮສໍາລັບຫລັກຊັບມີໄວ້ເພື່ອຂາຍ". ເມື່ອການລົງທຶນດັ່ງກ່າວໝົດກໍານົດ, ກໍາໄລ ຫຼື ຂາດທຶນສະສົມກ່ອນໜ້ານີ້ ຈະຖືກຮັບຮູ້ໃນໃບລາຍງານຜົນການດໍາເນີນງານສະເພາະກິດຈະການ ວ່າແມ່ນ "ລາຍຮັບອື່ນໆຈາກການດໍາເນີນງານ" ເມື່ອທະນາຄານລົງທຶນຫລາຍກວ່າໜຶ່ງລາຍການໂດຍນໍາໃຊ້ຫລັກຊັບຄໍ້າປະກັນດຽວກັນ, ມັນຈະຖືກສະສາງອອກຕາມຫລັກການເຂົ້າກ່ອນ-ອອກກ່ອນ. ເງິນປັນຜົນທີ່ຫາມາໄດ້ໃນຊ່ວງໄລຍະການຖືຊັບສິນການເງິນມີໄວ້ເພື່ອຂາຍ ຖືກຮັບຮູ້ໃນໃບລາຍງານຜົນການດໍາເນີນງານສະເພາະການກິດຈະການ ວ່າເປັນ "ລາຍຮັບອື່ນໆຈາກການດໍາເນີນງານອື່ນໆ" ເມື່ອສິດຂອງການໄດ້ຮັບເງິນປັນຜົນຂອງທະນາຄານ ຖືກສ້າງຂຶ້ນ. ເມື່ອການຂາດທຶນເພີ່ມຂຶ້ນເນື່ອງຈາກການເສື່ອມມູນຄ່າຂອງການລົງທຶນດັ່ງກ່າວນັ້ນ ຈະຖືກຮັບຮູ້ໃນໃບລາຍງານຜົນການດໍາເນີນງານສະເພາະກິດຈະການ ວ່າເປັນການຫັກຄ່າເສື່ອມການລົງທຶນທາງການເງິນ" ໂດຍປ່ຽນຈາກເງິນແຮສໍາລັບຫລັກຊັບມີໄວ້ເພື່ອຂາຍ.

**5. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ** (ຕໍ່)

*5.2 ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ* (ຕໍ່)

*5.2.6 ການລົງທຶນທີ່ຖືໄວ້ຈົນຄົບກໍານົດ*

ການລົງທຶນທີ່ຖືໄວ້ຈົນຄົບກໍານົດແມ່ນຊັບສິນທາງການເງິນທີ່ບໍ່ແມ່ນອະນຸພັນທາງການເງິນ ເຊິ່ງມີການກໍານົດໄວ້ຢ່າງຈະແຈ້ງ ຫຼື ສາມາດກໍານົດໄດ້ໄລຍະເວລາໃນການຊໍາລະ ແລະ ໄດ້ກໍານົດວັນຄົບກໍານົດໄວ້ແລ້ວ, ເຊິ່ງທະນາຄານມີຄວາມຕັ້ງໃຈ ແລະ ສາມາດຖືໄວ້ຈົນຄົບກໍານົດ. ພາຍຫລັງການຮັບຮູ້ມູນຄ່າເບື້ອງຕົ້ນ, ການລົງທຶນປະເພດຖືໄວ້ຈົນຄົບກໍານົດຈະຖືກບັນທຶກອີງຕາມຕົ້ນທຶນ ບວກໃຫ້ ລາຍຮັບ/ລາຍຈ່າຍດອກເບ້ຍຄ້າງຮັບ ໂດຍຄິດໄລ່ຕາມອັດຕາດອກເບ້ຍຕາມສັນຍາຕາມແບບວິທີຄົງຕົວ. ການລົງທຶນປະເພດຖືໄວ້ຈົນຄົບກໍານົດ ຈະຖືກປະເມີນຄ່າເສື່ອມເປັນແຕ່ລະໄລຍະ. ຈະມີການຫັກຄ່າເສື່ອມຂອງຫລັກຊັບປະເພດນີ້ ຖ້າຫາກມູນຄ່າຍຸດຕິທໍາມີການຫຼຸດລົງ ຫຼື ຫຼຸດລົງຕໍ່າກວ່າຕົ້ນທຶນຊື້ ຫຼື ໄລຍະເວລາຂອງການຫຼຸດລົງຂອງລາຄາມີລັກສະນະຍາວນານ. ຄ່າເສື່ອມທີ່ເກີດຈາກຫລັກຊັບແບບນີ້ຈະຖືກບັນທຶກໃນໃບລາຍງານຜົນການດໍາເນີນງານສະເພາະການກິດຈະການ ໃນພາກສ່ວນຂອງລາຍຈ່າຍຈາກຂາດທຶນສິນເຊື່ອ".

ຖ້າທະນາຄານຕ້ອງການຂາຍ ຫຼື ຈັດປະເພດການລົງທຶນທີ່ຖືໄວ້ຈົນຄົບກໍານົດໃໝ່ກ່ອນມື້ຄົບກໍານົດ (ນອກເໜືອຈາກມີເຫດການໃດໜຶ່ງສະເພາະ), ລາຍການຄັງຫລັກຊັບທີ່ຖືກຈັດເປັນປະເພດ ຖືໄວ້ຈົນຄົບກໍານົດທັງໝົດຈະຖືກປ່ຽນແປງ ແລະ ຈະຕ້ອງຖືກຈັດປະເພດຄືນໃໝ່ເປັນ ຫລັກຊັບມີໄວ້ເພື່ອຂາຍ. ນອກຈາກນີ້, ທະນາຄານຈະຖືກຫ້າມບໍ່ໃຫ້ຈັດປະເພດຊັບສິນການເງິນໃດໆໃຫ້ເປັນຊັບສິນການເງິນທີ່ຖືໄວ້ຈົນຄົບພາຍໃນ 2 ປີ.

*5.2.7 ໜີ້ຕ້ອງຮັບຈາກທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ*

'ໜີ້ຕ້ອງຮັບຈາກທະນາຄານອື່ນ' ແລະ 'ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ', ລວມມີຊັບສິນການເງິນທີ່ບໍ່ແມ່ນອະນຸພັນທີ່ມີໄລຍະເວລາ ຫຼື ສາມາດກໍານົດໄລຍະເວລາການຊໍາລະທີ່ແນ່ນອນ ເຊິ່ງລາຄາຊັບສິນເຫຼົ່ານັ້ນບໍ່ໄດ້ມີການຊື້-ຂາຍໃນຕະຫຼາດ, ນອກເໜືອຈາກ:

- ► ທະນາຄານມີຄວາມຕັ້ງໃຈທີ່ຈະຂາຍທັນທີ ຫຼື ທະນາຄານສາມາດຂາຍໄດ້ໃນໄລຍະສັ້ນ ແລະ ນັ້ນກໍ່ຂຶ້ນຢູ່ກັບການຮັບຮູ້ເບື້ອງຕົ້ນ, ກໍານົດຕາມມູນຄ່າຍຸດຕິທໍາຜ່ານກໍາໄລ ຫຼື ຂາດທຶນ;
- ► ທະນາຄານຮັບຮູ້ມູນຄ່າເບື້ອງຕົ້ນ ແລະ ກໍານົດມູນຄ່າຂາຍ;
- ► ທະນາຄານອາດຈະບໍ່ໄດ້ກໍາໄລຈາກການລົງທຶນທັງໝົດ ເນື່ອງຈາກການເສື່ອມຄ່າຂອງຊັບສິນ.

ຫຼັງຈາກການປະເມີນເບື້ອງຕົ້ນ, ເງິນຝາກກັບທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ ຈະຖືກບັນທຶກລົງບັນຊີນໍາໃຊ້ ອັດຕາດອກເບ້ຍທີ່ແທ້ຈິງ (ອັດຕາດອກເບ້ຍທີ່ແທ້ຈິງ "EIR") ລົບໃຫ້ລາຍຈ່າຍຄ່າເສື່ອມ. ຄ່າເສື່ອມຖືກຄິດໄລ່ໂດຍຄໍານຶງເຖິງສ່ວນຫຼຸດຂອງຊັບສິນທີ່ໄດ້ມາ ແລະ ຄ່າທໍານຽມ ແລະ ຕົ້ນທຶນທີ່ເປັນ ສ່ວນໜຶ່ງຂອງອັດຕາດອກເບ້ຍຕົວຈິງ. ເພາະສະນັ້ນ, ທະນະຄານໄດ້ຮັບຮູ້ລາຍຮັບດອກເບ້ຍໂດຍການນໍາໃຊ້ອັດຕາຜົນຕອບແທນເຊິ່ງເປັນອັດຕາການຄາດຄະເນທີ່ດີທີ່ສຸດຂອງອັດຕາຜົນຕອບແທນຄົງທີ່ຕາມອາຍຸເງິນກູ້, ດັ່ງນັ້ນ, ຈຶ່ງມີການຮັບຮູ້ຜົນກະທົບຂອງອັດຕາດອກເບ້ຍທີ່ແຕກຕ່າງກັນໃນການຄິດໄລ່ຄ່າທໍານຽມໃນໄລຍະຕ່າງໆ ແລະ ລັກສະນະອື່ນໆຂອງວົງຈອນຊີວິດຜະລິດຕະພັນ (ການຈ່າຍລ່ວງໜ້າ, ດອກເບ້ຍ ແລະ ຄ່າບໍລິການ).

**5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

*5.2 ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ* (ຕໍ່)

*5.2.7 ໜີ້ຕ້ອງຮັບຈາກທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ* (ຕໍ່)

ຖ້າຫາກວ່າການຄາດຄະເນມີການປັບປຸງແກ້ໄຂ, ຈະຕ້ອງມີການບັນທຶກການດັດແກ້ເພີ່ມຂຶ້ນ ຫຼື ຫຼຸດລົງ ຂອງມູນຄ່າໃນໃບລາຍງານຖານະການເງິນ ອີງຕາມການເພີ່ມຂຶ້ນ ຫຼື ຫຼຸດລົງຂອງລາຍຮັບດອກເບ້ຍ. ຫຼັງຈາກນັ້ນ, ມູນຄ່າດັດແກ້ດັ່ງກ່າວຈະຖືກຄິດໄລ່ຄ່າເສື່ອມ ແລະ ຖືກບັນທຶກເປັນດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືດອກເບ້ຍໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການ.

ທະນາຄານອາດຈະອອກຂໍ້ຜູກພັນເງິນກູ້ເມື່ອເງິນກູ້ຖືກຖອນ, ເງິນກູ້ດັ່ງກ່າວນັ້ນຈະຖືກຈັດປະເພດເປັນການເຄື່ອນໄຫວທີ່ມີໄວ້ເພື່ອຄ້າຂາຍເພາະວ່າຈຸດປະສົງແມ່ນຂາຍເງິນກູ້ໄລຍະສັ້ນ. ຂໍ້ຜູກພັນເຫລົ່ານີ້ຈະຖືກບັນທຶກ ແລະ ຖືກປະເມີນຕາມມູນຄ່າຍຸດຕິທຳຜ່ານກຳໄລ ຫຼື ຂາດທຶນ.

ເມື່ອເງິນກູ້ຖືກຖອນ, ກໍ່ຈະຖືກຮັກສາໂດຍ ທະນາຄານ ແລະ ຈະບໍ່ຂາຍໃນໄລຍະສັ້ນ, ຂໍ້ຜູກພັນຈະຖືກບັນທຶກເມື່ອສັນຍາໄດ້ຖືກເຮັດຂຶ້ນ ແລະ ມີແນວໂນ້ມບົ່ງບອກວ່າການຂາດທຶນຈະເພີ່ມຂຶ້ນ (ຕົວຢ່າງ: ໜີ້ຕ້ອງສົ່ງໃຫ້ຄູ່ສັນຍາ).

*5.2.8 ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ແຫຼ່ງທຶນກູ້ຢືມອື່ນ*

"ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ" ປະກອບມີຂໍ້ຕົກລົງຕາມສັນຍາທີ່ສົ່ງຜົນເຮັດໃຫ້ທະນາຄານມີພັນທະທີ່ ຕ້ອງຈ່າຍເງິນສົດ ຫຼື ຊັບສິນການເງິນອື່ນໆໃຫ້ແກ່ເຈົ້າຂອງສັນຍາ.

ຫຼັງຈາກມີການປະເມີນເບື້ອງຕົ້ນ, 'ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ' ຈະຖືກປະເມີນອີງຕາມການຫັກມູນຄ່າເສື່ອມໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງ ('EIR'). ມູນຄ່າເສື່ອມຖືກຄິດໄລ່ໂດຍອີງຕາມສ່ວນຫລຸດ ແລະ ຄ່າທຳນຽມຂອງໜີ້ ແລະ ຕົ້ນທຶນທີ່ເປັນສ່ວນໜຶ່ງຂອງການຄິດໄລ່ອັດຕາດອກເບ້ຍຕົວຈິງ.

*5.2.9 ການຈັດປະເພດຊັບສິນການເງິນຄືນໃໝ່*

ເລີ່ມຈາກວັນທີ 1 ກໍລະກົດ 2008, ທະນາຄານໄດ້ຮັບອະນຸຍາດໃຫ້ຈັດປະເພດຄືນໃໝ່ສຳລັບບັນດາຊັບສິນທາງການເງິນ ທີ່ບໍ່ແນ່ນອນອອກຈາກ "ຊັບສິນທີ່ມີໄວ້ເພື່ອການຄ້າ" ໄປເປັນ "ຊັບສິນທີ່ມີໄວ້ເພື່ອຂາຍ", "ເງິນກູ້ ແລະ ໜີ້ຕ້ອງຮັບ", ຫຼື "ຊັບສິນທີ່ຖືໄວ້ຈົນຄົບກຳນົດ". ນັບຈາກວັນທີດັ່ງກ່າວ, ທະນາຄານຍັງໄດ້ຮັບອະນຸຍາດໃຫ້ຈັດປະເພດຄືນໃໝ່ ບັນດາເຄື່ອງມືການເງິນທີ່ ນອກເໜືອຈາກ "ເຄື່ອງມືການເງິນທີ່ມີໄວ້ເພື່ອຂາຍ" ໄປເປັນ "ເງິນກູ້ ແລະ ໜີ້ຕ້ອງຮັບ". ການຈັດປະເພດຄືນໃໝ່ຈະຖືກບັນທຶກດ້ວຍມູນຄ່າຍຸດຕິທຳໃນມື້ທີ່ຕີມູນຄ່າຄືນ, ເຊິ່ງມູນຄ່າດັ່ງກ່າວນັ້ນຈະກາຍເປັນມູນຄ່າຕົ້ນທຶນໃໝ່.

ສຳລັບຊັບສິນການເງິນທີ່ຖືກຈັດເປັນປະເພດອອກຈາກ "ຊັບສິນມີໄວ້ເພື່ອຂາຍ", ທຸກໆກຳໄລ ແລະ ຂາດທຶນທີ່ເກີດຈາກຊັບສິນດັ່ງກ່າວໃນໄລຍະຜ່ານມາທີ່ໄດ້ລົງບັນຊີເປັນທຶນເຈົ້າຂອງແມ່ນຖືກສະສາງໄປເປັນກຳໄລ ຫຼື ຂາດທຶນຈາກອາຍຸສັນຍາທີ່ຍັງເຫຼືອຂອງການລົງທຶນໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງ. ທຸກໆສ່ວນຜິດດ່ຽງລະຫວ່າງມູນຄ່າຕົ້ນທຶນໃໝ່ ແລະ ກະແສເງິນສົດທີ່ຄາດຄະເນໄວ້ແມ່ນຈະຖືກສະສາງອອກຕາມອາຍຸສັນຍາທີ່ຍັງເຫຼືອຂອງຊັບສິນໂດຍໃຊ້ອັດຕາດອກເບ້ຍຕົວຈິງ. ຖ້າຊັບສິນຖືກກຳນົດວ່າມີການເສື່ອມຄ່າມູນຄ່າທີ່ລົງບັນຊີເປັນທຶນເຈົ້າຂອງນັ້ນແມ່ນຈະຖືກນຳມາລາຍງານໃນໃບລາຍງານຜົນການເນີນງານສະເພາະກິດຈະການ.

## 5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *5.2 ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ* (ຕໍ່)

### *5.2.9 ການຈັດປະເພດຊັບສິນການເງິນຄືນໃໝ່* (ຕໍ່)

ໃນບາງກໍລະນີ ທະນາຄານອາດຈະຈັດປະເພດຊັບສິນການຄ້າທີ່ບໍ່ແມ່ນອານຸພັນອອກຈາກ "ຊັບສິນທີ່ມີໄວ້ເພື່ອການຄ້າ" ເປັນປະເພດ "ເງິນກູ້ ແລະ ໜີ້ຕ້ອງຮັບ" ຖ້າການເຄື່ອນໄຫວຂອງມັນສອດຄ່ອງກັບຄວາມໝາຍຂອງເງິນກູ້ ແລະ ໜີ້ຕ້ອງຮັບ ແລະ ທະນາຄານມີ ເຈດຈໍານົງໃດໜຶ່ງ ແລະ ສາມາດຄອບຄອງຊັບສິນທາງການເງິນ ສໍາລັບເປັນຊັບສິນທີ່ຍຶດໄດ້ໃນອະນາຄົດ ຫຼື ຄອບຄອງໄວ້ ຈົນຄົບກໍານົດ. ຖ້າຊັບສິນການເງິນຖືກຈັດປະເພດຄືນໃໝ່ ແລະ ຖ້າທະນາຄານໄດ້ຄາດຄະເນເງິນສົດທີ່ຈະໄດ້ຮັບໃນອະນາຄົດເພີ່ມໃນພາຍຫລັງເນື່ອງຈາກວ່າຄວາມສາມາດທີ່ຈະໄດ້ຮັບເງິນສົດດັ່ງກ່າວເພີ່ມຂຶ້ນ, ຜົນກະທົບຂອງການເພີ່ມຂຶ້ນນັ້ນ ແມ່ນໄດ້ບັນທຶກເປັນການດັດແກ້ ຕາມອັດຕາດອກເບ້ຍຕົວຈິງຈາກມື້ທີ່ການຄາດຄະເນມີການປ່ຽນແປງ.

ການຈັດປະເພດຄືນໃໝ່ແມ່ນການເລືອກໂດຍຄະນະອໍານວຍການ ແລະ ຖືກກໍານົດເປັນເຄື່ອງມືໂດຍພື້ນຖານເຄື່ອງມື.

### *5.3 ການຫັກລ້າງຊັບສິນ ແລະ ໜີ້ສິນທາງການເງິນ*

### *5.3.1 ຊັບສິນທາງການເງິນ*

ຊັບສິນທາງການເງິນ (ຫຼື, ສ່ວນໜຶ່ງຂອງຊັບສິນການເງິນ ຫຼື ສ່ວນໜຶ່ງຂອງກຸ່ມຊັບສິນການເງິນທີ່ຄ້າຍຄືກັນ) ຈະຖືກຢຸດຮັບຮູ້ເປັນຊັບສິນ ກໍ່ຕໍ່ເມື່ອສິດທິທີ່ຈະໄດ້ຮັບກະແສເງິນສົດຈາກຊັບສິນທີ່ໄດ້ຫມົດອາຍຸແລ້ວ. ນອກຈາກນີ້, ທະນາຄານຍັງຢຸດຮັບຮູ້ເປັນຊັບສິນ ໃນກໍລະນີທີ່ຊັບສິນດັ່ງກ່າວຖືກໂອນ ແລະ ການໂອນດັ່ງກ່າວສອດຄ່ອງກັບເງື່ອນໄຂການຢຸດຮັບຮູ້.

ທະນາຄານຖືວ່າໄດ້ໂອນຊັບສິນຖ້າຫາກວ່າ:

- ທະນາຄານໄດ້ໂອນກໍາມະສິດທັງໝົດໃນການຮັບກະແສເງິນສົດຈາກຊັບສິນ ຫຼື
- ການຮັກສາສິດທິໃນການຮັບກະແສເງິນສົດ ແຕ່ຕ້ອງມີພັນທະຜູກພັນທີ່ຈະຕ້ອງຈ່າຍກະແສເງິນສົດທີ່ຈະໄດ້ຮັບທັງໝົດໃນອານາຄົດໂດຍທັນທີໃຫ້ພາກສ່ວນທີສາມພາຍໃຕ້ຮູບແບບ 'ການຕິດພັນ'.

ການຕິດພັນເປັນການເຮັດທຸລະກໍາຜ່ານທະນາຄານຖືເປັນລາຍການທີ່ເກີດຂຶ້ນ ເມື່ອທະນາຄານຖືສິດຕາມສັນຍາເພື່ອຮັບກະແສເງິນສົດຂອງຊັບສິນທາງການເງິນ (ຊັບສິນເດີມ), ແຕ່ຖືເປັນພາລະຜູກພັນຕາມສັນຍາທີ່ຈະຕ້ອງຈ່າຍຊໍາລະເງິນສົດໃຫ້ແກ່ກິດຈະການຢ່າງໜ້ອຍໜຶ່ງແຫ່ງ (ຜູ້ຮັບສຸດທ້າຍ), ເມື່ອມີການປະຕິບັດຕາມເງື່ອນໄຂທັງສາມຂໍ້ດັ່ງຕໍ່ໄປນີ້. ນະວັນທີ 31 ມີນາ 2018 ທະນາຄານບໍ່ມີຊັບສິນທາງການເງິນພາຍໃຕ້ຮູບແບບດັ່ງກ່າວ.

ການໂອນຈະສອດຄ່ອງກັບເງື່ອນໄຂການຢຸດຮັບຮູ້ ກໍ່ຕໍ່ເມື່ອ:

- ທະນາຄານໄດ້ໂອນຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນດັ່ງກ່າວ ຫຼື
- ທະນາຄານບໍ່ໄດ້ໂອນຄວາມສ່ຽງ ແລະ ຮັກສາຄວາມສ່ຽງທັງໝົດໄວ້ ແລະ ຜົນຕອບແທນຂອງຊັບສິນ ທັງໝົດ, ແຕ່ໄດ້ໂອນການຄວບຄຸມຊັບສິນດັ່ງກ່າວແລ້ວ

**5. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ** (ຕໍ່)

*5.3 ການຫັກລ້າງຊັບສິນ ແລະ ໜີ້ສິນທາງການເງິນ* (ຕໍ່)

*5.3.1 ຊັບສິນທາງການເງິນ* (ຕໍ່)

ອີງຕາມຂໍ້ມູນຂ້າງເທິງ, ທະນາຄານຈະພິຈາລະນາວ່າການຄວບຄຸມ ຈະຖືກໂອນຖ້າຫາກຜູ້ຮັບໂອນມີຄວາມສາມາດໃນການຂາຍຊັບສິນໃຫ້ແກ່ບຸກຄົນທີສາມທີ່ບໍ່ກ່ຽວຂ້ອງກັນ ແລະ ສາມາດໃຊ້ຄວາມສາມາດດັ່ງກ່າວໄດ້ພຽງຝ່າຍດຽວ ແລະ ບໍ່ມີຂໍ້ຈໍາກັດໃດໆກ່ຽວກັບການໂອນ.

ເມື່ອທະນາຄານໄດ້ໂອນສິດໃນການຮັບເງິນສົດຈາກຊັບສິນການເງິນ ຫຼື ໄດ້ເຂົ້າຮ່ວມໃນຮູບແບບການຕິດພັນ, ແລະ ບໍ່ໄດ້ໂອນ ຫຼື ຍັງຄົງຮັກສາຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນ ຫຼືໄດ້ໂອນສິດໃນການຄວບຄຸມຊັບສິນ, ຊັບສິນຈະຖືກຮັບຮູ້ໃນເວລາທີ່ທະນາຄານຍັງມີສ່ວນກ່ຽວຂ້ອງກັບຊັບສິນນັ້ນໆ. ໃນກໍລະນີນີ້ທະນາຄານຍັງຮັບຮູ້ເປັນໜີ້ສິນໃນເຄືອ, ຊັບສິນທີ່ຖືກໂອນ ແລະ ໜີ້ສິນທີ່ຕິດພັນແມ່ນ ຖືກປະເມີນບົນພື້ນຖານທີ່ວ່າມັນຈະສົ່ງຜົນກະທົບຕໍ່ສິດ ແລະ ພັນທະຂອງທະນາຄານທີ່ມີຢູ່.

ການສືບຕໍ່ຂອງຮູບແບບຂອງການຄໍ້າປະກັນຕໍ່ຊັບສິນທີ່ໄດ້ໂອນ ແມ່ນຖືກຕີມູນຄ່າໃນລະດັບຕໍ່າກວ່າມູນຄ່າເດີມຂອງຊັບສິນ ແລະ ມູນຄ່າສູງສຸດຂອງການພິຈາລະນາວ່າ ທະນາຄານມີຄວາມສາມາດໃນການຊໍາລະໜີ້.

ນອກຈາກນີ້ທະນາຄານຍັງຢຸດຮັບຮູ້ບັນດາຊັບສິນທາງການເງິນໂດຍສະເພາະການໃຫ້ກູ້ຢືມແກ່ລູກຄ້າ ເມື່ອເງື່ອນໄຂ ແລະ ຂໍ້ຕົກລົງສ່ວນໃຫຍ່ໄດ້ມີການເຈລະຈາກັນໃໝ່ ແລະ ຖືກພິຈາລະນາເປັນກູ້ຢືມໃໝ່, ສ່ວນຜິດດ່ຽງຈະຖືກບັນທຶກເປັນຄ່າເສື່ອມໃນໃບລາຍງານຜົນການດໍາເນີນງານສະເພາະກິດຈະການ.

*5.3.2 ໜີ້ສິນທາງການເງິນ*

ໜີ້ສິນທາງການເງິນຈະຖືກຢຸດຮັບຮູ້ໃນບັນຊີເມື່ອພັນທະຕໍ່ກັບໜີ້ສິນດັ່ງກ່າວໄດ້ສິ້ນສຸດ ຫຼື ໄດ້ມີການຍົກເລີກ ຫຼື ໝົດອາຍຸ. ເມື່ອໜີ້ສິນການເງິນທີ່ມີຢູ່ຖືກແທນທີ່ ດ້ວຍໜີ້ສິນອື່ນໆຈາກເຈົ້າໜີ້ຜູ້ເກົ່າໃນເງື່ອນໄຂທີ່ແຕກຕ່າງກັນ, ຫຼື ປັບປຸງເງື່ອນໄຂຂອງໜີ້ສິນທີ່ມີຢູ່ ເຊັ່ນ: ການປ່ຽນແປງ ຫຼື ການປັບປຸງຖືກປະຕິບັດເຊັ່ນດຽວກັບການສະສາງບັນຊີໜີ້ສິນເດີມອອກ ແລະ ຮັບຮູ້ໜີ້ສິນໃໝ່, ແລະ ສ່ວນຜິດດ່ຽງ ຂອງຍອດຍົກມາຈະຖືກລາຍງານໃນໃບລາຍງານຜົນການດໍາເນີນງານ ແລະ ການພິຈາລະນາທີ່ໄດ້ຈ່າຍຈະຖືກຮັບຮູ້ໃນໃບລາຍງານຜົນການດໍາເນີນງານ.

*5.4 ການເສື່ອມມູນຄ່າຂອງຊັບສິນທາງການເງິນ*

ທະນາຄານປະເມີນໃນມື້ເຮັດໃບລາຍງາຍຖານະການເງິນວ່າມີຫລັກຖານຊັດເຈນທີ່ສະແດງໃຫ້ເຫັນວ່າຊັບສິນການເງິນ ຫຼື ກຸ່ມຂອງຊັບ ສິນການເງິນມີການເສື່ອມມູນຄ່າ ຫຼື ບໍ່. ຊັບສິນການເງິນ ຫຼື ກຸ່ມຂອງຊັບສິນການເງິນຈະຖືວ່າມີຄວາມເສຍຫາຍຖ້າພຽງແຕ່ວ່າມີ ຫລັກຖານຊັດເຈນຂອງຄວາມເສຍຫາຍຈາກຜົນຂອງໜຶ່ງ ຫຼື ຫລາຍເຫດການທີ່ປະກົດຂຶ້ນຫລັງຈາກ ມີການຮັບຮູ້ຊັບສິນ (ເກີດມີ "ເຫດການເສຍຫາຍ") ແລະ ເຫດການເສຍຫາຍໜຶ່ງ (ຫຼື ຫລາຍເຫດການ) ໄດ້ສົ່ງຜົນກະທົບ ເຖິງການຄາດຄະເນກະແສເງິນສົດໃນອະນາຄົດ ຂອງຊັບສິນການເງິນ ຫຼື ກຸ່ມຂອງຊັບສິນການເງິນທີ່ສາມາດຄາດຄະເນໄດ້ຢ່າງໜ້າເຊື່ອຖື.

ຫລັກຖານຂອງການເສື່ອມມູນຄ່າອາດລວມມີ: ຕົວຊີ້ວັດວ່າຜູ່ກູ້ຢືມ ຫຼື ກຸ່ມຂອງຜູ່ກູ້ຢືມແມ່ນມີຄວາມຫຍຸ້ງຍາກທາງດ້ານການເງິນ, ການຜິດສັນຍາ ຫຼື ບໍ່ສາມາດຊໍາລະຕົ້ນທຶນ ແລະ ດອກເບ້ຍ, ມີຄວາມເປັນໄປໄດ້ວ່າ ພວກເຂົາຈະລົ້ມລະລາຍ ຫຼື ການປັບປຸງລະບົບ ການເງິນຄືນໃໝ່ ແລະ ຂໍ້ມູນອື່ນໆທີ່ສະແດງໃຫ້ເຫັນວ່າກະແສເງິນສົດທີ່ຖືກປະເມີນໃນອະນາຄົດ ຫລຸດລົງ ເຊັ່ນ: ການປ່ຽນແປງໜີ້ ເກີນກໍານົດ ຫຼື ເງື່ອນໄຂດ້ານເສດຖະກິດທີ່ກ່ຽວຂ້ອງກັບການຜິດສັນຍາ.

**5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

*5.4 ການຫັກລ້າງຊັບສິນ ແລະ ໜີ້ສິນທາງການເງິນ*

*5.4.1 ຊັບສິນທາງການເງິນທີ່ຮັບຮູ້ຕາມມູນຄ່າຫັດຈຳໜ່າຍ*

*ການຂາດທຶນຈາກການເສື່ອມມູນຄ່າ*

ສຳລັບຊັບສິນທາງການເງິນທີ່ບັນທຶກຕາມມູນຄ່າສຸດທິຫລັງຫັກຄ່າເສື່ອມມູນຄ່າ (ເຊັ່ນ: ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ການກູ້ຢືມອື່ນໆ), ທະນາຄານຈະປະເມີນຫຼັກຖານຂອງການເສື່ອມມູນຄ່າຂອງຊັບສິນທາງການເງິນວ່າມີຫລັກຖານການເສື່ອມຄ່າຂອງຊັບສິນການເງິນນັ້ນສຳຄັນ ຫຼື ບໍ່ເພື່ອພິຈາລະນາສະເພາະໂດຍຜູ້ບໍລິຫານ.

ຖ້າຫາກມີຫລັກຖານວ່າຄ່າເສື່ອມເກີດຂຶ້ນ, ຈຳນວນຄ່າເສື່ອມຈະຖືກຕີມູນຄ່າເປັນສ່ວນຕ່າງລະຫວ່າງຍອດຍົກມາຂອງຊັບສິນ ແລະ ຍອດເຫຼືອປະຈຸບັນຂອງກະແສເງິນສົດໃນອະນາຄົດ (ບໍ່ລວມເອົາຄ່າເສື່ອມທີ່ອາດຈະເກີດຂຶ້ນ ໃນອະນາຄົດ). ຍອດຍົກມາຂອງຊັບສິນແມ່ນຫລຸດລົງ ຍ້ອນນຳໃຊ້ບັນຊີຄ່າເສື່ອມ ແລະ ຈຳນວນຄ່າເສື່ອມທີ່ລາຍງານໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການ. ລາຍຮັບດອກເບ້ຍຈະຖືກສືບຕໍ່ຄິດໄລ່ຕາມຍອດຍົກມາທີ່ຫລຸດລົງ ແລະ ຖືກຄິດໄລ່ໂດຍນຳໃຊ້ອັດຕາດອກເບ້ຍກະແສເງິນສົດໃນອະນາຄົດ ເພື່ອປະເມີນຄ່າເສື່ອມ. ລາຍຮັບດອກເບ້ຍຖືກລົງບັນຊີໃນ "ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ".

ເງິນກູ້ພ້ອມກັບລາຍຈ່າຍທີ່ຕິດພັນຈະຖືກສະສາງອອກ ເມື່ອທະນາຄານໄດ້ພິຈາລະນາວ່າຈະບໍ່ສາມາດເກັບໜີ້ໄດ້ ແລະ ເມື່ອຫລັກຊັບຄ້ຳປະກັນຖືກໂອນໃຫ້ທະນາຄານ. ຖ້າໃນປີຕໍ່ມາ, ຄ່າເສື່ອມໜີ້ເສຍຈະເພີ່ມຂຶ້ນ ຫຼື ຫລຸດລົງຍ້ອນວ່າມີເຫດການເກີດຂຶ້ນຫລັງຈາກໄດ້ ຫັກຄ່າເສື່ອມ, ຄ່າເສື່ອມໜີ້ເສຍທີ່ຖືກຫັກໄວ້ກ່ອນໜ້ານີ້ຈະເພີ່ມຂຶ້ນ ຫຼື ຫລຸດລົງໂດຍການດັດແກ້ໃນບັນຊີລາຍຈ່າຍ, ຖ້າໃນອະນາຄົດຈະສາມາດເກັບຄືນໄດ້ ມູນຄ່າທີ່ເກັບຄືນໄດ້ນັ້ນຈະຖືກລົງບັນຊີເບື້ອງມີໃນ "ລາຍຮັບ".

ມູນຄ່າປະຈຸບັນຂອງກະແສເງິນສົດໃນອະນາຄົດທີ່ຄາດຄະເນໄວ້ ແມ່ນມູນຄ່າໃນປະຈຸບັນຕາມອັດຕາດອກເບ້ຍຕົວຈິງຂອງຊັບສິນການເງິນ. ຖ້າເງິນກູ້ມີອັດຕາດອກເບ້ຍທີ່ຜັນແປ, ອັດຕາສ່ວນຫລຸດສຳລັບການຕີມູນຄ່າຂອງ ຄ່າເສື່ອມມູນຄ່າແມ່ນອັດຕາດອກເບ້ຍຕົວຈິງໃນປະຈຸບັນ. ຖ້າທະນາຄານໄດ້ຈັດປະເພດຊັບສິນການຄ້າເປັນເງິນກູ້ ແລະ ເງິນລ່ວງໜ້າ, ອັດຕາສ່ວນຫລຸດສຳລັບຄິດໄລ່ຄ່າເສື່ອມແມ່ນ ຕ້ອງນຳໃຊ້ອັດຕາດອກເບ້ຍຕົວຈິງໃນປະຈຸບັນ.

ການຄິດໄລ່ມູນຄ່າປະຈຸບັນຂອງກະແສເງິນສົດໃນອະນາຄົດ ທີ່ຄາດຄະເນໄວ້ຂອງຫລັກຊັບຄ້ຳປະກັນ ມີຜົນກະທົບຕໍ່ກະແສເງິນສົດ ຊຶ່ງອາດເປັນຜົນມາຈາກຫລັກຊັບຄ້ຳປະກັນທີ່ຍຶດມາໄດ້ລົບໃຫ້ຕົ້ນທຶນຂອງຫລັກຊັບຄ້ຳປະກັນທີ່ໄດ້ຮັບ ແລະ ຂາຍບໍ່ວ່າການຍຶດຫລັກຊັບຈະເປັນໄປໄດ້ ຫຼື ບໍ່ກໍ່ຕາມ.

*ຮູບແບບການເສື່ອມມູນຄ່າເປັນກຸ່ມ*

ເພື່ອຈຸດປະສົງໃນການປະເມີນຄ່າເສື່ອມເປັນກຸ່ມ, ຊັບສິນການເງິນແມ່ນຖືກຈັດເປັນກຸ່ມ ຕາມລັກສະນະຄວາມສ່ຽງທີ່ຄ້າຍຄືກັນ ຊຶ່ງເປັນຕົວຊີ້ວັດຄວາມສາມາດຂອງລູກໜີ້ໃນການຈ່າຍເງິນຈຳນວນທັງໝົດອີງຕາມເງື່ອນໄຂໃນສັນຍາ (ຕົວຢ່າງເຊັ່ນ, ອີງຕາມພື້ນຖານຂອງການປະເມີນຜົນຄວາມສ່ຽງການປ່ອຍສິນເຊື່ອ ຫຼື ການໃຫ້ຄະແນນໂດຍພິຈາລະນາຈາກ ປະເພດຊັບສິນ, ປະເພດອຸດສາຫະກຳ, ສະຖານທີ່ຕັ້ງພູມສາດ, ປະເພດຂອງຫຼັກຊັບຄ້ຳປະກັນ, ສະຖານະພາບທີ່ຜ່ານມາ ແລະ ປັດໄຈອື່ນໆທີ່ກ່ຽວຂ້ອງ).

## 5. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ (ຕໍ່)

### *5.4 ການເສື່ອມມູນຄ່າຂອງຊັບສິນທາງການເງິນ* (ຕໍ່)

### *5.4.1 ການຖືຄອງຊັບສິນທາງການເງິນຈົນຮອດມື້ຈັດຈໍາໜ່າຍ* (ຕໍ່)

*ຮູບແບບການເສື່ອມມູນຄ່າເປັນກຸ່ມ* (ຕໍ່)

ກະແສເງິນສົດໃນອານາຄົດຂອງກຸ່ມຊັບສິນການເງິນທີ່ມີການຫັກຄ່າເສື່ອມມູນຄ່າເປັນກຸ່ມ ແມ່ນຖືກຄາດຄະເນບົນພື້ນຖານການເສື່ອມຄ່າຜ່ານມາຂອງຊັບສິນທີ່ມີລັກສະນະຄວາມສ່ຽງສິນເຊື່ອທີ່ຄ້າຍຄືກັນໃນກຸ່ມ. ການເສື່ອມຄ່າຜ່ານມາຖືກດັດແກ້ ບົນພື້ນຖານຂໍ້ມູນທີ່ມີໃນປະຈຸບັນ ເພື່ອສ່ອງແສງເຖິງຜົນກະທົບຂອງເງື່ອນໄຂໃນປະຈຸບັນ ເຊິ່ງການເສື່ອມຄ່າຜ່ານມາແມ່ນ ເປັນບ່ອນອີງ ແລະ ເພື່ອຍ້າຍຜົນກະທົບຂອງເງື່ອນໄຂໃນໄລຍະຜ່ານມາ ທີ່ບໍ່ສົ່ງຜົນກະທົບໃນປະຈຸບັນ.

ການຄາດຄະເນການປ່ຽນແປງທີ່ສ່ອງແສງເຖິງກະແສເງິນສົດໃນອະນາຄົດ ແລະ ເປັນໄປໃນທາງດຽວກັນກັບ ການປ່ຽນແປງຂອງຂໍ້ມູນທີ່ສັງເກດໄດ້ຈາກປີຕໍ່ປີ (ເຊັ່ນການປ່ຽນແປງອັດຕາການວ່າງງານ, ລາຄາຊັບສິນ, ລາຄາສິນຄ້າ, ເງື່ອນໄຂການຊໍາລະ, ຫຼື ປັດໄຈອື່ນໆທີ່ບົ່ງບອກເຖິງການຂາດທຶນໃນກຸ່ມ ແລະ ຄວາມສໍາຄັນຂອງການຂາດທຶນ). ວິທີການ ແລະ ຂໍ້ສົມມຸດຖານທີ່ນໍາໃຊ້ໃນການຄາດຄະເນກະແສເງິນສົດໃນອະນາຄົດ ໄດ້ທົບທວນຄືນຢ່າງເປັນປົກກະຕິ ເພື່ອຫລຸດສ່ວນຜິດດ່ຽງລະຫວ່າງຂາດທຶນທີ່ຄາດຄະເນ ແລະ ຂາດທຶນຕົວຈິງ.

### *5.4.2 ການເສື່ອມມູນຄ່າຂອງການລົງທຶນທາງການເງິນມີໄວ້ເພື່ອຂາຍ*

ທະນາຄານຍັງໄດ້ບັນທຶກຄ່າເສື່ອມມູນຄ່າຕໍ່ການລົງທຶນທີ່ມີໄວ້ເພື່ອຂາຍ ເມື່ອເກີດການຫຼຸດລົງທີ່ສໍາຄັນ ຫຼື ການຫຼຸດລົງ ໃນມູນຄ່າຍຸດຕິທໍາທີ່ຕໍ່າກວ່າຕົ້ນທຶນ ຂໍ້ກໍານົດທີ່ “ສໍາຄັນ” ຫຼື “ຍາວນານ” ຕ້ອງຖືກພິຈາລະນາ, ການພິຈາລະນາດັ່ງກ່າວນີ້ ທະນາຄານປະເມີນລະຫວ່າງຫຼາຍປັດໄຈ ແລະ ການເໜັງຕີງຂອງລາຄາຮຸ້ນ ແລະ ໄລຍະເວລາ ແລະ ກໍານົດຂອບເຂດຂອງມູນຄ່າຍຸດຕິທໍາທີ່ຕໍ່າກວ່າຕົ້ນທຶນ.

### *5.4.3 ການປະເມີນມູນຄ່າຫຼັກຊັບຄໍ້າປະກັນ*

ທະນາຄານຊອກຫາວິທີທີ່ຈະນໍາໃຊ້ຫລັກຊັບຄໍ້າປະກັນ, ຖ້າເປັນໄປໄດ້, ເພື່ອຫລຸດຜ່ອນຄວາມສ່ຽງຂອງຊັບສິນການເງິນ. ຫລັກຊັບຄໍ້າປະກັນອາດເປັນໄດ້ຫລາຍຮູບແບບ ເຊັ່ນ: ເງິນສົດ, ຫລັກຊັບ, ໜັງສືສິນເຊື່ອ/ໜັງສືຄໍ້າປະກັນ, ອະສັງຫາລິມະຊັບ, ໜີ້ຕ້ອງຮັບ, ເຄື່ອງໃນສາງ, ຊັບສິນທີ່ບໍ່ແມ່ນການເງິນອື່ນໆ ແລະ ການຍົກລະດັບສິນເຊື່ອ ເຊັ່ນ ຂໍ້ຕົກລົງທີ່ຮັດກຸມ. ໂດຍທົ່ວໄປ , ມູນຄ່າຍຸດຕິທໍາຂອງຫລັກຊັບຄໍ້າປະກັນແມ່ນຖືກປະເມີນໃນມູນຄ່າຕໍ່າສຸດໃນມື້ເລີ່ມຕົ້ນ ແລະ ກໍານົດເວລາການລາຍງານປະຈໍາປີຂອງທະນາຄານ.

ເພື່ອກໍານົດຂອບເຂດທີ່ຄວນເປັນໄປໄດ້ ທະນາຄານໄດ້ນໍາໃຊ້ຂໍ້ມູນຕາມທ້ອງຕະຫລາດສໍາລັບປະເມີນຊັບສິນການເງິນ ທີ່ໃຊ້ເປັນຫລັກຊັບຄໍ້າປະກັນ. ຊັບສິນການເງິນອື່ນໆທີ່ຍັງບໍ່ສາມາດກໍານົດມູນຄ່າຕາມທ້ອງຕະຫລາດ ຈະຖືກປະເມີນໂດຍໃຊ້ຮູບແບບການປະເມີນ. ຫລັກຊັບຄໍ້າປະກັນທີ່ບໍ່ແມ່ນທາງການເງິນເຊັ່ນ: ອະສັງຫາລິມະຊັບ ຈະຖືກປະເມີນຕາມຂໍ້ມູນທີ່ໄດ້ຈາກພາກສ່ວນພາຍນອກເຊັ່ນ: ນາຍໜ້າ, ດັດສະນີລາຄາທີ່ພັກອາໄສ, ບົດລາຍງານການເງິນທີ່ຖືກກວດສອບແລ້ວ ແລະ ແຫລ່ງຂໍ້ມູນທີ່ໜ້າເຊື່ອຖືອື່ນໆ.

## 5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *5.4 ການເສື່ອມມູນຄ່າຂອງຊັບສິນທາງການເງິນ* (ຕໍ່)

#### *5.4.4 ຫຼັກຊັບຄ້ຳປະກັນທີ່ຖືກຍຶດ*

ນະໂຍບາຍທະນາຄານແມ່ນກຳນົດວ່າຊັບສິນທີ່ຍຶດມາ ສາມາດນຳໃຊ້ເຂົ້າໃນການດຳເນີນກິດຈະການພາຍໃນຂອງທະນາຄານ ຫຼື ຖອນຈະຂາຍ. ຊັບສິນທີ່ເປັນປະໂຫຍດສຳລັບການດຳເນີນງານພາຍໃນຈະຖືກໂອນເຂົ້າໄປເປັນຊັບສິນຕາມແຕ່ລະປະເພດທີ່ກ່ຽວຂ້ອງ ເຊິ່ງຈະຖືກຕີມູນຄ່າຫຼຸດລົງຈາກມູນຄ່າທີ່ຍຶດມາ ຫຼື ຍອດຍົກມາຂອງຊັບສິນທີ່ຖືກຄ້ຳປະກັນ. ຊັບສິນທີ່ຖືກກຳນົດວ່າຈະຂາຍອອກຈະຖືກໂອນເປັນຊັບສິນມີໄວ້ສຳລັບຂາຍ ແລະ ຖືກຕີມູນຄ່າຕາມມູນຄ່າຕົວຈິງນະມື້ທີ່ຍຶດຊັບສິນໂດຍສອດ ຄ່ອງກັບນະໂຍບາຍຂອງທະນາຄານ.

### *5.5 ການຫັກລ້າງເຄື່ອງມືທາງການເງິນ*

ຊັບສິນ ແລະ ໜີ້ສິນທາງການເງິນແມ່ນຖືກຫັກລ້າງກັນ ແລະ ມູນຄ່າສຸດທິຈະຖືກລາຍງານໃນໃບລາຍງານຖານະການເງິນ, ຖ້າຫາກວ່າ ທະນາຄານຖືກບັງຄັບທາງກົດໝາຍໃຫ້ສະສາງຈຳນວນເງິນດັ່ງກ່າວນັ້ນ ແລະ ທະນາຄານຕັ້ງໃຈຈະສະສາງໃນມູນຄ່າສຸດທິ ຫຼື ຂາຍຊັບສິນເພື່ອຊຳລະໜີ້ສິນໃນເວລາດຽວກັນ. ນີ້ບໍ່ແມ່ນກໍລະນີທົ່ວໄປໃນຂໍ້ຕົກລົງວ່າດ້ວຍການຫັກລ້າງລະຫວ່າງ ຊັບສິນ - ໜີ້ສິນ ແລະ ຊັບສິນ - ໜີ້ສິນ ທີ່ກ່ຽວຂ້ອງໄດ້ຖືກສະແດງມູນຄ່າລວມໃນໃບລາຍງານຖານະການເງິນສະເພາະກິດຈະການ.

### *5.6 ການລົງທຶນໃນບໍລິສັດລູກ*

ການລົງທຶນຢູ່ບໍລິສັດລູກຂອງທະນາຄານແມ່ນຖືກລົງບັນຊີເປັນຕົ້ນທຶນ. ສ່ວນແບ່ງກຳໄລສະສົມບໍລິສັດລູກເກີດຂຶ້ນພາຍຫຼັງວັນທີລົງທຶນແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການ. ຜົນໄດ້ຮັບອື່ນໆນອກຈາກກຳໄລແມ່ນຜົນຕອບແທນຈາກການລົງທຶນ ແລະ ຫັກລົບຕົ້ນທຶນຂອງການລົງທຶນ.

ການຫັກຄ່າເສື່ອມສ້າງຂຶ້ນເພື່ອການລົງທຶນໃນບໍລິສັດລູກ ເມື່ອບໍລິສັດລູກມີການຂາດທຶນ (ຍົກເວັ້ນສຳລັບການຂາດທຶນທີ່ຖືກລະບຸຢູ່ໃນແຜນທຸລະກິດກ່ອນການສ້າງຕັ້ງ). ດັ່ງນັ້ນ, ການຫັກຄ່າເສື່ອມຈຶ່ງຖືກສ້າງຂຶ້ນສຳລັບສ່ວນຕ່າງລະຫວ່າງ ການລົງທຶນຕົວຈິງຢູ່ບໍລິສັດລູກ ແລະ ຮຸ້ນສ່ວນຂອງທະນາຄານຢູ່ບໍລິສັດລູກ.

### *5.7 ການລົງທຶນໃນບໍລິສັດຮ່ວມທຶນ*

ການລົງທຶນໃນບໍລິສັດຮ່ວມທຶນຂອງທະນາຄານແມ່ນຖືກລົງບັນຊີເປັນຕົ້ນທຶນ. ສ່ວນແບ່ງກຳໄລສະສົມຂອງບໍລິສັດຮ່ວມທຶນ ເກີດຂຶ້ນພາຍຫຼັງວັນທີລົງທຶນ ແມ່ນຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບສະເພາະກິດຈະການ. ຜົນໄດ້ຮັບອື່ນໆນອກຈາກກຳໄລ ແມ່ນຜົນຕອບແທນຈາກການລົງທຶນ ແລະ ຫັກອອກຈາກຕົ້ນທຶນຂອງການລົງທຶນ.

ການຫັກຄ່າເສື່ອມສ້າງຂຶ້ນເພື່ອການລົງທຶນໃນບໍລິສັດຮ່ວມທຶນເມື່ອວິສາຫະກິດເກີດມີການຂາດທຶນ (ຍົກເວັ້ນ ການຂາດທຶນທີ່ໄດ້ລະບຸໄວ້ໃນແຜນທຸລະກິດກ່ອນການສ້າງຕັ້ງ). ດັ່ງນັ້ນ, ຄ່າເສື່ອມຈຶ່ງຖືກສ້າງຂຶ້ນສຳລັບສ່ວນຕ່າງ ລະຫວ່າງການລົງທຶນຕົວຈິງໃນບໍລິສັດຮ່ວມທຶນ ແລະ ຮຸ້ນສ່ວນໃນທຶນສຸດທິຂອງທະນາຄານໃນບໍລິສັດຮ່ວມທຶນ.

### *5.8 ການຮັບຮູ້ລາຍຮັບ ແລະ ຄ່າໃຊ້ຈ່າຍ*

ລາຍຮັບແມ່ນໄດ້ຖືກຮັບຮູ້ໃນຂອບເຂດຂອງຄວາມເປັນໄປໄດ້ທີ່ວ່າຜົນປະໂຫຍດໃນທາງເສດຖະກິດຈະໄຫຼເຂົ້າທະນາຄານ ແລະ ລາຍຮັບເຫຼົ່ານັ້ນຈະຖືກຕີມູນຄ່າຢ່າງເຊື່ອຖືໄດ້. ຫລັກການການຮັບຮູ້ສະເພາະດັ່ງຕໍ່ໄປນີ້ຈະຕ້ອງຖືກປະເມີນກ່ອນລາຍຮັບຈະຖືກຮັບຮູ້.

## 5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *5.8 ການຮັບຮູ້ລາຍຮັບ ແລະ ຄ່າໃຊ້ຈ່າຍ* (ຕໍ່)

### *5.8.1 ດອກເບ້ຍ ແລະ ລາຍຮັບຄ້າຍຄືດອກເບ້ຍ ແລະ ລາຍຈ່າຍ*

ສຳລັບທຸກໆເຄື່ອງມືທາງການເງິນທີ່ຖືກຕີມູນຄ່າຕາມລາຄາຄ່າເສື່ອມຕົ້ນທຶນ ແລະ ຊັບສິນທາງການເງິນທີ່ມີດອກເບ້ຍ ໄດ້ຈັດປະເພດເປັນ ຊັບສິນທີ່ມີໄວ້ເພື່ອຂາຍ ແລະ ເຄື່ອງມືທາງການເງິນໄດ້ກຳນົດຕາມມູນຄ່າຍຸດຕິທຳ ໂດຍຜ່ານກຳໄລ ແລະ ຂາດທຶນ, ລາຍຮັບ ຫຼື ລາຍຈ່າຍດອກເບ້ຍ ແມ່ນຖືກບັນທຶກໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງ ເຊິ່ງແມ່ນອັດຕາສ່ວນຫຼຸດຕົວຈິງທີ່ໄດ້ຈາກການຄາດຄະເນການຊຳລະເງິນສົດໃນອະນາຄົດ ຫຼື ລາຍຮັບຕາມອາຍຸການທີ່ໄດ້ຄາດຄະເນຂອງເຄື່ອງມືການເງິນ ຫຼື ໄລຍະສັ້ນກວ່າທີ່ຍອມຮັບໄດ້ຂອງ ຍອດຍົກມາສຸດທິຂອງຊັບສິນ ຫຼື ໜີ້ສິນທາງການເງິນ. ການຄິດໄລ່ແມ່ນຄຳນຶງເຖິງທຸກໆຂໍ້ກຳນົດໃນສັນຍາຂອງເຄື່ອງມືການເງິນ (ເຊັ່ນວ່າ: ທາງເລືອກໃນການຊຳລະລ່ວງໜ້າ) ລວມທັງທຸກໆຄ່າທຳນຽມ ຫຼື ຄ່າໃຊ້ຈ່າຍບໍລິຫານທີ່ກ່ຽວພັນກັບເຄື່ອງມື ແລະ ຊຶ່ງເປັນສ່ວນປະກອບຂອງອັດຕາດອກເບ້ຍທີ່ແທ້ຈິງ, ແຕ່ບໍ່ແມ່ນຂາດທຶນສິນເຊື່ອໃນອະນາຄົດ.

ເມື່ອມູນຄ່າຕາມບັນຊີຂອງຊັບສິນທາງການເງິນ ຫຼື ກຸ່ມຂອງຊັບສິນທາງການເງິນທີ່ຄ້າຍຄືກັນຖືກຫຼຸດລົງໂດຍການຫັກຄ່າເສື່ອມມູນຄ່າ, ລາຍຮັບດອກເບ້ຍຈະຖືກຮັບຮູ້ໂດຍການນຳໃຊ້ອັດຕາດອກເບ້ຍທີ່ໃຊ້ໃນການຄິດໄລ່ກະແສເງິນສົດໃນອະນາຄົດສຳລັບ ເພື່ອຈຸດປະສົງຂອງການວັດຄ່າເສື່ອມ.

### *5.8.2 ລາຍຮັບຈາກຄ່າທຳນຽມ ແລະ ຄ່ານາຍໜ້າ*

ທະນາຄານມີລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ ຈາກການໃຫ້ບໍລິການຫລາຍຮູບແບບແກ່ລູກຄ້າ. ລາຍຮັບຈາກຄ່າທຳນຽມສາມາດແບ່ງເປັນສອງປະເພດຄືດັ່ງລຸ່ມນີ້:

*ລາຍຮັບຄ່າທຳນຽມຈາກການບໍລິການໃນໄລຍະເວລາໃດໜຶ່ງທີ່ແນ່ນອນ*

ຄ່າທຳນຽມທີ່ໄດ້ຈາກການບໍລິການໃນໄລຍະເວລາໃດໜຶ່ງ ແມ່ນເປັນລາຍຮັບຄ້າງຮັບສຳລັບໃນເວລານັ້ນໆ. ຄ່າທຳນຽມດັ່ງກ່າວລວມມີຄ່າບໍລິການ ແລະ ຄ່າຄຸ້ມຄອງຊັບສິນ, ຄ່າຮັກສາ ແລະ ຄ່າຄຸ້ມຄອງອື່ນໆ ແລະ ຄ່າໃຫ້ຄຳແນະນຳ.

*ລາຍຮັບຄ່າທຳນຽມທີ່ເປັນສ່ວນໜຶ່ງຂອງເຄື່ອງມືທາງການເງິນທີ່ກ່ຽວຂ້ອງ*

ຄ່າທຳນຽມທີ່ທະນາຄານພິຈາລະນາວ່າເປັນສ່ວນໜຶ່ງຂອງການນຳໃຊ້ເຄື່ອງມືທາງການເງິນທີ່ສອດຄ່ອງກັນໄດ້ແກ່: ຄ່າທຳນຽມການກູ້ຢືມເງິນໃນເບື້ອງຕົ້ນ, ຄ່າທຳນຽມສັນຍາການກູ້ຢືມເງິນສຳລັບເງິນກູ້ຢືມທີ່ມີແນວໂນ້ມທີ່ຈະໄດ້ຮັບການເບີກຖອນ ແລະ ຄ່າທຳນຽມສິນເຊື່ອອື່ນໆທີ່ກ່ຽວຂ້ອງ. ການຮັບຮູ້ຂອງຄ່າທຳນຽມເຫຼົ່ານີ້ (ລວມມີຄ່າໃຊ້ຈ່າຍບໍລິຫານ) ເປັນສ່ວນຫນຶ່ງຂອງການນຳໃຊ້ເຄື່ອງມືທາງການເງິນທີ່ສອດຄ່ອງກັນ ແລະ ຖືກຮັບຮູ້ເປັນລາຍຮັບດອກເບ້ຍໂດຍການນຳໃຊ້ອັດຕາ EIR (ທີ່ກຳນົດໄວ້ໃນຂໍ້ 5.2.3 ຂ້າງເທິງ). ໃນກໍລະນີທີ່ບໍ່ສາມາດເບີກໃຊ້ວົງເງິນກູ້ໄດ້ທັງໝົດ, ຄ່າທຳນຽມສັນຍາຈະຖືກຮັບຮູ້ເປັນລາຍຮັບໄດ້ເມື່ອໝົດອາຍຸພັນທະຜູກພັນທາງການເງິນ. ຄ່າທຳນຽມສັນຍາທີ່ຢູ່ພາຍໃນຂອບເຂດຂອງ IAS 39 (ຊຶ່ງກຳນົດເປັນ FVPL ຫຼື ຄິດອັດຕາດອກເບ້ຍໃນຕະຫຼາດທີ່ເປັນອັດຕາດອກເບ້ຍຕ່ຳກວ່າ ຫຼື ມີການຊຳລະຕາມບັນຊີສຸດທິ) ຖືກຮັບຮູ້ເປັນອະນຸພັນ ຕາມມູນຄ່າຍຸຕິທຳໂດຍຜ່ານການກຳໄລ ຫຼື ຂາດທຶນ.

**5. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ** (ຕໍ່)

*5.8.2 ລາຍຮັບຈາກຄ່າທໍານຽມ ແລະ ຄ່ານາຍໜ້າ* (ຕໍ່)

*ລາຍຮັບຄ່າທໍານຽມທີ່ເປັນສ່ວນໜຶ່ງຂອງເຄື່ອງມືທາງການເງິນທີ່ກ່ຽວຂ້ອງ* (ຕໍ່)

*ລາຍຮັບເງິນປັນຜົນ*

ລາຍຮັບເງິນປັນຜົນແມ່ນຖືກຮັບຮູ້ເມື່ອທະນາຄານຖືກປະກາດສິດໃນການຮັບການຊໍາລະ

*ລາຍຮັບສຸດທິຈາກການຄ້າ*

ເປັນຜົນທີ່ເກີດຂຶ້ນຈາກກິດຈະກໍາການຄ້າປະກອບດ້ວຍທຸກກໍາໄລ ແລະ ຂາດທຶນຈາກການປ່ຽນແປງໃນມູນຄ່າຍຸດຕິທໍາ ແລະ ລາຍຮັບ ແລະ ລາຍຈ່າຍທີ່ກ່ຽວຂ້ອງ ແລະ ເງິນປັນຜົນສໍາລັບຊັບສິນ ແລະ ໜີ້ສິນທາງການເງິນ 'ຖືໄວ້ເພື່ອການຄ້າ'. ນີ້ປະກອບມີການບໍ່ມີປະສິດທິພາບທີ່ໄດ້ບັນທຶກໃນການເຮັດທຸລະກໍາປ້ອງກັນຄວາມສ່ຽງ.

*5. 9 ເງິນສົດ ແລະ ທຽບເທົ່າເງິນສົດ*

ເງິນສົດ ແລະ ທຽບເທົ່າເງິນສົດດັ່ງທີ່ໄດ້ອ້າງອີງຢູ່ໃນໃບລາຍງານກະແສເງິນສົດປະກອບດ້ວຍເງິນສົດໃນກໍາມື, ເງິນຝາກກະແສລາຍວັນກັບທະນາຄານແຫ່ງ ສປປ ລາວ ແລະ ໜີ້ຕ້ອງຮັບຈາກທະນາຄານເຊິ່ງເປັນປະເພດກະແສລາຍວັນ, ກໍານົດ 3 ເດືອນ ຫຼື ຕໍ່າກວ່ານັ້ນ.

*5. 10 ຊັບສົມບັດ ແລະ ອຸປະກອນ*

ຊັບສົມບັດ ແລະ ອຸປະກອນ ແມ່ນໄດ້ລາຍງານ ຕາມຕົ້ນທຶນຂອງການບໍລິການມື້ຕໍ່ມື້ ລົບຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມສະສົມ. ການປ່ຽນແປງ ຂອງອາຍຸການນໍາໃຊ້ ແມ່ນໄດ້ລົງບັນຊີຕາມການປ່ຽນແປງຂອງໄລຍະການເສື່ອມຄ່າ ຫຼື ວິທີຫັກຄ່າເສື່ອມຕາມຄວາມເໝາະສົມ ແລະ ເຮັດໃຫ້ມີການປ່ຽນແປງຕາມການຄາດຄະເນທາງການບັນຊີ.

ຄ່າຫຼູ້ຍຫ້ຽນຖືກຄິດໄລ່ອີງຕາມພື້ນຖານການຄິດໄລ່ຄ່າຫຼູ້ຍຫ້ຽນແບບສະເໝີຕົວ ເພື່ອຫຼູດຕົ້ນທຶນຂອງຊັບສົມບັດ ແລະ ອຸປະກອນໃຫ້ຖືກຕາມມູນຄ່າທີ່ຍັງເຫຼືອຕົວຈິງຕາມອາຍຸການໃຊ້ງານ. ອາຍຸການນໍາໃຊ້ທີ່ໄດ້ຄາດຄະເນແມ່ນມີດັ່ງ ລຸ່ມນີ້:

| | |
|---|---|
| ອາຄານ ແລະ ການປັບປຸງ | 5% |
| ເຄື່ອງໃຊ້ຫ້ອງການ | 20% |
| ເຟີນິເຈີ ແລະ ຕິດຕັ້ງ | 20% |
| ພາຫະນະ | 20% |

ຊັບສົມບັດ ແລະ ອຸປະກອນຈະບໍ່ຖືກຮັບຮູ້ເມື່ອມີການສະສາງອອກ ຫຼື ເມື່ອເຫັນວ່າບໍ່ມີຜົນປະໂຫຍດຕໍ່ທຸລະກິດໃນອະນາຄົດຈາກການນໍາໃຊ້ຊັບສົມບັດ ແລະ ອຸປະກອນດັ່ງກ່າວ. ກໍາໄລ ຫຼື ຂາດທຶນທີ່ເກີດຈາກການສະສາງຊັບສົມບັດ (ຄິດໄລ່ໄດ້ລະຫວ່າງມູນຄ່າສະສາງອອກ ແລະ ມູນຄ່າຍັງເຫຼືອຂອງຊັບສົມບັດ) ແມ່ນຖືກຮັບຮູ້ເປັນ "ລາຍຮັບຈາກການດໍາເນີນງານອື່ນໆ" ໃນໃບລາຍງານຜົນການດໍາເນີນງານສະເພາະກິດຈະການຂອງປີທີ່ຊັບສົມບັດໄດ້ຖືກສະສາງອອກ.

### 5. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

*5.11 ຊັບສິນບັດຄົງທີ່ບໍ່ມີຕົວຕົນ*

ຊັບສິນບັດຄົງທີ່ບໍ່ມີຕົວຕົນຂອງທະນາຄານປະກອບດ້ວຍ ສິດນຳໃຊ້ທີ່ດິນ ແລະ ຊອບແວ.

ຊັບສິນບັດຄົງທີ່ບໍ່ມີຕົວຕົນຈະຖືກຮັບຮູ້ເມື່ອຕົ້ນທຶນຂອງຊັບສິນບັດຄົງທີ່ສາມາດປະເມີນໄດ້ຢ່າງແນ່ນອນ ແລະ ມັນຈະສາມາດສ້າງຜົນປະໂຫຍດໃຫ້ແກ່ທະນາຄານໃນອະນາຄົດ.

ຊັບສິນບັດຄົງທີ່ທະນາຄານຍຶດມາໄດ້ຈະຖືກປະເມີນມູນຄ່າຕົ້ນທຶນເບື້ອງຕົ້ນ. ຕົ້ນທຶນຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນທີ່ໄດ້ມາຈາກການລວມທຸລະກິດຈະຖືກຮັບຮູ້ຕາມມູນຄ່າຍຸດຕິທຳໃນມື້ທີ່ໄດ້ມາ. ຕໍ່ຈາກນັ້ນ, ຊັບສິນບັດຄົງທີ່ບໍ່ມີຕົວຕົນຈະຖືກຮັບຮູ້ໂດຍການເອົາຕົ້ນທຶນລົບໃຫ້ຄ່າເສື່ອມສະສົມ.

ອາຍຸການນຳໃຊ້ຂອງຊັບສິນທີ່ບໍ່ມີຕົວຕົນ ແມ່ນໄດ້ຖືກປະເມີນ ໂດຍຈັດເປັນ ມີກຳນົດ ແລະ ບໍ່ມີກຳນົດ. ຊັບສິນບັດຄົງທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ທີ່ມີກຳນົດແມ່ນຖືກຫັກຄ່າເສື່ອມຕາມອາຍຸການນຳໃຊ້. ໄລຍະຂອງການຫັກຄ່າເສື່ອມ ແລະ ວິທີການຫັກຄ່າເສື່ອມສຳລັບຊັບສິນທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ກຳນົດຈະຖືກທົບທວນຄືນເປັນຢ່າງນ້ອຍສຸດໃນທ້າຍປີການບັນຊີ. ການປ່ຽນແປງອາຍຸການນຳໃຊ້ຄາດຄະເນແມ່ນຈະໄດ້ລົງບັນຊີເປັນການປ່ຽນແປງໄລຍະ ແລະ ວິທີຂອງການຫັກຄ່າເສື່ອມ, ຕາມຄວາມເໝາະສົມ ແລະ ຖືເປັນການປ່ຽນແປງການຄາດຄະເນໃນບັນຊີ. ລາຍຈ່າຍກ່ຽວກັບການຫັກຄ່າເສື່ອມຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ທີ່ມີກຳນົດແມ່ນໄດ້ຖືຮັບຮູ້ໃນໃບລາຍງານຜົນການດຳເນີນງານສະເພາະກິດຈະການສຳລັບໄລຍະສາມເດືອນທີ່ສິ້ນສຸດວັນທີ 31 ມີນາ 2018ໃນໝວດຂອງລາຍຈ່າຍທີ່ພົວພັນກັບຊັບສິນທີ່ບໍ່ມີຕົວຕົນ.

ຄ່າເສື່ອມຖືກຄິດໄລ່ອີງຕາມພື້ນຖານການຄິດໄລ່ຄ່າເສື່ອມແບບສະເໝີຕົວເພື່ອຫຼຸດຕົ້ນທຶນຂອງຊັບສິນທີ່ບໍ່ມີຕົວຕົນໃຫ້ຖືກຕາມມູນຄ່າທີ່ຍັງເຫຼືອຕົວຈິງຕາມອາຍຸການໃຊ້ງານ. ອັດຕາຄາດຄະເນການຫັກຄ່າເສື່ອມມີດັ່ງນີ້:

| | |
|---|---|
| ► ຊອບແວ | 2 - 5 ປີ |

ສິດໃນການນຳໃຊ້ທີ່ດິນຂອງທະນາຄານແມ່ນບໍ່ມີຄ່າເສື່ອມ ເນື່ອງຈາກສິດໃນການນຳໃຊ້ທີ່ດິນແມ່ນມີອາຍຸການນຳໃຊ້ແບບບໍ່ຈຳກັດ ແລະ ອອກໃຫ້ໂດຍລັດຖະບານຂອງ ສປປ ລາວ.

*5.12 ການເສື່ອມມູນຄ່າຂອງຊັບສິນທີ່ບໍ່ແມ່ນທາງດ້ານການເງິນ*

ທະນາຄານປະເມີນນະມື້ເຮັດເອກະສານລາຍງານ ວ່າມີຊັບສິນໃດທີ່ມີການເສື່ອມຄ່າ ຫຼື ບໍ່. ຖ້າມີ ຫຼື ເມື່ອເຮັດການທົດສອບ ການເສື່ອມຄ່າຊັບສິນປະຈຳປີຕາມທີ່ໄດ້ກຳນົດ ທະນາຄານປະເມີນຈຳນວນເງິນທີ່ເກັບກູ້ຄືນໄດ້ຂອງຊັບສິນ. ຈຳນວນເງິນທີ່ສາມາດເກັບກູ້ ຄືນໄດ້ຂອງຊັບສິນ ແມ່ນໄດ້ຈາກ ມູນຄ່າທີ່ສູງກວ່າລະຫວ່າງ ມູນຄ່າຍຸດຕິທຳຂອງຊັບສິນ ຫຼື ມູນຄ່າຍຸດຕິທຳຂອງຫົວໜ່ວຍຊັບສິນທີ່ກໍ່ໃຫ້ເກີດເງິນສົດ (CGU) ລົບໃຫ້ຕົ້ນທຶນຂາຍ ແລະ ມູນຄ່າທີ່ຖືກນຳໃຊ້. ເມື່ອຍອດຍົກມາ ຂອງຊັບສິນ ຫຼື ມູນຄ່າຂອງ CGU ຫລາຍກວ່າມູນຄ່າທີ່ສາມາດເກັບກູ້ຄືນໄດ້, ຊັບສິນຈະຖືວ່າເສື່ອມຄ່າ ແລະ ຈະຫຼຸດມູນຄ່າລົງໃຫ້ເທົ່າກັບມູນຄ່າທີ່ສາມາດເກັບກູ້ຄືນໄດ້.

ໃນການປະເມີນມູນຄ່າທີ່ຖືກນຳໃຊ້, ກະແສເງິນສົດທີ່ຖືກປະເມີນໃນອະນາຄົດແມ່ນຫລຸດລົງ ເພື່ອໃຫ້ໄດ້ມູນຄ່າປະຈຸບັນ ໂດຍການນຳໃຊ້ອັດຕາສ່ວນຫລຸດກ່ອນອາກອນ ທີ່ສິ່ງຜົນຕໍ່ການປະເມີນມູນຄ່າຕາມທ້ອງຕະຫລາດໃນປະຈຸບັນຂອງເງິນ ແລະ ຄວາມສ່ຽງສະເພາະຂອງຊັບສິນ. ໃນການກຳນົດມູນຄ່າຍຸດຕິທຳລົບໃຫ້ຕົ້ນທຶນຂາຍ, ແບບວິທີການຕີມູນຄ່າທີ່ເໝາະ ສົມຈະຖືກນຳໃຊ້. ການຄິດໄລ່ຈະຖືກປະຕິບັດໂດຍເອົາຜົນຄູນຂອງການຕີມູນຄ່າ, ລາຄາຮຸ້ນທີ່ກຳນົດສຳລັບການຄ້າຂາຍກັບ ບໍລິສັດໃນເຄືອ ຫຼື ຕົວຊີ້ບອກມູນຄ່າຍຸດຕິທຳອື່ນໆ.

## 5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *5.12 ການເສື່ອມມູນຄ່າຂອງຊັບສິນທີ່ບໍ່ແມ່ນທາງດ້ານການເງິນ* (ຕໍ່)

ສໍາລັບຊັບສິນທີ່ບໍ່ລວມຄ່ານິຍົມ, ການປະເມີນຈະຖືກເຮັດໃນມື້ສ້າງບົດລາຍງານ ເພື່ອເບິ່ງວ່າອາດຈະມີຕົວຊີ້ບອກເຖິງການເສື່ອມຄ່າຂອງຊັບສິນທີ່ຜ່ານມານັ້ນຈະບໍ່ເກີດຂຶ້ນອີກ ຫຼື ອາດຫລຸດລົງ. ຖ້າຫາກມີຕົວຊີ້ບອກ, ທະນາຄານຈະຄາດຄະເນ ຈໍານວນເງິນທີ່ສາມາດຮຽກເກັບຄືນມາໄດ້ຂອງຊັບສິນ. ການເສື່ອມຄ່າຜ່ານມາຈະສາມາດຮຽກເກັບຄືນມາໄດ້ກໍ່ຕໍ່ເມື່ອມັນ ມີການປ່ຽນແປງໃນການກໍານົດມູນຄ່າທີ່ສາມາດເກັບຄືນໄດ້ຂອງຊັບສິນ ນັບຕັ້ງແຕ່ການເສື່ອມຄ່າຄັ້ງສຸດທ້າຍໄດ້ຖືກຮັບຮູ້. ການປີ້ນຄືນແມ່ນຖືກກໍານົດຂຶ້ນ ສະນັ້ນ ຍອດຍົກມາຂອງຊັບສິນແມ່ນບໍ່ເກີນມູນຄ່າທີ່ສາມາດເກັບຄືນໄດ້ ຫຼື ບໍ່ເກີນຍອດຍົກມາທີ່ຖືກກໍານົດລົບໃຫ້ຄ່າຫລຸ້ຍຫ້ຽນ, ບໍ່ມີຄ່າເສື່ອມຂອງຊັບສິນໃນປີຜ່ານມາ. ການປີ້ນຄືນແມ່ນຖືກຮັບຮູ້ໃນໃບລາຍງານຜົນການດໍາເນີນງານສະເພາະກິດຈະການ.

### *5.13 ການຄໍ້າປະກັນທາງການເງິນ*

ໂດຍທົ່ວໄປ ທະນາຄານໄດ້ໃຫ້ການຄໍ້າປະກັນທາງການເງິນ, ປະກອບມີ ໜັງສືສິນເຊື່ອ, ໜັງສືຄໍ້າປະກັນ ແລະ ໜັງສືຕອບຮັບ. ການຄໍ້າປະກັນທາງການເງິນແມ່ນຖືກຮັບຮູ້ ໃນໄລຍະເອກະສານລາຍງານການເງິນສະເພາະກິດຈະການ (ພາຍໃຕ້ 'ໜີ້ສິນ ອື່ນໆ') ທີ່ມູນຄ່າຍຸດຕິທໍາ, ພ້ອມຄ່າທໍານຽມ. ພາຍຫຼັງການຮັບຮູ້ ໜີ້ສິນຂອງທະນາຄານພາຍໃຕ້ໜັງສືຄໍ້າປະກັນແມ່ນຄິດໄລ່ໂດຍເອົາມູນຄ່າທີ່ຮັບຮູ້ພື້ນຖານທີ່ສູງກວ່າ ລົບຄ່າເສື່ອມສະສົມທີ່ຮັບຮູ້ໃນໃບລາຍງານການເງິນສະເພາະກິດຈະການ ສໍາລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 31 ມີນາ 2018 ແລະ ການຄາດຄະເນລາຍຈ່າຍທີ່ດີທີ່ສຸດທີ່ຕ້ອງຊໍາລະຕາມພັນທະທີ່ເກີດຂຶ້ນຈາກໜັງສືຄໍ້າປະກັນ.

ທຸກໆການເພີ່ມຂຶ້ນຂອງໜີ້ສິນທີ່ກ່ຽວຂ້ອງກັບການຄໍ້າປະກັນທາງການເງິນແມ່ນຖືກບັນທຶກໄວ້ໃນໃບລາຍງານຜົນການດໍາເນີນງານສະເພາະກິດຈະການສໍາລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 31 ມີນາ 2018 ໃນ 'ລາຍຈ່າຍເງິນແຮໜີ້ເສຍ'. ຄ່າທໍານຽມແມ່ນຖືກຮັບຮູ້ໃນໃບລາຍງານຜົນການດໍາເນີນງານໃນ 'ລາຍຮັບສຸດທິຄ່າທໍານຽມ ແລະ ຄ່າບໍລິການ' ຕາມວິທີສະເໝີຕົວຕາມອາຍຸຂອງການຄໍ້າປະກັນ.

### *5.14* ຜົນປະໂຫຍດຂອງພະນັກງານ

*ຜົນປະໂຫຍດພາຍຫລັງອອກການ*

ຕົ້ນທຶນໃນການສະໜອງຜົນປະໂຫຍດພາຍໃຕ້ແຜນດັ່ງກ່າວທີ່ກໍານົດແມ່ນຖືກກໍານົດການນໍາໃຊ້ວິທີການຄິດໄລ່ແບບຄາດຄະເນ (ໜີ້ສິນ). ຫຼຸດຫົວໜ່ວຍການບໍລິການທີ່ຖືກຄາດຄະເນໄວ້.

ການປະເມີນຄືນ, ປະກອບມີກໍາໄລ ແລະ ຂາດທຶນຕົວຈິງ ບໍ່ລວມດອກເບ້ຍທີ່ລວມເຂົ້າໃນດອກເບ້ຍສຸດທິໃນຜົນປະໂຫຍດໜີ້ສິນທີ່ໄດ້ກໍານົດໄວ້ຈະບັນທຶກທັນທີໂດຍທັນທີໃນໃບລາຍງານຖານະການເງິນພ້ອມກັບ ຈົດໜີ້ ຫຼື ມີ ທີ່ກ່ຽວຂ້ອງກັບກໍາໄລສະສົມໂດຍຜ່ານ OCI ໃນປີທີ່ເກີດຂຶ້ນ. ການປະເມີນຄືນ ແມ່ນບໍ່ໄດ້ຈັດປະເພດຄືນເຂົ້າກໍາໄລ ແລະ ຂາດທຶນໃນໄລຍະຕໍ່ມາ.

ດອກເບ້ຍສຸດທິທີ່ຄິດໄລ່ໂດຍໃຊ້ອັດຕາສ່ວນຫຼຸດຂອງຊັບສິນ ຫຼື ໜີ້ສິນສຸດທິທີ່ກໍານົດໄວ້.

ທະນາຄານຮັບຮູ້ຜົນການດໍາເນີນງານທີ່ປ່ຽນແປງໄປໃນພັນທະທີ່ຜູກພັນກັບຜົນປະໂຫຍດສຸດທິພາຍໃຕ້ "ລາຍຈ່າຍໃຫ້ແກ່ພະນັກງານ" ໃນໃບລາຍງານຜົນການດໍາເນີນງານສະເພາະກິດຈະການ:

- ຄ່າໃຊ້ຈ່າຍໃນການບໍລິການປະກອບມີຄ່າໃຊ້ຈ່າຍໃນການບໍລິການໃນປະຈຸບັນ, ຄ່າໃຊ້ຈ່າຍໃນການບໍລິການຜ່ານມາ, ກໍາໄລ ແລະ ຂາດທຶນ ໃນການຕັດທັກລົບ ແລະ ການຊໍາລະທີ່ບໍ່ເກີດຂຶ້ນເປັນປະຈໍາ, ແລະ
- ລາຍຮັບ ຫຼື ລາຍຈ່າຍດອກເບ້ຍສຸດທິ

## 5. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ (ຕໍ່)

*5.14* ຜົນປະໂຫຍດຂອງພະນັກງານ (ຕໍ່)

*ຜົນປະໂຫຍດໃນການຍົກເລີກສັນຍາຈ້າງເງິນ*

ອີງຕາມມາດຕາ 82 ຂອງກົດໝາຍແຮງງານສະບັບປັບປຸງ ເລກທີ 43/ສພຊ ອອກໂດຍປະທານປະເທດແຫ່ງ ສປປ ລາວ ລົງວັນທີ 28 ມັງກອນ 2014, ທະນາຄານມີພັນທະຈ່າຍຊົດເຊີຍໃຫ້ແກ່ພະນັກງານຜູ່ທີ່ລາອອກອີງຕາມເງື່ອນໄຂລຸ່ມນີ້:

- ► ກໍລະນີພະນັກງານຂາດທັກສະຄວາມຊໍານິຊໍານານ ຫຼື ມີສຸຂະພາບບໍ່ແຂງແຮງ ແລະ ບໍ່ສາມາດສືບຕໍ່ເຮັດ ວຽກໄດ້;
- ► ກໍລະນີທະນາຄານພິຈາລະນາວ່າຈໍາເປັນຕ້ອງຫລຸດພະນັກງານ ເພື່ອປັບປຸງການເຮັດວຽກພາຍໃນອົງກອນ.

ສໍາລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ນາຍຈ້າງຕ້ອງຈ່າຍເງິນເບ້ຍລ້ຽງໃຫ້ພະນັກງານ ໂດຍອີງໃສ່ພື້ນຖານການຄິດໄລ່ 10% ຂອງເງິນເດືອນພື້ນຖານ ເດືອນສຸດທ້າຍຄູນໃຫ້ຈໍານວນເດືອນທີ່ເຮັດວຽກກັບທະນາຄານ. ນະວັນທີ 31 ມີນາ 2018, ບໍ່ມີພະນັກງານທະນາຄານຖືກຢຸດຈ້າງຕາມເງື່ອນໄຂທີ່ລະບຸໄວ້ຂ້າງເທິງ. ດັ່ງນັ້ນ ທະນາຄານບໍ່ໄດ້ຫັກຄັງແຮສໍາລັບການຍົກເລີກການຈ້າງດັ່ງກ່າວໃນເອກະສານລາຍງານການເງິນສະເພາະກິດຈະການ.

*5.15* *ເງິນແຮ*

ເງິນແຮ ຈະຖືກຮັບຮູ້ ກໍ່ຕໍ່ເມື່ອທະນາຄານມີພັນທະ (ທາງດ້ານກົດໝາຍ ຫຼື ຕາມການຕົກລົງ) ເນື່ອງມາ ຈາກເຫດການທີ່ຜ່ານມາ ແລະ ມີຄວາມເປັນໄປໄດ້ວ່າຈະມີລາຍຈ່າຍ ເພື່ອຊໍາລະສະສາງໜີ້ສິນທີ່ອາດຈະເກີດຂຶ້ນ ແລະ ມູນຄ່າຄາດຄະເນດັ່ງກ່າວຕ້ອງເຊື່ອຖືໄດ້. ໃນເວລາທີ່ຜົນກະທົບຂອງມູນຄ່າເງິນເວລາ, ທະນາຄານກໍານົດລະດັບເງິນແຮດ້ວຍວິທີຄິດໄລ່ອັດຕາສ່ວນຫຼຸດກະແສເງິນສົດທີ່ຄາດວ່າຈະໄດ້ຮັບ ໂດຍອັດຕາກ່ອນການພາສີ ເຊິ່ງແມ່ນອັດຕາການປັດຈຸບັນທີ່ກໍານົດໄວ້ສະເພາະກັບໜີ້ສິນ. ລາຍຈ່າຍທີ່ກ່ຽວຂ້ອງກັບຄັງແຮຖືກລາຍງານໃນໃບລາຍງານຜົນການດໍາເນີນງານສະເພາະກິດຈະການພາຍຫລັງໄດ້ຮັບເງິນຄືນ.

*5.16* *ອາກອນກໍາໄລ*

*ອາກອນພາຍໃນປີ*

ຊັບສິນ ແລະ ໜີ້ສິນອາກອນພາຍໃນໄລຍະ ສໍາລັບປີປະຈຸບັນ ແລະ ປີກ່ອນ ແມ່ນຖືກຕີມູນຄ່າຕາມຈໍານວນທີ່ຄາດວ່າຈະເກັບຄືນ ຫຼື ຈ່າຍໃຫ້ກົມສ່ວຍສາອາກອນ. ອັດຕາອາກອນ ແລະ ກົດໝາຍສ່ວຍສາອາກອນທີ່ຖືກນໍາໃຊ້ຄິດໄລ່ອາກອນແມ່ນມີຜົນສັກສິດນໍາໃຊ້ໃນມື້ສ້າງໃບລາຍງານຖານະການເງິນ ພາຍໃນປະເທດທີ່ທະນາຄານດໍາເນີນທຸລະກິດ ແລະ ສ້າງລາຍຮັບທີ່ຕ້ອງເສຍອາກອນ.

ອາກອນລາຍໄດ້ພາຍໃນໄລຍະທີ່ກ່ຽວຂ້ອງກັບລາຍການທີ່ບັນທຶກໃນບັນຊີທຶນແມ່ນຖືກຮັບຮູ້ໃນທຶນເຈົ້າຂອງ ແລະ ບໍ່ໄດ້ມີການບັນທຶກໃນບັນຊີກໍາໄລ ຫຼື ຂາດທຶນ, ຜູ່ບໍລິຫານໄດ້ມີການປະເມີນສະຖານະການປະຕິບັດອາກອນເປັນແຕ່ລະໄລຍະໂດຍອີງຕາມກົດລະບຽບທາງດ້ານອາກອນ ເພື່ອການຕີລາຄາຄືນ ແລະ ສ້າງຄັງແຮໃນເວລາທີ່ເໝາະສົມ.

*ອາກອນເຍື້ອນຊໍາລະ*

ອາກອນເຍື້ອນຊໍາລະແມ່ນຖືກຄິດໄລ່ ຈາກສ່ວນຜິດດ່ຽງຊົ່ວຄາວ ຕາມມື້ທີ່ອອກບົດລາຍງານ ລະຫວ່າງຊັບສິນ ແລະ ໜີ້ສິນອາກອນ ແລະ ຍອດຍົກມາສໍາລັບການລາຍງານການເງິນ. ໜີ້ຕ້ອງສົ່ງອາກອນເຍື້ອນຊໍາລະແມ່ນຖືກຮັບຮູ້ເປັນສ່ວນຕ່າງອາກອນຊົ່ວຄາວ, ຍົກເວັ້ນເມື່ອໜີ້ສິນອາກອນເຍື້ອນຊໍາລະເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນ ໃນການເຄື່ອນໄຫວທີ່ບໍ່ແມ່ນການສັງລວມກິດຈະການ ແລະ ໃນເວລານັ້ນການເຄື່ອນໄຫວບໍ່ມີຜົນກະທົບຕໍ່ກໍາໄລທາງດ້ານບັນຊີ ຫຼື ກໍາໄລ ແລະ ຂາດທຶນທີ່ຖືກອາກອນ.

## 5. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ (ຕໍ່)

### 5.16 *ອາກອນກໍາໄລ* (ຕໍ່)

*ອາກອນເບື້ອນຊໍາລະ* (ຕໍ່)

ຍອດຍົກມາຂອງໜີ້ຕ້ອງຮັບທາງອາກອນ ແມ່ນຖືກກວດກາຄືນໃນມື້ສ້າງບົດລາຍງານ ແລະ ຫລຸດລົງ ຖ້າມີຄວາມເປັນໄປໄດ້ວ່າຈະບໍ່ມີກໍາໄລທີ່ຖືກເສຍອາກອນທີ່ອະນຸຍາດໃຫ້ ຫຼື ພາກສ່ວນໜຶ່ງຂອງໜີ້ ຕ້ອງຮັບອາກອນຈະຖືກອະນຸຍາດໃຫ້ຫັກ. ໜີ້ຕ້ອງຮັບອາກອນທີ່ບໍ່ຖືກຮັບຮູ້ ແມ່ນຖືກປະເມີນຄືນໃນມື້ສ້າງບົດລາຍງານ ແລະ ຖືກຮັບຮູ້ເມື່ອມີຄວາມເປັນໄປໄດ້ວ່າກໍາໄລທີ່ຖືກເສຍອາກອນໃນອະນາຄົດ ຈະອະນຸຍາດໃຫ້ໜີ້ຕ້ອງຮັບອາກອນ ສາມາດຫັກອອກໄດ້.

ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອາກອນເບື້ອນຊໍາລະແມ່ນຖືກໄລ່ລຽງຕາມອັດຕາອາກອນທີ່ຄາດວ່າຈະນໍາໄປໃຊ້ ພາຍໃນໄລຍະ ເມື່ອຊັບສິນຖືກຮັບຮູ້ມູນຄ່າຕົວຈິງ ຫຼື ໜີ້ສິນຖືກສະສາງ ອີງຕາມອັດຕາອາກອນ (ແລະ ກົດໝາຍ ສ່ວຍສາອາກອນ) ທີ່ໄດ້ປະກາດໃຊ້ນະມື້ສ້າງໃບລາຍງານຖານະການເງິນ.

ອາກອນພາຍໃນປີ ແລະ ອາກອນເບື້ອນຊໍາລະຈະຖືກຮັບຮູ້ຜົນປະໂຫຍດທາງອາກອນ ຫຼື ຄ່າໃຊ້ຈ່າຍໃນໃບລາຍງານຜົນໄດ້ຮັບ, ຍົກເວັ້ນອາກອນທີ່ກ່ຽວຂ້ອງກັບການຕີມູນຄ່າຕາມລາຄາຍຸດຕິທໍາຂອງຊັບສິນທີ່ມີໄວ້ສໍາລັບການຂາຍ, ການຜິດດ່ຽງອັດຕາແລກປ່ຽນ ແລະ ມູນຄ່າສຸດທິຂອງກະແສເງິນສົດ, ຊຶ່ງສາມາດຄິດຄ່າທໍານຽມ ຫຼື ບັນທຶກບັນຊີເປັນ OCI. ຂໍ້ຍົກເວັ້ນເຫຼົ່ານີ້ແມ່ນໄດ້ຖືກຈັດປະເພດຄືນໃໝ່ ຈາກ OCI ໄປ ໃບລາຍງານຜົນການດໍາເນີນງານ ໃນບັນຊີກໍາໄລ ຫຼື ຂາດທຶນເບື້ອນຊໍາລະ. ທະນາຄານຍັງໄດ້ຮັບຮູ້ອາກອນພາຍຫຼັງທີ່ມີການຊໍາລະສະສາງ ທີ່ກ່ຽວຂ້ອງກັບເຄື່ອງມືທາງດ້ານການເງິນ ທີ່ຖືກຈັດປະເພດເປັນທຶນເຈົ້າຂອງ.

ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອາກອນເບື້ອນຊໍາລະແມ່ນໄດ້ຖືກຫັກລ້າງ ຖ້າຫາກມີສິດບັງຄັບໃຊ້ທາງກົດໝາຍ ເພື່ອຫັກລ້າງຊັບສິນອາກອນ ແລະ ໜີ້ສິນອາກອນ ແລະ ທະນາຄານມີຄວາມຕັ້ງໃຈທີ່ຈະລາຍງານເປັນມູນຄ່າສຸດທິ.

### 5.17 *ຊັບສິນທີ່ໄດ້ຮັບໜອບໝາຍອໍານາດ (ຊັບສິນທີ່ທະນາຄານບໍ່ໄດ້ຖືກໍາມະສິດ)*

ທະນາຄານໄດ້ໃຫ້ບໍລິການກ່ຽວກັບກອງທຶນ ແລະ ການບໍລິການບໍລິຫານຊັບສິນ ເຊິ່ງເປັນຜົນເຮັດໃຫ້ທະນາຄານໄດ້ຖືຄອງ ຫຼື ໄດ້ຮັບສິດໃນການລົງທຶນໃນນາມລູກຄ້າຂອງທະນາຄານ. ຊັບສິນດັ່ງກ່າວ ບໍ່ໄດ້ຖືກສະແດງໃນເອກະສານລາຍງານການເງິນຂອງທະນາຄານ, ເນື່ອງຈາກຊັບສິນເຫຼົ່ານັ້ນ ບໍ່ແມ່ນຊັບສິນຂອງທະນາຄານ.

### 5.18 *ຄັງສໍາຮອງທຶນເຈົ້າຂອງ*

ຄັງສໍາຮອງຖືກບັນທຶກເປັນທຶນ ໃນເອກະສານລາຍງານການເງິນສະເພາະກິດຈະການ ຂອງທະນາຄານ, ເຊິ່ງລວມມີ:

- ຄັງສໍາຮອງຕາມລະບຽບການ, ເຊິ່ງຖືກສ້າງຂຶ້ນຕາມຂໍ້ກໍານົດຂອງທະນາຄານແຫ່ງ ສປປ ລາວ, ລາຍລະອຽດຢູ່ບົດອະທິບາຍຊ້ອນທ້າຍເລກທີ 30; ແລະ
- ເງິນແຮສໍາລັບຫລັກຊັບມີໄວ້ເພື່ອຂາຍ, ເຊິ່ງປະກອບດ້ວຍສ່ວນປ່ຽນແປງຂອງມູນຄ່າຍຸດຕິທໍາຂອງຫຼັກຊັບມີໄວ້ເພື່ອຂາຍ. ລາຍລະອຽດຢູ່ບົດອະທິບາຍຊ້ອນທ້າຍເລກທີ 31.

### 5.19 *ມາດຕະຖານແຕ່ຍັງບໍ່ທັນບັງຄັບໃຊ້*

ມາດຕະຖານ ແລະ ການຕີຄວາມໝາຍທີ່ໄດ້ວາງອອກ, ແຕ່ວ່າຍັງບໍ່ທັນມີຜົນບັງຄັບໃຊ້, ຈົນເຖິງມື້ອອກເອກະສານລາຍງານການເງິນສະເພາະກິດຈະການ ຂອງທະນາຄານ ແມ່ນໄດ້ເປີດເຜີຍດັ່ງຕໍ່ໄປນີ້. ທະນາຄານຈະຮັບຮອງເອົາມາດຕະຖານເຫລົ່ານີ້, ຖ້າສາມາດນໍາໃຊ້ໄດ້ໃນເວລາທີ່ມາດຕະຖານດັ່ງກ່າວໄດ້ມີຜົນບັງຄັບໃຊ້.

### 5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

*5.19 ມາດຕະຖານແຕ່ຍັງບໍ່ທັນບັງຄັບໃຊ້* (ຕໍ່)

*IFRS 9 ເຄື່ອງມືທາງການເງິນ*

ເດືອນກໍລະກົດ 2014, IASB ໄດ້ອອກ IFRS 9 ເຄື່ອງມືທາງການເງິນ ສະບັບສົມບູນ ທີ່ສະແດງໃຫ້ເຫັນທຸກໆສ່ວນຂອງເຄື່ອງມືທາງການເງິນ ແລະ ປ່ຽນແທນ IAS 39 ເຄື່ອງມືທາງການເງິນ: ການຮັບຮູ້ ແລະ ການວັດແທກ ແລະ IFRS 9 ທຸກສະບັບກ່ອນໜ້ານີ້. ມາດຕະຖານດັ່ງກ່າວໄດ້ນຳສະເໜີຂໍ້ກຳນົດໃໝ່ກ່ຽວກັບ ການຈັດປະເພດ ແລະ ການວັດແທກ, ຄ່າ ເສື່ອມ, ແລະ ການບັນຊີປ້ອງກັນຄວາມສ່ຽງ. IFRS 9 ແມ່ນຈະຖືກບັງຄັບໃຊ້ສຳລັບປີທີ່ເລີ່ມນະວັນທີ ຫຼື ຫຼັງຈາກວັນທີ 1 ມັງກອນ 2018 ພ້ອມກັບອະນຸຍາດໃຫ້ສາມາດນຳໃຊ້ກ່ອນໄດ້. ມີຂໍ້ກຳນົດໃຊ້ຄືນຫຼັງ ແຕ່ຂໍ້ມູນສົມທຽບແມ່ນບໍ່ໄດ້ບັງຄັບ. ການນຳໃຊ້ IFRS 9 ຈະມີຜົນບັງຄັບໃຊ້ກ່ຽວກັບ ການຈັດປະເພດ ແລະ ການວັດແທກ ຊັບສິນທາງການເງິນຂອງທະນາຄານແຕ່ບໍ່ມີຜົນຕໍ່ກັບການຈັດປະເພດ ແລະ ການວັດແທກໜີ້ສິນ ທາງການເງິນຂອງທະນາຄານ.

ຈົນຮອດວັນທີ່ອອກບົດລາຍງານສະບັບນີ້, ທະນາຄານຍັງບໍ່ທັນໄດ້ມີການສ້າງໂປຣແກມການຮັບຮອງ IFRS 9 ທີ່ລວມທັງວິທີການລວມບັນດາເຫດການທີ່ກ່ຽວຂ້ອງ, ຖານຂໍ້ມູນ, ການອອກແບບ, ຂະບວນການທາງດ້ານ ຂໍ້ມູນຂ່າວສານ ເຕັກໂນໂລຢີ, ຄວາມສ່ຽງ ແລະ ການລາຍງານ. ສະນັ້ນ, ຜົນກະທົບທີ່ອາດເປັນໄປໄດ້ຂອງ ການຮັບຮອງເອົາ IFRS 9 ໃນເອກະສານລາຍງານການເງິນແມ່ນບໍ່ໄດ້ຮັບການປະເມີນເທື່ອ.

*IFRS 15 ລາຍຮັບຈາກສັນຍາກັບລູກຄ້າ*

ໃນເດືອນພຶດສະພາ 2014, IASB ໄດ້ອອກ IFRS 15 ລາຍຮັບຈາກສັນຍາກັບລູກຄ້າ, ມີຜົນບັງຄັບໃຊ້ສຳລັບປີເລີ່ມຕົ້ນໃນວັນທີ 1 ມັງກອນ 2018 ກັບການນຳໃຊ້ທີ່ໄດ້ຮັບອະນຸຍາດ. IFRS 15 ໄດ້ກຳນົດຫຼັກການພື້ນຖານສຳລັບການຮັບຮູ້ລາຍຮັບແລະຈະສາມາດນຳໃຊ້ກັບທຸກໆສັນຍາທີ່ມີກັບລູກຄ້າ. ຢ່າງໃດກໍຕາມ, ລາຍຮັບດອກເບ້ຍ ແລະ ຄ່າທຳນຽມ ທີ່ຕິດພັນກັບເຄື່ອງມືທາງການເງິນ ແລະ ການເຊົ່າ ຈະຍັງຢູ່ນອກຂອບເຂດຂອງ IFRS 15 ແລະ ຈະໄດ້ຮັບການຄຸ້ມຄອງໂດຍການມາດຕະຖານອື່ນໆ (ຕົວຢ່າງ: IFRS 9, ແລະ IFRS 16 ການເຊົ່າ).

ການເກັບລາຍຮັບພາຍໃຕ້ IFRS 15 ຈຳເປັນຕ້ອງຖືກຮັບຮູ້ເປັນສິນຄ້າ ແລະ ການບໍລິການໄດ້ຖືກຍົກຍ້າຍ, ໃນຂອບເຂດທີ່ຜູ້ໂອນຄາດຄະເນສິນຄ້າ ແລະ ການບໍລິການ. ມາດຕະຖານຈະກຳນົດຂໍ້ກຳນົດການເປີດເຜີຍສະບັບສົມບູນກ່ຽວກັບການລັກສະນະ, ຂອບເຂດ ແລະ ໄລຍະເວລາ ເຊັ່ນດຽວກັນກັບຄວາມບໍ່ແນ່ນອນຂອງລາຍຮັບ ແລະ ກະແສເງິນສົດກັບລູກຄ້າ.

*IFRS 16 ການເຊົ່າສິນເຊື່ອ*

IASB ອອກມາດຕະຖານບັນຊີໃຫມ່ສຳລັບການເຊົ່າ - IFRS 16 ການເຊົ່າ ໃນເດືອນມັງກອນປີ 2016. ມາດຕະຖານໃໝ່ດັ່ງກ່າວບໍ່ໄດ້ມີການປ່ຽນແປງການບັນຊີທີ່ສຳຄັນສຳລັບການເຊົ່າ ຕໍ່ກັບຜູ້ໃຫ້ເຊົ່າ. ຢ່າງໃດກໍຕາມ, ມັນໄດ້ກຳນົດໃຫ້ຜູ້ເຊົ່າ ຮັບຮູ້ການເຊົ່າທັງໝົດເປັນຫນີ້ສິນໃຫ້ເຊົ່າໃນໃບລາຍງານຖານະການເງິນຂອງພວກເຂົາ ໂດຍສອດຄ່ອງກັບສິດໃນການນຳໃຊ້ຊັບສິນ. ຜູ້ເຊົ່າຕ້ອງໄດ້ນຳໃຊ້ຮູບແບບດຽວສຳລັບການຮັບຮູ້ການເຊົ່າທັງຫມົດ, ແຕ່ວ່າຈະມີທາງເລືອກທີ່ຈະບໍ່ຮັບຮູ້ການເຊົ່າທີ່ມີໄລຍະສັ້ນ ແລະ ການເຊົ່າທີ່ມີມູນຄ່າຕ່ຳ. ໂດຍທົ່ວໄປ, ກຳໄລ ຫຼື ຂາດທຶນໃນການຮັບຮູ້ສຳລັບການຮັບຮູ້ການເຊົ່າຈະຄ້າຍຄືກັນກັບການບັນຊີການເຊົ່າທາງການເງິນໃນປັດຈຸບັນ ເຊິ່ງລາຍຈ່າຍດອກເບ້ຍ ແລະ ຄ່າຫຼູ້ຍຫ້ຽນຈະຖືກຮັບຮູ້ແຍກຕ່າງຫາກໃນໃບລາຍງານຜົນການດຳເນີນງານ.

IFRS 16 ມີຜົນບັງຄັບໃຊ້ສຳລັບປີທີ່ເລີ່ມຕົ້ນນະວັນທີ ຫຼື ຫຼັງວັນທີ 1 ມັງກອນ 2019. ມາດຕະຖານລາຍຮັບໃຫມ່ດັ່ງກ່າວສາມາດນຳໃຊ້ລ່ວງໜ້າໄດ້, IFRS 15, ໄດ້ຖືກນຳໃຊ້ໃນວັນດຽວກັນ. ຜູ້ເຊົ່າຈະຕ້ອງນຳໃຊ້ IFRS 16 ໂດຍນຳໃຊ້ຍ້ອນຫຼັງກັບຄືນແບບເຕັມ ຫຼື ບາງສ່ວນ.

ທະນາຄານບໍ່ໄດ້ນຳໃຊ້ IFRS 16 ລ່ວງຫນ້າ ແລະ ຂະນະນີ້ແມ່ນກຳລັງປະເມີນຜົນກະທົບຢູ່.

## 6. ການຄາດຄະເນທີ່ສໍາຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ

ໃນການກະກຽມເອກະສານລາຍງານການເງິນສະເພາະກິດຈະການຂອງທະນາຄານ, ຮຽກຮ້ອງໃຫ້ຄະນະບໍລິຫານຕ້ອງມີການພິຈາລະນາ, ຕີລາຄາ ແລະ ການປະເມີນຜົນກະທົບຕໍ່ຈໍານວນລາຍຮັບ, ລາຍຈ່າຍ, ຊັບສິນ ແລະ ໜີ້ສິນ ແລະ ການເປີດເຜີຍທີ່ກ່ຽວຂ້ອງ, ລວມທັງການເປີດເຜີຍໜີ້ສິນທີ່ອາດເກີດຂຶ້ນ. ຄວາມບໍ່ແນ່ນອນໃນການປະເມີນ ແລະ ການຕີລາຄາອາດຈະເຮັດໃຫ້ເກີດມີຄວາມຮຽກຮ້ອງຕ້ອງການດ້ານການດັດແກ້ມູນຄ່າຂອງຍອດຍົກມາຂອງຊັບສິນ ແລະ ໜີ້ສິນທີ່ຈະສົ່ງຜົນກະທົບໃນອະນາຄົດ.

ໃນຂະບວນການຂອງການຈັດຕັ້ງປະຕິບັດນະໂຍບາຍການບັນຊີຂອງທະນາຄານ, ຄະນະບໍລິຫານໄດ້ພິຈາລະນາດັ່ງນີ້ ເຊິ່ງມີຜົນກະທົບອັນສໍາຄັນໃຫ້ແກ່ຕົວເລກການຮັບຮູ້ທີ່ມີຄວາມສ່ຽງຫລາຍ ເຊິ່ງຜົນມາຈາກເຄື່ອງມືການດັດແກ້ທີ່ສໍາຄັນຂອງມູນຄ່າຕົວຈິງຂອງຊັບສິນ ແລະ ໜີ້ສິນພາຍໃນໄລຍະການເງິນ ຕໍ່ໜ້າ. ທະນາຄານໄດ້ອີງໃສ່ຂໍ້ສົມມຸດຖານ ແລະ ການຄາດຄະເນຂອງຕົນ ກ່ຽວກັບການກໍານົດເວລາທີ່ມີການລາຍງານທາງດ້ານການເງິນທີ່ຖືກກະກຽມ. ສະພາບການ ແລະ ສົມມຸດຖານ ກ່ຽວກັບການພັດທະນາໃນອະນາຄົດ, ຢ່າງໃດກໍ່ຕາມ, ອາດຈະມີການປ່ຽນແປງ ເນື່ອງມາຈາກການປ່ຽນແປງຂອງຕະຫລາດ ຫຼື ສະພາບການທີ່ຄວບຄຸມທະນາຄານ. ການປ່ຽນແປງດັ່ງກ່າວໄດ້ສະທ້ອນໃຫ້ເຫັນໃນຂໍ້ສົມມຸດຖານໃນເວລາທີ່ເກີດຂຶ້ນ.

### *6.1 ຄວາມສືບເນື່ອງໃນການດໍາເນີນທຸລະກິດ*

ຄະນະບໍລິຫານຂອງທະນາຄານໄດ້ປະເມີນຄວາມອາດສາມາດຂອງທະນາຄານ ກໍ່ຄືຄວາມສືບເນື່ອງໃນການດໍາເນີນທຸລະກິດ ແລະເປັນທີ່ໜ້າພໍໃຈວ່າທະນາຄານມີແຫລ່ງທຶນ ເພື່ອສືບຕໍ່ໃນການດໍາເນີນທຸລະກິດໃນອະນາຄົດ. ຍິ່ງໄປກວ່ານັ້ນ, ຄະນະບໍລິຫານບໍ່ມີສິ່ງຜິດປົກກະຕິໃດໆເປັນທີ່ໜ້າສົງໃສຕໍ່ກັບຄວາມອາດສາມາດຂອງທະນາຄານ ເພື່ອສືບຕໍ່ດໍາເນີນງານກໍ່ຄືຄວາມສືບເນື່ອງໃນການດໍາເນີນທຸລະກິດ. ເພາະສະນັ້ນ, ເອກະສານລາຍງານການເງິນໄລຍະສະເພາະກິດຈະການ ສັງລວມກິດຈະການຍັງສືບຕໍ່ສ້າງຂຶ້ນບົນພື້ນຖານ ຄວາມສືບເນື່ອງໃນການດໍາເນີນທຸລະກິດ.

### *6.2 ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ*

ດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຊ້ອນທ້າຍເລກທີ 5.2.3, ການຮັບຮູ້ດອກເບ້ຍພາຍໃຕ້ອັດຕາຂອງເງິນໄດ້ຮັບຄືນ ທີ່ສາມາດກໍານົດໄດ້ຢ່າງຖືກຕ້ອງທີ່ສຸດໂດຍນໍາໃຊ້ອັດຕາຄົງທີ່ ຕາມອາຍຸຂອງເງິນກູ້ ແລະ ເງິນຝາກ ແລະ ຮັບຮູ້ຜົນກະທົບຂອງອັດຕາດອກເບ້ຍທີ່ອາດຈະແຕກຕ່າງໃນແຕ່ລະຂັ້ນຕອນ ແລະ ລັກສະນະອື່ນໆ ຈາກວົງຈອນອາຍຸຂອງແຕ່ລະຜະລິດຕະພັນ (ເຊັ່ນ: ການຈ່າຍລ່ວງໜ້າ, ຄ່າປັບໄໝ, ດອກເບ້ຍ ແລະ ຄ່າທໍານຽມອື່ນໆ). ການຄາດຄະເນນີ້ໄດ້ອີງໃສ່ລັກສະນະ, ອົງປະກອບຂອງການຕັດສິນໃຈ ກ່ຽວກັບລັກສະນະທີ່ຄາດຄະເນໄວ້ ແລະ ວົງຈອນຊີວິດຂອງເຄື່ອງມື, ເນື່ອງຈາກການປ່ຽນແປງຂອງລາຍຮັບ/ລາຍຈ່າຍອື່ນໆເປັນສ່ວນສໍາຄັນຂອງເຄື່ອງມື.

### *6.3 ການຂາດທຶນຈາກຄ່າເສື່ອມມູນຄ່າຂອງເງິນກູ້ ແລະ ເງິນລ່ວງໜ້າ*

ທະນາຄານໄດ້ມີການທົບທວນເງິນໃຫ້ກູ້ ແລະ ເງິນລ່ວງໜ້າທີ່ສໍາຄັນເປັນແຕ່ລະບຸກຄົນຕາມແຕ່ລະວັນທີລາຍງານ ເພື່ອປະເມີນວ່າການຂາດທຶນຈາກຄ່າເສື່ອມມູນຄ່າ ຄວນຖືກບັນທຶກລົງໃນໃບລາຍງານຜົນການດໍາເນີນງານ ຫຼື ບໍ່.

ວິທີການປະເມີນຄ່າເສື່ອມມູນຄ່າຂອງຊັບສິນທີ່ບັນທຶກໂດຍວິທີຫັກລົບຕົ້ນທຶນ ເປັນຜົນໃຫ້ມີການບັນທຶກເງິນແຮສໍາລັບ:

- ການເສື່ອມມູນຄ່າສະເພາະຕາມຄວາມສໍາຄັນແບບລາຍການ ຫຼື ຊັບສິນສ່ຽງທີ່ຖືກກໍານົດວ່າສໍາຄັນ;
- ການເສື່ອມມູນຄ່າເປັນກຸ່ມ

## 6. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ (ຕໍ່)

### *6.3 ການຂາດທຶນຈາກຄ່າເສື່ອມມູນຄ່າຂອງເງິນກູ້ ແລະ ເງິນລ່ວງໜ້າ* (ຕໍ່)

ລາຍລະອຽດຂອງແຕ່ລະປະເພດໄດ້ອະທິບາຍໄວ້ໃນບົດອະທິບາຍຊ້ອນທ້າຍ ເລກທີ 5.4.1. ເຊິ່ງປະກອບດ້ວຍການຕັດສິນໃຈຂອງຄະນະບໍລິຫານ, ໂດຍສະເພາະແລ້ວຈະມີການປະເມີນມູນຄ່າ ແລະ ກຳນົດເວລາຂອງກະແສເງິນສົດໃນອະນາຄົດ ແລະ ມູນຄ່າຫຼັກຊັບຄ້ຳປະກັນ ເມື່ອມີການຂາດທຶນຈາກຄ່າເສື່ອມມູນຄ່າ. ການປະເມີນດັ່ງກ່າວມາຈາກຈຳນວນຂອງປັດໄຈ, ການປ່ຽນແປງຂອງລາຍການທີ່ເຮັດໃຫ້ເກີດຄວາມແຕກຕ່າງຂອງຜົນຕອບແທນ.

### *6.4 ການເຊື່ອມມູນຄ່າຂອງຊັບສິນມີໄວ້ເພື່ອຂາຍ*

ທະນາຄານທົບທວນຄືນຕາສານໜີ້ຂອງຕົນທີ່ຈັດປະເພດເປັນການລົງທຶນທີ່ມີໄວ້ເພື່ອຂາຍໃນແຕ່ລະວັນທີ່ລາຍງານເພື່ອປະເມີນວ່າພວກມັນໄດ້ເຊື່ອມມູນຄ່າ ຫຼື ບໍ່ ດັ່ງທີ່ໄດ້ອະທິບາຍໄວ້ໃນເອກະສານຊ້ອນທ້າຍ ເລກທີ 5.4.2.

ການປະເມີນຜົນດັ່ງກ່າວນີ້, ລວມທັງການຄາດຄະເນກະແສເງິນສົດໃນອະນາຄົດ ແລະ ຂໍ້ມູນທີ່ປະກອບເຂົ້າອື່ນໆເຂົ້າໃນຮູບແບບກະແສເງິນສົດແບບສ່ວນຫຼຸດ ແລະ ໃນກໍລະນີຂອງຕາສານທຶນ, ການຕີມູນຄ່າຂອງສິ່ງທີ່ເປັນ 'ທີ່ສຳຄັນ' ຫຼື 'ເປັນເວລາດົນ' ແມ່ນຮຽກຮ້ອງໃຫ້ມີການຕັດສິນໃຈ. ໃນການຕັດສິນໃຈດັ່ງກ່າວນີ້, ທະນາຄານການປະເມີນ, ໃນບັນດາປັດໄຈອື່ນໆ, ປະຫວັດການເຄື່ອນໄຫວຂອງລາຄາຮຸ້ນ ແລະ ໄລຍະເວລາ ແລະ ຂອບເຂດທີ່ມູນຄ່າຍຸດຕິທຳຂອງການລົງທຶນແມ່ນຕ່ຳກ່ວາຕົ້ນທຶນ.

### *6.5 ຊັບສິນອາກອນເບື້ອນຊຳລະ*

ຊັບສິນອາກອນເບື້ອນຊຳລະ ແມ່ນໄດ້ຖືກຮັບຮູ້ໃນແງ່ຂອງການຂາດທຶນອາກອນ ທີ່ອາດມີຄວາມເປັນໄປໄດ້ທີ່ວ່າກຳໄລອາກອນໃນອະນາຄົດທີ່ມີຢູ່ກັບການຂາດທຶນທີ່ສາມາດນຳໃຊ້ໄດ້. ການຕັດສິນຮຽກຮ້ອງໃຫ້ມີການກຳນົດຈຳນວນເງິນຂອງຊັບສິນອາກອນເບື້ອນຊຳລະ ທີ່ສາມາດຮັບຮູ້ໄດ້, ໂດຍອີງໃສ່ແນວໂນ້ມໄລຍະເວລາ ແລະ ລະດັບຂອງກຳໄລອາກອນໃນອະນາຄົດ ພ້ອມກັບຍຸດທະສາດການວາງແຜນອາກອນໃນອະນາຄົດ.

## 7. ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ

| | *ສຳລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2018 ລ້ານກີບ* | *ສຳລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2017 ລ້ານກີບ* |
|---|---|---|
| ລາຍຮັບດອກເບ້ຍເງິນໃຫ້ກູ້ຢືມແກ່ລູກຄ້າ | 417.182 | 364.230 |
| ລາຍຮັບດອກເບ້ຍເງິນຝາກ | 10.011 | 2.039 |
| ລາຍຮັບດອກເບ້ຍຈາກການລົງທຶນໃນຫຼັກຊັບ | 27.191 | 31.371 |
| ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນອື່ນໆ | 6.226 | 13.434 |
| | **460.610** | **411.074** |

## 8. ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ

| | *ສໍາລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2018 ລ້ານກີບ* | *ສໍາລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2017 ລ້ານກີບ* |
|---|---|---|
| ລາຍຈ່າຍດອກເບ້ຍເງິນຝາກຂອງທະນາຄານອື່ນ | 33.222 | 27.504 |
| ລາຍຈ່າຍດອກເບ້ຍເງິນຝາກຂອງລູກຄ້າ | 200.946 | 194.045 |
| | **234.168** | **221.549** |

## 9. ລາຍຮັບສຸດທິຈາກຄ່າທໍານຽມ ແລະ ຄ່າບໍລິການ

| | *ສໍາລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2018 ລ້ານກີບ* | *ສໍາລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2017 ລ້ານກີບ* |
|---|---|---|
| **ລາຍຮັບຄ່າທໍານຽມ ແລະ ຄ່າບໍລິການຈາກ:** | | |
| ບໍລິການຊໍາລະສະສາງ | 39.387 | 32.350 |
| ທຸລະກໍາທໍາດ້ານການເງິນ | 19.852 | 9.697 |
| ຄ່າທໍານຽມ ແລະຄ່າບໍລິການອື່ນໆ | 2.269 | 1.520 |
| | **61.508** | **43.567** |
| **ລາຍຈ່າຍຄ່າທໍານຽມ ແລະ ຄ່າບໍລິການສໍາລັບ**: | | |
| ບໍລິການຊໍາລະສະສາງ | (5.595) | (4.850) |
| ທຸລະກໍາທາງດ້ານການເງິນ | (439) | (1.202) |
| | **(6.034)** | **(6.052)** |
| **ລາຍຮັບສຸດທິຈາກຄ່າທໍານຽມ ແລະ ຄ່າບໍລິການ** | **55.474** | **37.515** |

## 10. ກໍາໄລສຸດທິຈາກການແລກປ່ຽນເງິນຕາ

| | *ສໍາລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2018 ລ້ານກີບ* | *ສໍາລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2017 ລ້ານກີບ* |
|---|---|---|
| ກໍາໄລຈາກການແລກປ່ຽນເງິນຕາ ແລະ ການຕີລາຄາລາຍການທີ່ເປັນເງິນ | 1.230.504 | 825.697 |
| ຂາດທຶນຈາກການແລກປ່ຽນເງິນຕາ ແລະ ການຕີລາຄາລາຍການທີ່ເປັນເງິນ | (1.214.750) | (814.270) |
| | **15.754** | **11.427** |

## 11. ລາຍຮັບອື່ນໆຈາກການດຳເນີນງານ

| | *ສຳລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2018 ລ້ານກີບ* | *ສຳລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2017 ລ້ານກີບ* |
|---|---|---|
| ລາຍຮັບເງິນປັນຜົນ | 5.404 | 3.073 |
| ເກັບຄືນໜີ້ສູນທີ່ສະສາງອອກ | 1.766 | 1.933 |
| ອື່ນໆ | 857 | 2.929 |
| | **8.027** | **7.935** |

## 12. ລາຍຈ່າຍພະນັກງານ

| | *ສຳລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2018 ລ້ານກີບ* | *ສຳລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2017 ລ້ານກີບ* |
|---|---|---|
| ເງິນເດືອນ | 31.776 | 30.238 |
| ເງິນອຸດໜູນອື່ນໆ | 21.191 | 19.700 |
| ເງິນອຸດໜູນຫຼັງອອກການ | 2.828 | - |
| ຄ່າໃຊ້ຈ່າຍອື່ນໆຂອງພະນັກງານ | 1.697 | 1.279 |
| | **57.492** | **51.217** |

## 13. ລາຍຈ່າຍອື່ນໆຈາກການດຳເນີນງານ

| | *ສຳລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2018 ລ້ານກີບ* | *ສຳລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2017 ລ້ານກີບ* |
|---|---|---|
| ຄ່າສ້ອມແປງ ແລະ ບຳລຸງຮັກສາ | 4.110 | 4.163 |
| ຄ່າໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ | 1.616 | 1.236 |
| ຄ່າເຊົ່າຫ້ອງການ | 1.616 | 2.355 |
| ຄ່າການສື່ສານ | 1.668 | 403 |
| ຄ່າການຝຶກອົບຮົມ, ປະຊຸມ ແລະ ສຳມະນາ | 2.898 | 2.209 |
| ຄ່າເບ້ຍປະກັນໃຫ້ກອງທຶນປົກປ້ອງຜູ້ຝາກເງິນ | 6.628 | 5.784 |
| ຄ່າອາກອນ ແລະ ພັນທະອື່ນໆ | 80 | 77 |
| ຄ່າປະກັນໄພ | 858 | 848 |
| ຄ່າສາທາລະນຸປະໂພກ | 1.690 | 1.557 |
| ຄ່ານໍ້າມັນ | 507 | 399 |
| ອຸປະກອນ ແລະ ເຄື່ອງໃຊ້ຫ້ອງການ | 3.980 | 2.301 |
| ຄ່າທີ່ປຶກສາ ແລະ ການບໍລິການທາງການເງິນ | 645 | 442 |
| ການສະສາງຊັບສິນພວມກໍ່ສ້າງ | - | 18.640 |
| ອື່ນໆ | 3.318 | 4.313 |
| | **29.614** | **44.727** |

## 14. ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ")

| | *31 ມີນາ 2018*<br>*ລ້ານກີບ* | *31 ທັນວາ 2017*<br>*ລ້ານກີບ* |
|---|---|---|
| ເງິນສົດໃນກໍາມືເປັນເງິນກີບ | 1.298.599 | 1.120.701 |
| ເງິນສົດໃນກໍາມືເປັນເງິນຕາຕ່າງປະເທດ | 821.966 | 790.761 |
| ຍອດເຫຼືອຢູ່ ທຫລ | | |
| - ເງິນຝາກບັງຄັບ | 1.344.975 | 1.353.384 |
| - ເງິນຝາກກະແສລາຍວັນ | 2.042.795 | 2.547.888 |
| | **5.508.335** | **5.812.734** |

ຍອດເຫຼືອກັບທະນາຄານກາງປະກອບດ້ວຍບັນຊີເງິນຝາກເພື່ອການຊໍາລະສະສາງ ແລະ ເງິນຝາກພາກບັງຄັບ. ຍອດເຫຼືອເຫລົ່ານີ້ບໍ່ມີດອກເບ້ຍ.

ພາຍໃຕ້ລະບຽບການຂອງທະນາຄານກາງ, ທະນາຄານຖືກຮຽກຮ້ອງໃຫ້ຮັກສາຄັງສະສົມເງິນສົດກັບທະນາຄານກາງໃນຮູບແບບເງິນຝາກບັງຄັບ, ເຊິ່ງຖືກຄິດໄລ່ 5,00% ສໍາລັບສະກຸນເງິນກີບ ແລະ 10,00%% ສໍາລັບສະກຸນເງິນຕ່າງປະເທດ, ສອງອາທິດຕໍ່ຄັ້ງ (2017: 5,00%% ແລະ 10,00%%) ຂອງເງິນຝາກລູກຄ້າທີ່ມີມື້ຄົບກໍານົດຕໍ່າກວ່າ 12 ເດືອນ. ພາຍໃນໄລຍະດັ່ງກ່າວທະນາຄານໄດ້ຮັກສາຍອດເງິນຝາກພາກບັງຄັບໃນມູນຄ່າທີ່ຖືກຕ້ອງຕາມລະບຽບຂອງ ທຫລ.

## 15. ໜີ້ຕ້ອງຮັບຈາກທະນາຄານອື່ນ

| | *31 ມີນາ 2018*<br>*ລ້ານກີບ* | *31 ທັນວາ 2017*<br>*ລ້ານກີບ* |
|---|---|---|
| **ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ** | **1.763.369** | **2.268.720** |
| - ເປັນເງິນກີບ | 8.117 | 5.993 |
| - ເປັນເງິນຕາຕ່າງປະເທດ | 1.755.252 | 2.262.727 |
| **ເງິນຝາກມີກໍານົດ** | **1.434.890** | **868.998** |
| - ເປັນເງິນກີບ | 663.000 | 554.200 |
| - ເປັນເງິນຕາຕ່າງປະເທດ | 771.890 | 314.798 |
| **ດອກເບ້ຍຄ້າງຮັບ** | **5.488** | **4.783** |
| | **3.203.747** | **3.142.501** |

ອັດຕາດອກເບ້ຍສໍາລັບໜີ້ຕ້ອງສົ່ງທະນາຄານອື່ນພາຍໃນງວດມີດັ່ງລຸ່ມນີ້:

| | *31 ມີນາ 2018*<br>*% ຕໍ່ປີ* | *31 ທັນວາ 2017*<br>*% ຕໍ່ປີ* |
|---|---|---|
| ເງິນຝາກກະແສລາຍວັນ | 0,00% - 1,00% | 0,00% - 0,80% |
| ເງິນຝາກປະຢັດ | 0,00% - 0,80% | 0,00% - 0,80% |
| ເງິກຝາກມີກໍານົດ | 0,80% - 4,07% | 0,80% - 4,00% |

## 16. ເງິນກູ້ໃຫ້ລູກຄ້າ

| | *31 ມີນາ 2018* *ລ້ານກີບ* | *31 ທັນວາ 2017* *ລ້ານກີບ* |
|---|---|---|
| ເງິນກູ້ໃຫ້ລູກຄ້າທັງໝົດ | 22.105.658 | 22.586.284 |
| ປະກອບມີ: | | |
| *ເງິນກູ້ທີ່ໄດ້ຮັບທຶນຈາກການກູ້ຢືມເງິນຈາກ ທຫລ (ບົດອະທິບາຍຊ້ອນທ້າຍເລກທີ 26)* | *1.685.999* | *1.685.999* |
| ດອກເບ້ຍຄ້າງຊໍາລະເງິນກູ້ຂອງລູກຄ້າ | 333.303 | 320.507 |
| ເງິນແຮຂາດທຶນຈາກການເສື່ອມຄ່າ *(ບົດອະທິບາຍຊ້ອນທ້າຍເລກທີ 17)* | (492.080) | (481.013) |
| | **21.946.881** | **22.425.778** |

ອັດຕາດອກເບ້ຍສໍາລັບເງິນກູ້ທຸລະກິດພາຍໃນໄລຍະມີ ດັ່ງລຸ່ມນີ້:

| | *ສໍາລັບໄລຍະສາມເດືອນສິ້ນສຸດວັນທີ 31 ມີນາ 2018* *ອັດຕາດອກເບ້ຍ* *% ຕໍ່ປີ* | *31 ທັນວາ 2017* *ອັດຕາດອກເບ້ຍ* *% ຕໍ່ປີ* |
|---|---|---|
| ເງິນກູ້ເປັນເງິນ ກີບ | 6,00% - 16,00% | 6,00% - 16,00% |
| ເງິນກູ້ເປັນເງິນ ໂດລາ | 2,00% - 16,00% | 2,00% - 16,00% |
| ເງິນກູ້ເປັນເງິນ ບາດ | 6,00% - 11,00% | 6,00% - 11,00% |

ເງິນກູ້ໄດ້ແຍກຕາມສະກຸນເງິນ:

| | *31 ມີນາ 2018* *ລ້ານກີບ* | *31 ທັນວາ 2017* *ລ້ານກີບ* |
|---|---|---|
| ເງິນກູ້ເປັນເງິນ ກີບ | 9.009.577 | 9.505.226 |
| ເງິນກູ້ເປັນເງິນ ໂດລາ | 10.060.043 | 10.127.657 |
| ເງິນກູ້ເປັນເງິນ ບາດ | 3.036.038 | 2.953.401 |
| | **22.105.658** | **22.586.284** |

ເງິນກູ້ໄດ້ແຍກຕາມມື້ຄົບກໍານົດເດີມ:

| | *31 ມີນາ 2018* *ລ້ານກີບ* | *31 ທັນວາ 2017* *ລ້ານກີບ* |
|---|---|---|
| ເງິນກູ້ໄລຍະສັ້ນ | 3.029.666 | 3.051.761 |
| ເງິນກູ້ໄລຍະກາງ | 12.297.280 | 12.900.769 |
| ເງິນກູ້ໄລຍະຍາວ | 6.778.711 | 6.633.754 |
| | **22.105.658** | **22.586.284** |

**16. ເງິນກູ້ໃຫ້ລູກຄ້າ** (ຕໍ່)

ຄັງເງິນກູ້ປະກອບດ້ວຍເງິນກູ້ໃຫ້ແກ່ແຕ່ລະຂະແໜງທຸລະກິດ ດັ່ງລຸ່ມນີ້:

| | *31 ມີນາ 2018* | | *31 ທັນວາ 2017* | |
|---|---|---|---|---|
| | *ລ້ານກີບ* | *%* | *ລ້ານກີບ* | *%* |
| ຂະແໜງ ອຸດສາຫະກຳ | 11.761.631 | 53,21% | 11.412.133 | 50,53% |
| ຂະແໜງ ກໍ່ສ້າງ | 2.598.116 | 11,75% | 3.435.675 | 15,21% |
| ຂະແໜງ ປະກອບວັດຖຸເຕັກນິກ | 86.717 | 0,39% | 91.064 | 0,40% |
| ຂະແໜງ ກະສິກຳ - ປ່າໄມ້ | 63.198 | 0,29% | 57.793 | 0,26% |
| ຂະແໜງ ການຄ້າ | 4.018.799 | 18,18% | 4.177.178 | 18,49% |
| ຂະແໜງ ຂົນສົ່ງໄປສະນີ | 652.996 | 2,95% | 654.372 | 2,90% |
| ຂະແໜງ ບໍລິການ | 2.533.161 | 11,46% | 2.395.102 | 10,60% |
| ຂະແໜງ ຫັດຖະກຳ | 3.303 | 0,01% | 3.052 | 0,01% |
| ຂະແໜງ ອື່ນໆ | 387.737 | 1,75% | 359.915 | 1,60% |
| | **22.105.658** | **100%** | **22.586.284** | **100%** |

**17. ເງິນແຮສຳລັບການຂາດທຶນຈາກການເສື່ອມຄ່າ**

ສ່ວນປ່ຽນແປງໃນເງິນແຮສຳລັບການຂາດທຶນຈາກການເສື່ອມຄ່າຂອງເງິນກູ້ໃຫ້ກັບລູກຄ້າ ສຳລັບໄລຍະສາມເດືອນ ສິ້ນສຸດວັນທີ 31 ມີນາ 2018 ມີດັ່ງລຸ່ມນີ້:

| | *ສຳລັບໄລຍະສາມເດືອນສິ້ນສຸດວັນທີ 31 ມີນາ 2018 ລ້ານກີບ* | *31 ທັນວາ 2017 ລ້ານກີບ* |
|---|---|---|
| **ຍອດເຫຼືອ ນະວັນທີ 1 ມັງກອນ** | **481.013** | **339.579** |
| ປ່ຽນແປງສຸດທິພາຍໃນໄລຍະ | 7.964 | 212.409 |
| ສະສາງໜີ້ທີ່ບໍ່ເກີດດອກອອກຜົນ | - | (76.987) |
| ສ່ວນຕ່າງຈາກອັດຕາແລກປ່ຽນ | 3.104 | 6.012 |
| **ຍອດເຫຼືອນະວັນທີ 31 ມີນາ** | **492.080** | **481.013** |

ລາຍລະອຽດເງິນແຮສຳລັບການເສື່ອມຄ່າຂອງເງິນກູ້ໃຫ້ກັບລູກຄ້າ ນະວັນທີ 31 ມີນາ 2018 ແລະ ວັນທີ 31 ທັນວາ 2017 ມີດັ່ງລຸ່ມນີ້:

| | *31 ມີນາ 2018* | | *31 ທັນວາ 2017* | |
|---|---|---|---|---|
| | *ຍອດເຫຼືອທ້າຍ ລ້ານກີບ* | *ຄ່າເສື່ອມ ລ້ານກີບ* | *ຍອດເຫຼືອທ້າຍ ລ້ານກີບ* | *ຄ່າເສື່ອມ ລ້ານກີບ* |
| ຄ່າເສື່ອມຈາກການປະເມີນເງິນກູ້ລາຍການໃຫຍ່ | 1.886.782 | 362.823 | 2.190.692 | 351.320 |
| ຄ່າເສື່ອມຈາກການປະເມີນເງິນກູ້ເປັນກຸ່ມ | 20.218.876 | 129.257 | 20.395.592 | 129.693 |
| | **22.105.658** | **492.080** | **22.586.284** | **481.013** |

## 18. ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ

| | *31 ມີນາ 2018*<br>*ລ້ານກີບ* | *31 ທັນວາ 2017*<br>*ລ້ານກີບ* |
|---|---|---|
| ຫລັກຊັບປະເພດທຶນຂອງ ບໍລິສັດ ຜະລິດໄຟຟ້າລາວ | 172.575 | 184.081 |
| ກອງທຶນເປີດ ຊີໄອເອັມບີ-ພຣິນຊິໂພລ ໂກລບອລ ໂທທອລ ຣິເທີນ (ກອງທຶນ CIMB-Principal) | - | 762 |
| | **172.575** | **184.843** |

## 19. ການລົງທຶນປະເພດຖືໄວ້ຈົນເຖິງມື້ຄົບກໍານົດ

| | *31 ມີນາ 2018*<br>*ລ້ານກີບ* | *31 ທັນວາ 2017*<br>*ລ້ານກີບ* |
|---|---|---|
| ມູນຄ່າຕາມວິທີຫຼຸດຕົ້ນທຶນລົງຂອງພັນທະບັດຄັງເງິນທີ່ອອກໂດຍກະຊວງການເງິນ | 2.261.551 | 2.160.594 |
| ມູນຄ່າຕາມວິທີຫຼຸດຕົ້ນທຶນລົງຂອງພັນທະບັດທີ່ອອກໂດຍກະຊວງການເງິນ | 67.291 | 68.944 |
| ມູນຄ່າຕາມວິທີຫຼຸດຕົ້ນທຶນລົງຂອງພັນທະບັດອື່ນໆທີ່ອອກໂດຍກະຊວງການເງິນ | 1.443.535 | 348.818 |
| | **3.772.376** | **2.578.356** |
| ຄ່າເສື່ອມມູນຄ່າຂອງການຫຼັກຊັບປະເພດຖືໄວ້ຈົນເຖິງມື້ຄົບກໍານົດ (*) | **(3.105)** | **(3.685)** |
| *- ຄ່າເສື່ອມມູນຄ່າຈາກພັນທະບັດຄັງເງິນທີ່ອອກໂດຍ ກະຊວງການເງິນ* | *(713)* | *(188)* |
| *- ຄ່າເສື່ອມມູນຄ່າຈາກພັນທະບັດທີ່ອອກໂດຍ ກະຊວງການເງິນ* | *(11)* | - |
| *- ຄ່າເສື່ອມມູນຄ່າຈາກພັນທະບັດອື່ນໆທີ່ອອກໂດຍ ກະຊວງການເງິນ* | *(2.381)* | *(3.497)* |
| | **3.769.271** | **2.574.671** |

(*): ການປ່ຽນແປງສຸດທິໃນການຂາດທຶນຈາກການເສື່ອມຄ່າຂອງ 580 ລ້ານກີບ ສໍາລັບໄລຍະສາມເດືອນສິ້ນສຸດວັນທີ 31 ມີນາ 2018 ແມ່ນບັນທຶກໃນໃບລາຍງານຜົນການດໍາເນີນງານສະເພາະກິດຈະການເປັນການເກັບຄືນເງິນແຮຄ່າເສື່ອມມູນຄ່າສໍາລັບຫຼັກຊັບປະເພດທີ່ຖືຄອງຈົນຄົບກໍານົດ.

## 19. ການລົງທຶນປະເພດຖືໄວ້ຈົນເຖິງມື້ຄົບກໍານົດ (ຕໍ່)

### *19.1 ພັນທະບັດຄັງເງິນ ທີ່ອອກໂດຍ ກະຊວງການເງິນ*

ພັນທະບັດທີ່ຈະຄົບກໍານົດຕາມວັນຄົບກໍານົດ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

| | *31 ມີນາ 2018* | | *31 ທັນວາ 2017* | |
|---|---|---|---|---|
| ວັນຄົບກໍານົດ | *ມູນຄ່າໜ້າພັນທະບັດ*<br>*ລ້ານກີບ* | *ມູນຄ່າຕາມ ວິທີຫຼຸດຕົ້ນທຶນລົງ*<br>*ລ້ານກີບ* | *ມູນຄ່າໜ້າພັນທະບັດ*<br>*ລ້ານກີບ* | *ມູນຄ່າຕາມ ວິທີຫຼຸດຕົ້ນທຶນລົງ*<br>*ລ້ານກີບ* |
| 1 ປີ ລົງມາ | 2.605.974 | 2.652.156 | 2.427.000 | 2.480.857 |
| 1 ປີ - 5 ປີ | 471.278 | 473.503 | 98.380 | 97.499 |
| ສູງກວ່າ 5 ປີ | 643.851 | 646.717 | - | - |
| | **3.721.103** | **3.772.376** | **2.525.380** | **2.578.356** |

## 20. ການລົງທຶນໃນບໍລິສັດໃນເຄືອ ແລະ ບໍລິສັດຮ່ວມທຶນ

| | *31 ມີນາ 2018* | | *31 ທັນວາ 2017* | |
|---|---|---|---|---|
| | *ມູນຄ່າລົງທຶນ*<br>*ລ້ານກີບ* | *ຄວາມເປັນເຈົ້າຂອງ*<br>*%* | *ມູນຄ່າລົງທຶນ*<br>*ລ້ານກີບ* | *ຄວາມເປັນເຈົ້າຂອງ*<br>*%* |
| **ການລົງທຶນໃນບໍລິສັດໃນເຄືອ** | | | | |
| ບໍລິສັດຫລັກຊັບ ທຄຕລ-ກທຈໍາກັດ | 70.000 | 70% | 70.000 | 70% |
| **ການລົງທຶນໃນການຮ່ວມທຶນ** | | | | |
| ທະນາຄານຮ່ວມທຸລະກິດລາວ-ຫວຽດ | 197.839 | 25% | 197.839 | 25% |
| ທະນາຄານລາວ-ຝຣັ່ງ ຈໍາກັດ | 138.000 | 46% | 138.000 | 46% |
| ທະນາຄານລາວ-ຈີນ ຈໍາກັດ | 147.000 | 49% | 147.000 | 49% |
| ບໍລິສັດປະກັນໄພລາວ-ຫວຽດ | 8.784 | 35% | 8.784 | 35% |
| | **561.623** | | **561.623** | |

- ບໍລິສັດຫລັກຊັບ ທຄຕລ-ກທ ຈໍາກັດ ເປັນທຸລະກິດໜຶ່ງທີ່ຈົດທະບຽນຢູ່ ສປປ ລາວ ແລະ ດໍາເນີນທຸລະກິດ ພາຍໃຕ້ໃບທະບຽນວິສະຫະກິດເລກທີ 180-10 ລົງວັນທີ 14 ທັນວາ 2010 ອອກໂດຍກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ແຫ່ງ ສປປ ລາວ, ວຽກງານຕົ້ນຕໍຂອງບໍລິສັດດັ່ງກ່າວ ແມ່ນສະໜອງການບໍລິການທາງດ້ານນາຍໜ້າ, ການຄ້າກໍາມະສິດ, ໃຫ້ຄໍາປຶກສາດ້ານການເງິນ ແລະ ການລົງທຶນໃນຫລັກຊັບ, ບໍລິການທາງດ້ານການຄຸ້ມຄອງ, ຄໍ້າປະກັນການອອກຮຸ້ນ ແລະ ບໍລິການອື່ນໆ.

## 20. ການລົງທຶນໃນບໍລິສັດໃນເຄືອ ແລະ ບໍລິສັດຮ່ວມທຶນ (ຕໍ່)

- ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ (LVB) ເປັນທຸລະກິດໜຶ່ງທີ່ໄດ້ຈົດທະບຽນຢູ່ ສປປ ລາວ, ເຊິ່ງມີສໍານັກງານໃຫຍ່ຕັ້ງຢູ່ ນະຄອນຫລວງວຽງຈັນ ແລະ ດໍາເນີນທຸລະກິດສະໜອງການບໍລິການທາງດ້ານທະນາຄານ. ເປັນບໍລິສັດທີ່ຮ່ວມທຶນກັບ ທະນາຄານເພື່ອການລົງທຶນ ແລະ ການພັດທະນາຂອງຫວຽດນາມ, ເຊິ່ງເປັນທະນາຄານທຸລະກິດລັດທີ່ດໍາເນີນທຸລະກິດຢູ່ ສສ ຫວຽດນາມ. LVB ດໍາເນີນທຸລະກິດພາຍໃຕ້ໃບອະນຸຍາດລົງທຶນການທະນາຄານ ລົງວັນທີ 31 ມີນາ 2000 ອອກໂດຍ ທະນາຄານແຫ່ງ ສປປ ລາວ ເປັນໄລຍະເວລາ 30 ປີ. ໃນປີ 2015, LVB ໄດ້ເພີ່ມທຶນຈົດທະບຽນເປັນ 791.357.560.000 ກີບ. ອັດຕາສ່ວນກໍາມະສິດຂອງທະນາຄານໃນ ທຮລ ພາຍຫຼັງທຶນເພີ່ມຂຶ້ນ 25% ອີງຕາມ ໃບອະນຸຍາດການລົງທຶນ ເລກທີ 004-15/KH-DDT4 ທີ່ອອກໂດຍ ກະຊວງ ແຜນການ ແລະ ການລົງທຶນ, ວັນທີ 24 ສິງຫາ 2015 ທຽບເທົ່າເງິນກີບເທົ່າກັບ 197.839.390.000 ກີບ.

- ທະນາຄານ ລາວ-ຝຣັ່ງ ຈໍາກັດ (BFL) ເປັນທຸລະກິດໜຶ່ງທີ່ໄດ້ຈົດທະບຽນຢູ່ ສປປ ລາວ ເຊິ່ງມີສໍານັກງານໃຫຍ່ຕັ້ງຢູ່ ນະຄອນຫລວງວຽງຈັນ ແລະ ສະໜອງການບໍລິການທາງດ້ານການທະນາຄານ. ທະນາຄານ ລາວ-ຝຣັ່ງ ຖືກສ້າງຂຶ້ນໂດຍໄດ້ຮ່ວມທຶນກັບ Cofibred Company Frances De La Bred ເຊິ່ງເປັນທະນາຄານທຸລະກິດລັດ ທີ່ດໍາເນີນທຸລະກິດຢູ່ ປາຣີ, ປະເທດ ຝຣັ່ງ. BFL ດໍາເນີນທຸລະກິດພາຍໃຕ້ໃບອະນຸຍາດລົງທຶນ ການທະນາຄານຊົ່ວຄາວ ລົງວັນທີ 01 ຕຸລາ 2009 ແລະ ໃບອະນຸຍາດຖາວອນ ລົງວັນທີ 16 ກໍລະກົດ 2010 ອອກໂດຍທະນາຄານແຫ່ງ ສປປ ລາວ. ທຶນຈົດທະບຽນຕາມກົດໝາຍຂອງທະນາຄານ BFL ແມ່ນ 20 ລ້ານໂດລາ ເຊິ່ງໄດ້ເພີ່ມເປັນ 37 ລ້ານໂດລາ, ອີງຕາມບົດບັນຍັດຂອງປະທານປະເທດອອກໃນ ວັນທີ 24 ກັນຍາ 2009 ແລະ ໜັງສືເລກທີ. 01/ທຫລ ລົງວັນທີ 28 ມັງກອນ 2010 ຈາກ ທຫລ. ນະວັນທີ 31 ມີນາ 2018 ທຄຕລ ໄດ້ປະກອບທຶນທັງໝົດໃນມູນຄ່າ 1.840.000 ໂດລາ ແລະ 122.854.960.000 ກີບ.

- ທະນາຄານ ລາວ-ຈີນ ຈໍາກັດ (LCNB) ເປັນທຸລະກິດທີ່ດໍາເນີນກ່ຽວກັບການບໍລິການດ້ານການທະນາຄານຢູ່ໃນ ສປປ ລາວ. ທະນາຄານລາວ-ຈີນ ເປັນທະນາຄານຮ່ວມທຶນກັບ ທະນາຄານ ຟູດ້ຽນ ຈີນ ເຊິ່ງແມ່ນທະນາຄານທຸລະກິດຂອງລັດທີ່ດໍາເນີນການຢູ່ປະເທດຈີນ. LCNB ດໍາເນີນທຸລະກິດ ພາຍໃຕ້ໃບອະນຸຍາດລົງທຶນການທະນາຄານ ລົງວັນທີ 20 ມັງກອນ 2014 ອອກໂດຍທະນາຄານແຫ່ງ ສປປ ລາວ. ທຶນຈົດທະບຽນຂອງ LCNB ແມ່ນ 300.000 ລ້ານກີບ ແລະ ນະວັນທີ 31 ມີນາ 2018 ຂາຮຸ້ນໄດ້ປະກອບທຶນຄົບຕາມຈໍານວນດັ່ງກ່າວ.

- ບໍລິສັດປະກັນໄພລາວຫວຽດ (LVI) ເປັນທຸລະກິດທີ່ຈົດທະບຽນເປັນບໍລິສັດຮ່ວມທຶນ ຢູ່ ສປປ ລາວ, ສະໜອງການບໍລິການທາງດ້ານການປະກັນໄພ ພາຍໃຕ້ໃບອະນຸຍາດການລົງທຶນເລກທີ 077/08/FIMC ອອກໂດຍຄະນະກໍາມະການຄຸ້ມຄອງການລົງທຶນຕ່າງປະເທດ, ລົງວັນທີ 09 ມິຖຸນາ 2008. ເປັນການຮ່ວມທຶນກັບບໍລິສັດຫຸ້ນສ່ວນປະກັນໄພ BIDV ແລະ ທະນາຄານຮ່ວມທຸລະກິດລາວຫວຽດ. ທຶນຈົດທະບຽນຂອງບໍລິສັດ ແມ່ນ 3.000.000 ໂດລາ ແລະ ຖືກຖອກໂດຍຂາຮຸ້ນຢ່າງເຕັມສ່ວນໃນວັນທີ 17 ກໍລະກົດ 2008. ໃນປີ 2013 ທະນາຄານໄດ້ປະກອບທຶນເພີ່ມເຕີ່ມ 180.000ໂດລາ ໃນວັນທີ 02 ກັນຍາ 2013. ນະວັນທີ 31 ມີນາ 2018 ທະນາຄານໄດ້ປະກອບທຶນທັງໝົດໃນມູນຄ່າ 1.050.000 ໂດລາ ຫຼື ທຽບເທົ່າກັບ 8.784 ລ້ານກີບ.

## 21. ຊັບສົມບັດ ແລະ ອຸປະກອນ

ການເຄື່ອນໄຫວຂອງຊັບສົມບັດ ແລະ ອຸປະກອນ ສຳລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 31 ມີນາ 2018 ມີດັ່ງລຸ່ມນີ້:

| | *ອາຄານ ແລະ ການປັບປຸງ* | *ອຸປະກອນ ຫ້ອງການ* | *ເຟີນີເຈີ້ ແລະ ເຄື່ອງຕິດຕັ້ງ* | *ພາຫະນະ* | *ລວມ* |
|---|---|---|---|---|---|
| **ຕົ້ນທຶນ:** | *ລ້ານກີບ* | *ລ້ານກີບ* | *ລ້ານກີບ* | *ລ້ານກີບ* | *ລ້ານກີບ* |
| ວັນທີ 1 ມັງກອນ 2018 | 475.636 | 128.158 | 37.239 | 19.926 | 660.959 |
| ຊື້ເພີ່ມໃໝ່ | 255 | 8.267 | 867 | 1.481 | 10.869 |
| ຈັດລ້າງອອກ | 255 | 8.267 | 867 | 1.481 | 10.869 |
| ສະສາງອອກ | (153) | (3.190) | (161) | - | (3.503) |
| ວັນທີ 31 ມີນາ 2018 | 475.738 | 133.235 | 37.945 | 21.407 | 668.325 |
| **ຄ່າຫຼຸ້ຍຫ້ຽນສະສົມ** | | | | | |
| ວັນທີ 1 ມັງກອນ 2018 | | | | | |
| ຫັກຄ່າຫຼຸ້ຍຫ້ຽນໃນງວດ | 111.302 | 62.442 | 22.517 | 8.461 | 204.722 |
| ຈັດລ້າງອອກ | 6.592 | 6.666 | 1.341 | 1.046 | 15.644 |
| ສະສາງອອກ | (101) | (3.087) | (130) | - | (3.318) |
| ວັນທີ 31 ມີນາ 2018 | 117.794 | 66.021 | 23.728 | 9.507 | 217.049 |
| **ມູນຄ່າຍັງເຫຼືອສຸດທິ:** | | | | | |
| ວັນທີ 1 ມັງກອນ 2018 | 364.334 | 65.716 | 14.722 | 11.465 | 456.237 |
| **ວັນທີ 31 ມີນາ 2018** | **357.944** | **67.214** | **14.218** | **11.900** | **451.276** |

## 22. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນສຳລັບໄລຍະສາມເດືອນ ສິ້ນສຸດ ວັນທີ 31 ມີນາ 2018 ມີດັ່ງລຸ່ມນີ້:

| | *ສິດນຳໃຊ້ທີ່ດິນ* | *ໂປຼແກຼມຄອມພິວເຕີ* | *ລວມ* |
|---|---|---|---|
| | *ລ້ານກີບ* | *ລ້ານກີບ* | *ລ້ານກີບ* |
| **ຕົ້ນທຶນ:** | | | |
| ນະວັນທີ 1 ມັງກອນ 2018 | 234.555 | 65.307 | 299.862 |
| ຊື້ເພີ່ມ | 3.037 | 58 | 3.095 |
| ຈົດລ້າງອອກ | 3.037 | 58 | 3.095 |
| ສະສາງອອກ | - | - | - |
| ວັນທີ 31 ມີນາ 2018 | 237.592 | 65.365 | 302.957 |
| **ຄ່າເສື່ອມສະສົມ:** | | | |
| ວັນທີ 1 ມັງກອນ 2018 | | | |
| ຫັກຄ່າເສື່ອມພາຍໃນງວດ | - | 52.280 | 52.280 |
| ຈົດລ້າງອອກ | | 3.267 | 3.267 |
| ສະສາງອອກ | - | - | - |
| ວັນທີ 31 ມີນາ 2018 | | 55.547 | 55.547 |
| **ມູນຄ່າຍັງເຫຼືອສຸດທິ:** | | | |
| ວັນທີ 1 ມັງກອນ 2018 | 234.555 | 13.027 | 247.582 |
| **ວັນທີ 31 ມີນາ 2018** | **237.592** | **9.818** | **247.409** |

## 23. ຊັບສິນອື່ນໆ

| | *31 ມີນາ 2018* | *31 ທັນວາ 2017* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ຊັບສິນມີໄວ້ເພື່ອຂາຍ | 243.939 | 216.228 |
| ເຄື່ອງໃຊ້ຫ້ອງການ ແລະ ອຸປະກອນອື່ນໆ | 2.655 | 7.520 |
| ແຊັກພວມຮຽກເກັບ | 75.285 | 19.179 |
| ສິ່ງປຸກສ້າງ ແລະ ຊັບສິນຄົງພວມກໍ່ສ້າງ (*) | 45.398 | 30.666 |
| ລາຍຈ່າຍລ່ວງໜ້າແບ່ງສ່ວນຈ່າຍ | 45.269 | 41.320 |
| ເງິນຈ່າຍລ່ວງໜ້າສຳລັບການດຳເນີນງານອື່ນໆ | 34.007 | 26.283 |
| ອື່ນໆ | 48.969 | 36.447 |
| | **495.522** | **377.643** |

## 23. ຊັບສິນອື່ນໆ (ຕໍ່)

(*) ການເຄື່ອນໄຫວຂອງສິ່ງປຸກສ້າງ ແລະ ຊັບສິນຄົງທີ່ພວມກໍ່ສ້າງສໍາລັບໄລຍະສາມເດືອນທີ່ສິ້ນສຸດ ວັນທີ 31 ມີນາ 2018 ມີດັ່ງນີ້:

| | *ສິດນໍາໃຊ້ທີ່ດິນ ລ້ານກີບ* | *ອາຄານ ແລະ ການປັບປຸງ ລ້ານກີບ* | *ອື່ນໆ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|---|
| ວັນທີ 1 ມັງກອນ 2018 | 3.474 | 6.762 | 20.430 | 30.666 |
| ຊື້ເພີ່ມ | 12 | 17.118 | 11.633 | 28.763 |
| ໂອນໄປຊັບສິນຄົງທີ່ | (3.037) | - | (10.205) | (13.242) |
| ໂອນໄປຊັບສິນອື່ນໆລໍຖ້າຂາຍ | - | (370) | (221) | (590) |
| ໂອນໄປຊັບສິນຄົງທີ່ອື່ນໆ | - | (159) | - | (159) |
| ຈົດລ້າງອອກ | - | (40) | - | (40) |
| **ວັນທີ 31 ມີນາ 2018** | **449** | **23.311** | **21.637** | **45.398** |

## 24. ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ

| | *31 ມີນາ 2018 ລ້ານກີບ* | *31 ທັນວາ 2017 ລ້ານກີບ* |
|---|---|---|
| **ເງິນຝາກກະແສລາຍວັນ** | **2.706.732** | **2.567.425** |
| - ເປັນເງິນກີບ | 1.190.826 | 1.231.231 |
| - ເປັນເງິນຕາຕ່າງປະເທດ | 1.515.906 | 1.336.194 |
| **ເງິນຝາກປະຢັດ** | **144.452** | **142.005** |
| - ເປັນເງິນກີບ | 28.616 | 37.762 |
| - ເປັນເງິນຕາຕ່າງປະເທດ | 115.836 | 104.243 |
| **ເງິນຝາກມີກໍານົດ** | **561.159** | **549.112** |
| - ເປັນເງິນກີບ | 60.607 | 52.335 |
| - ເປັນເງິນຕາຕ່າງປະເທດ | 500.552 | 496.777 |
| **ອື່ນໆ** | **25.056** | **14.141** |
| - ເປັນເງິນກີບ | 8.182 | 8.483 |
| - ເປັນເງິນຕາຕ່າງປະເທດ | 16.874 | 5.658 |
| | **3.437.399** | **3.272.683** |
| **ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ** | **4.563** | **2.863** |
| | **3.441.962** | **3.275.546** |

## 24. ໜີ້ຕ້ອງຈ່າຍໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ (ຕໍ່)

ອັດຕາດອກເບ້ຍສໍາລັບເງິນຝາກຈາກທະນາຄານ ແລະ ສະຖາບັນການເງິນອື່ນພາຍໃນງວດ ມີດັ່ງລຸ່ມນີ້:

| | *31 ມີນາ 2018*<br>*%ຕໍ່ປີ* | *31 ທັນວາ 2017*<br>*%ຕໍ່ປີ* |
|---|---|---|
| ເງິນຝາກກະແສລາຍວັນ | ບໍ່ມີອັດຕາດອກເບ້ຍ | ບໍ່ມີອັດຕາດອກເບ້ຍ |
| ເງິນຝາກປະຢັດ | ບໍ່ມີອັດຕາດອກເບ້ຍ | ບໍ່ມີອັດຕາດອກເບ້ຍ |
| ເງິນຝາກມີກໍານົດ | 0,00% - 6,00% | 0,00% - 6,00% |

## 25. ໜີ້ຕ້ອງສົ່ງລູກຄ້າ

| | *31 ມີນາ 2018*<br>*ລ້ານກີບ* | *31 ທັນວາ 2017*<br>*ລ້ານກີບ* |
|---|---|---|
| **ເງິນຝາກກະແສລາຍວັນ** | **5.346.387** | **6.237.693** |
| ເງິນຝາກກະແສລາຍວັນເປັນເງິນກີບ | 2.343.844 | 2.286.496 |
| ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ | 3.002.543 | 3.951.197 |
| **ເງິນຝາກປະຢັດ** | **12.014.845** | **11.310.417** |
| ເງິນຝາກປະຢັດເປັນເງິນກີບ | 5.395.180 | 4.935.329 |
| ເງິນຝາກປະຢັດເປັນເງິນຕາຕ່າງປະເທດ | 6.619.665 | 6.375.088 |
| **ເງິນຝາກກໍານົດ** | **10.770.116** | **10.415.844** |
| ເງິນຝາກມີກໍານົດເປັນເງິນກີບ | 6.197.029 | 6.101.844 |
| ເງິນຝາກມີກໍານົດເປັນເງິນຕາຕ່າງປະເທດ | 4.573.087 | 4.314.000 |
| **ເງິນຝາກມັດຈໍາ** | **101.039** | **173.659** |
| ເງິນຝາກມັດຈໍາເປັນເງິນກີບ | 20.576 | 17.454 |
| ເງິນຝາກມັດຈໍາເປັນເງິນຕາຕ່າງປະເທດ | 80.463 | 156.205 |
| **ໜີ້ຕ້ອງສົ່ງອື່ນໆ** | 165.348 | **108.578** |
| | **28.397.735** | **28.246.191** |
| **ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ** | **226.535** | **157.766** |
| | **28.624.270** | **28.403.957** |

ເງິນຝາກປະຢັດຈາກລູກຄ້າທີ່ເປັນສະກຸນເງິນ ກີບ, ໂດລາ, ບາດ ມີຂອບເຂດຂອງອັດຕາດອກເບ້ຍຢູ່ລະຫວ່າງ 1,25% – 1,89%, 0,90% - 1,15% ແລະ 0,45% – 0,90% ຕໍ່ປີ ຕາມລໍາດັບ.

ເງິນຝາກມີກໍານົດທີ່ເປັນສະກຸນເງິນ ກີບ, ໂດລາ, ບາດ ທີ່ມີກໍານົດ 3 ເດືອນ, 6 ເດືອນ,12 ເດືອນ ແລະ ສູງກວ່າ 1 ປີ ແມ່ນມີອັດຕາດອກເບ້ຍ ລະຫວ່າງ 2,00% – 14,00%, 1,05% - 8,00 % ແລະ 1,40% – 7,75% ຕໍ່ປີ ຕາມລໍາດັບ.

## 26. ເງິນກູ້ຢືມຈາກ ທະນາຄານອື່ນ

| | *31 ມີນາ 2018*<br>*ລ້ານກີບ* | *31 ທັນວາ 2017*<br>*ລ້ານກີບ* |
|---|---|---|
| ເງິນກູ້ຢືມໄລຍະຍາວຈາກທະນາຄານແຫ່ງ ສປປ ລາວ | 1.685.999 | 1.685.999 |
| ເງິນກູ້ຢືມຈາກທະນາຄານອື່ນ | 455.235 | 455.235 |
| ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ | 31.356 | 4.168 |
| | **2.172.590** | **2.145.402** |

ເງິນກູ້ຢືມຈາກທະນາຄານ ແຫ່ງ ສປປ ລາວ ນະວັນທີ 31 ມີນາ 2018 ລວມມີ:

- ເງິນກູ້ໄລຍະຍາວ ທີ່ມີຍອດເຫຼືອ 3.942.856 ໂດລາ (ມູນຄ່າເດີມຂອງເງິນກູ້ ແມ່ນ 9.200.000 ໂດລາ ໂດຍອັດຕາດອກເບ້ຍແມ່ນ 0,25% ຕໍ່ປີ) ຈຸດປະສົງແມ່ນເພື່ອ ລົງທຶນໃນ ທະນາຄານ ລາວ - ຝລັ່ງ ຈຳກັດ. ຕົ້ນທຶນເງິນກູ້ແມ່ນຈະຊຳລະເປັນປີ ເລີ່ມແຕ່ປີ 2010 ຫາ 2023 ສຳລັບດອກເບ້ຍແມ່ນຈ່າຍທຸກໆ 6 ເດືອນ.

- ເງິນກູ້ໄລຍະຍາວ ທີ່ມີຍອດເຫຼືອ 99.854.000 ໂດລາ (ສະກຸນເງິນເດີມແມ່ນ 100.000.000 ໂດລາ ໂດຍອັດຕາດອກເບ້ຍ 5,50% ຕໍ່ປີ.) ຈຸດປະສົງແມ່ນ ເພື່ອສະໜອງສິນເຊື່ອໃຫ້ ໂຄງການເຄື່ອນໄຟຟ້າທີ່ໄດ້ຮັບການສະໜັບສະໜູນຈາກລັດຖະບານ. ຕົ້ນທຶນເງິນກູ້ແມ່ນຊຳລະທຸກໆປີ ເລີ່ມຈາກວັນທີ 1 ມັງກອນ 2016 ຫາ ວັນທີ 27 ສິງຫາ 2025. ດອກເບ້ຍແມ່ນຈ່າຍທຸກໆ 6 ເດືອນ.

- ເງິນກູ້ໄລຍະຍາວ ທີ່ມີຍອດເຫຼືອ 99.900.000 ໂດລາ (ສະກຸນເງິນເດີມແມ່ນ 100.000.000 ໂດລາ ໂດຍມີອັດຕາດອກເບ້ຍ 5,30% ຕໍ່ປີ) ຈຸດປະສົງແມ່ນ ເພື່ອສະໜອງສິນເຊື່ອໃຫ້ ໂຄງການເຄື່ອນໄຟຟ້າທີ່ໄດ້ຮັບການສະໜັບສະໜູນຈາກລັດຖະບານ. ຕົ້ນທຶນແມ່ນຊຳລະທຸກໆປີເລີ່ມແຕ່ວັນທີ 3 ພຶດສະພາ 2016 ຫາ 3 ພຶດສະພາ 2026. ດອກເບ້ຍແມ່ນຈ່າຍທຸກໆ 6 ເດືອນ.

ເງິນກູ້ຢືມຈາກທະນາຄານອື່ນ ນະວັນທີ 31 ມີນາ 2018 ລວມມີ:

- ເງິນກູ້ຢືມໄລຍະສັ້ນໄລຍະເວລາ 1 ປີ ຈາກ ທະນາຄານ ICBC ສາຂາວຽງຈັນ ຈຳນວນ 15.000.000 ໂດລາ ໂດຍອັດຕາດອກເບ້ຍແມ່ນ 4,68% ຕໍ່ປີ. ຕົ້ນທຶນ ແລະ ດອກເບ້ຍແມ່ນຈະຈ່າຍເມື່ອຄົບກຳນົດ.

- ເງິນກູ້ຢືມໄລຍະສັ້ນໄລຍະເວລາ 1 ປີ ຈາກ ທະນາຄານ ICBC ສາຂາວຽງຈັນ ຈຳນວນ 40.000.000 ໂດລາ ໂດຍອັດຕາດອກເບ້ຍແມ່ນ 5,35% ຕໍ່ປີ. ຕົ້ນທຶນ ແລະ ດອກເບ້ຍແມ່ນຈະຈ່າຍເມື່ອຄົບກຳນົດ.

## 27. ອາກອນ

### *27.1 ອາກອນກໍາໄລວິສະຫະກິດ*

ອົງປະກອບສໍາຄັນຂອງລາຍຈ່າຍອາກອນ ມີດັ່ງລຸ່ມນີ້:

| | *ສໍາລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2018* | *ສໍາລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2017* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ລາຍຈ່າຍອາກອນກໍາໄລພາຍໃນງວດ | 52.219 | 17.424 |
| ລາຍຈ່າຍອາກອນກໍາໄລເຍື້ອນຊໍາລະ | 2.724 | 1.709 |
| **ລາຍຈ່າຍອາກອນທັງໝົດພາຍໄລຍະ** | **54.943** | **19.133** |

### *27.2 ໜີ້ຕ້ອງສົ່ງອາກອນ*

| | *31 ມີນາ 2018* | *31 ທັນວາ 2017* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ໜີ້ຕ້ອງສົ່ງອາກອນກໍາໄລ | 54.462 | 9.491 |
| ໜີ້ຕ້ອງສົ່ງອາກອນມູນຄ່າເພີ່ມ | 11.000 | 11.165 |
| ໜີ້ຕ້ອງສົ່ງອາກອນອື່ນໆ | 240 | - |
| | **65.702** | **20.656** |

## 27. ອາກອນ (ຕໍ່)

### *27.3 ອາກອນກໍາໄລໃນປີ* (ຕໍ່)

ທະນາຄານມີພັນທະຕ້ອງຈ່າຍອາກອນກໍາໄລໃນອັດຕາ 24% ຂອງກໍາໄລກ່ອນອາກອນ ໂດຍໃຫ້ສອດຄ່ອງກັບກົດໝາຍອາກອນ ສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015 ເຊິ່ງມີຜົນບັງຄັບໃຊ້ແຕ່ ຫຼື ຫຼັງຈາກວັນທີ 24 ພຶດສະພາ 2016.

ການຄິດໄລ່ຂອງອາກອນກໍາໄລ ສໍາລັບໄລຍະສາມເດືອນສິ້ນສຸດວັນທີ 31 ມີນາ 2018 ແລະ 31 ມີນາ 2017 ແມ່ນມີດັ່ງຕໍ່ໄປນີ້:

| | *ສໍາລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2018 ລ້ານກີບ* | *ສໍາລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2017 ລ້ານກີບ* |
|---|---|---|
| **ກໍາໄລກ່ອນຫັກອາກອນອີງຕາມ IFRS** | **192.295** | **80.257** |
| *ດັດແກ້ສໍາລັບ:* | | |
| - ບັນທຶກສ່ວນຕ່າງລະຫວ່າງມູນຄ່າຕາມບັນຊີຕາມ LAS ແລະ ມູນຄ່າຫຼຸດຕົ້ນທຶນຕາມ IFRS ຂອງພັນທະບັດ | (20.147) | (4.487) |
| - ສ່ວນຕ່າງໃນເງິນແຮຂາດທຶນເສື່ອມຄ່າລະຫວ່າງ LAS ແລະ IFRS ຂອງເງິນກູ້ໃຫ້ທະນາຄານ ແລະ ລູກຄ້າ | 43.779 | (16.104) |
| - ສ່ວນຕ່າງໃນເງິນອຸດໜູນສໍາລັບຜົນປະໂຫຍດພາຍຫຼັງອອກການລະຫວ່າງ LAS ແລະ IFRS | 2.411 | - |
| - ຕັດຕົ້ນທຶນເລີ່ມຕົ້ນວິສາຫະກິດເປັນລາຍຈ່າຍພາຍໃນງວດ | - | (2) |
| - ສ່ວນຜິດດ່ຽງສໍາລັບລາຍຈ່າຍຄ່າເສື່ອມໃນການລົງທຶນລະຫວ່າງ LAS ແລະ IFRS | 4.379 | (4.412) |
| **ລາຍຮັບທີ່ຖືກຄິດໄລ່ອາກອນອີງຕາມ LAS** | **222.717** | **55.252** |
| ເພີ່ມຂຶ້ນ/(ຫລຸດລົງ) | | |
| ລາຍຮັບຍົກເວັ້ນອາກອນກໍາໄລ (ເງິນປັນຜົນ) | (5.404) | (3.073) |
| ລາຍຈ່າຍທີ່ບໍ່ອະນຸຍາດໃຫ້ຫັກ | 39 | 52 |
| **ກໍາໄລຖືກເສຍອາກອນຕາມ LAS** | **217.353** | **52.232** |
| **ອາກອນກໍາໄລໃນອັດຕາ 24%** | **52.165** | **12.536** |
| **ລາຍຈ່າຍອາກອນທັງໝົດໃນງວດ** | **52.165** | **12.536** |
| ອາກອນກໍາໄລຕ້ອງຈ່າຍຕົ້ນງວດ | 9.491 | 24.300 |
| ດັດແກ້ອື່ນໆ | 53 | (154) |
| ອາກອນທີ່ຈ່າຍພາຍໃນງວດ | (7.247) | (15.909) |
| **ອາກອນກໍາໄລຕ້ອງຈ່າຍທ້າຍງວດ** | **54.462** | **20.773** |

## 27. ອາກອນ (ຕໍ່)

### *27.3 ອາກອນກໍາໄລໃນປີ* (ຕໍ່)

ການແຈ້ງອາກອນຂອງທະນາຄານຕ້ອງໄດ້ຮັບການກວດກາໂດຍກົມສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນແມ່ນຖືກນໍາໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈໍານວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນສະເພາະກິດຈະການ ສໍາລັບປີອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງຂອງກົມສ່ວຍສາອາກອນ.

### *27.4 ຊັບສິນ/(ໜີ້ສິນ) ອາກອນເຍື້ອນຊໍາລະ*

| | *ຊັບສິນອາກອນ ເຍື້ອນຊໍາລະ (ອັດຕາ ອາກອນ 24 %)*<br>*ລ້ານກີບ* | *ໜີ້ສິນອາກອນ ເຍື້ອນຊໍາລະ (ອັດຕາ ອາກອນ 24 %)*<br>*ລ້ານກີບ* | *ຊັບສິນ/ (ໜີ້ສິນ) ອາກອນ ເຍື້ອນຊໍາລະສຸດທິ*<br>*ລ້ານກີບ* |
|---|---|---|---|
| **ຍອດເຫຼືອ ວັນທີ 1 ມັງກອນ 2018** | 17.955 | (13.576) | 4.379 |
| **ເພີ່ມຂຶ້ນໃນໄລຍະເນື່ອງຈາກ:** | | | |
| ສ່ວນປ່ຽນແປງໃນມູນຄ່າຍຸດຕິທໍາຂອງການລົງທຶນການເງິນມີໄວ້ເພື່ອຂາຍ | 2.071 | - | 2.071 |
| ສ່ວນຕ່າງຊົ່ວຄາວລະຫວ່າງອາກອນກໍາໄລພາຍໃຕ້ LAS ແລະ IFRS | (13.231) | 11.197 | (2.034) |
| **ນະວັນທີ 31 ມີນາ 2018** | **6.795** | **(2.379)** | **4.416** |

## 28. ໜີ້ສິນອື່ນໆ

| | *31 ມີນາ 2018*<br>*ລ້ານກີບ* | *31 ທັນວາ 2017*<br>*ລ້ານກີບ* |
|---|---|---|
| ໜີ້ຕ້ອງສົ່ງພະນັກງານ | 45.017 | 66.730 |
| ໜີ້ຕ້ອງສົ່ງຜູ່ສະໜອງ | 19.587 | 20.031 |
| ແຜນການກໍານົດຜົນປະໂຫຍດຫຼັງອອກການ | 67.560 | 65.149 |
| ອື່ນໆ | 63.748 | 58.508 |
| | **195.912** | **210.418** |

**28. ໜີ້ສິນອື່ນໆ** (ຕໍ່)

(*) ແຜນການກໍານົດຜົນປະໂຫຍດຫຼັງອອກການ

ປ່ຽນແປງໃນແຜນການກໍານົດຜົນປະໂຫຍດຫຼັງອອກການມີດັ່ງລຸ່ມນີ້:

| | *ຄ່າບໍລິການທີ່ຜ່ານມາ ລ້ານກີບ* | *ຄ່າບໍລິການນະປະຈຸບັນ ລ້ານກີບ* | *ລາຍຈ່າຍດອກເບ້ຍ ລ້ານກີບ* | *ລາຍຈ່າຍຜົນປະໂຫຍດ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|---|---|
| ນະວັນທີ 1 ມັງກອນ 2018 | 59.458 | 4.298 | 3.899 | (2.506) | 65.149 |
| ຈັດສ້າງພາຍໃນງວດ | - | 2.358 | 53 | - | 2.411 |
| **ນະວັນທີ 31 ມີນາ 2018** | **59.458** | **6.656** | **3.952** | **(2.506)** | **67.560** |

ລາຍຈ່າຍທາງດ້ານຜົນປະໂຫຍດສຸດທິ (ຖືກຮັບຮູບໃນກໍາໄລ ແລະ ຂາດທຶນ):

| | *ສໍາລັບໄລຍະສາມເດືອນສິ້ນສຸດວັນທີ 31 ມີນາ 2018 ລ້ານກີບ* | *31 ທັນວາ 2017 ລ້ານກີບ* |
|---|---|---|
| ຄ່າບໍລິການທີ່ຜ່ານມາ | - | 59.458 |
| ຄ່າບໍລິການນະປະຈຸບັນ | 2.358 | 4.298 |
| ລາຍຈ່າຍດອກເບ້ຍ | 53 | 3.899 |
| | **2.411** | **67.655** |

ກໍານົດແຜນປະໂຫຍດຕໍ່ການເຮັດວຽກຫຼັງອອກຈາກວຽກຈະຖືກກໍານົດໂດຍໃຊ້ການປະເມີນຕາມຄວາມເປັນຈິງ. ການປະເມີນຕາມຄວາມເປັນຈິງທີ່ກ່ຽວຂ້ອງກັບການຕັ້ງສົມມຸດຖານຕ່າງໆ ທີ່ອາດແຕກຕ່າງໄປຈາກການພັດທະນາທີ່ເກີດຂຶ້ນຈິງໃນອະນາຄົດ ເຊິ່ງລວມທັງການກໍານົດອັດຕາສ່ວນຫຼຸດ,ການຂຶ້ນເງິນເດືອນໃນອະນາຄົດ ແລະ ອັດຕາການໝູນວຽນຂອງພະນັກງານ ເນື່ອງຈາກຄວາມຊັບຊ້ອນທີ່ກ່ຽວຂ້ອງກັບການປະເມີນມູນຄ່າ ແລະ ລັກສະນະໃນໄລຍະຍາວຂອງແຜນກໍານົດປະໂຫຍດທີ່ໄດ້ຮັບຫຼັງການຈ້າງງານມີຄວາມອ່ອນໄຫວຕໍ່ການປ່ຽນແປງໃນສົມມຸດຖານເຫຼົ່ານີ້ ສົມມຸດຖານທັງໝົດໄດ້ຮັບການທົບທວນຄືນໃນທຸກມື້ທີ່ລາຍງານ.

ປັດໄຈທີ່ມີການປ່ຽນແປງຫຼາຍທີ່ສຸດຄືອັດຕາການຫຼຸດລົງທີ່ເໝາະສົມກັບຝ່າຍບໍລິຫານພິຈາລະນາອັດຕາດອກເບ້ຍຂອງພັນທະບັດລັດຖະບານເປັນສະກຸນເງິນທີ່ສອດຄ່ອງກັບສະກຸນເງິນພາລະຜູກມັດຜົນປະໂຫຍດຂອງພະນັກງານຫຼັງອອກການ ແລະ ໄດ້ຮັບການພິຈາລະນາໂດຍອີງຕາມເສັ້ນອັດຕາຜົນຕອບແທນໃຫ້ສອດຄ່ອງກັບໄລຍະເວລາທີ່ຄາດວ່າຈະໄດ້ກໍານົດພາລະຜູກມັດຕາມແຜນຜົນປະໂຫຍດ.

## 28. ໜີ້ສິນອື່ນໆ (ຕໍ່)

ຂໍ້ສົມມຸດຖານຫຼັກທີ່ໃຊ້ໃນການກໍານົດພາລະຜູກມັດຜົນປະໂຫຍດຂອງພະນັກງານຫຼັງອອກຈາກງານສໍາລັບແຜນການຂອງທະນາຄານມີດັ່ງຕໍ່ໄປນີ້.

| | *31 ມີນາ 2018* | *31 ທັນວາ 2017* |
|---|---|---|
| | *%* | *%* |
| ອັດຕາສ່ວນຫຼຸດ | 5,00 - 8,77 | 5,00 - 8,77 |
| ການເພີ່ມຂຶ້ນເງິນເດືອນໃນອະນາຄົດ | 0,91 | 0,91 |
| ອັກຕາພະນັກງານລາອອກ | 0,00 | 0,00 |

ການວິເຄາະຄວາມອ່ອນໄຫວທາງດ້ານປະລິມານສໍາລັບຂໍ້ສົມມຸດຖານທີ່ສໍາຄັນ ນະວັນທີ 31 ທັນວາ ແມ່ນສະແດງດັ່ງລຸ່ມນີ້:

| | *31 ມີນາ 2018* | *31 ທັນວາ 2017* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ການເພີ່ມຂຶ້ນເງິນເດືອນໃນອະນາຄົດ | | |
| ເພີ່ມຂຶ້ນ 50 ຈຸດ | (2.532) | (5.935) |
| ຫຼຸດລົງ 50 ຈຸດ | 2.290 | 6.844 |

## 29. ທຶນຈົດທະບຽນ

ບໍ່ມີການປ່ຽນແປງໃນທຶນຈົດທະບຽນ ພາຍໃນໄລຍະສາມເດືອນ ສິ້ນສຸດວັນທີ 31 ມີນາ 2018

## 30. ຄັງສະສົມຕາມລະບຽບການ ແລະ ຄັງສະສົມອື່ນໆ

ບໍ່ມີການປ່ຽນແປງໃນຄັງສະສົມຕາມລະບຽບການ, ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆ ພາຍໃນໄລຍະສາມເດືອນ ສິ້ນສຸດ 31 ມີນາ 2018.

ພາຍໃຕ້ຂໍ້ກໍານົດຂອງກົດໝາຍທະນາຄານທຸລະກິດ, ສະບັບລົງວັນທີ 16 ມັງກອນ 2007 ໄດ້ກໍານົດໃຫ້ ທະນາຄານທຸລະກິດຕ່າງໆຕ້ອງໄດ້ແບ່ງສ່ວນຂອງກໍາໄລຫຼັງອາກອນເພື່ອເຂົ້າຄັງແຮຕ່າງໆດັ່ງນີ້:

- ຄັງສະສົມຕາມລະບຽບການ
- ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆ

ອີງຕາມຂໍ້ກໍານົດຄວາມພຽງພໍຂອງທຶນ ເລກທີ 01/ທຫລ ສະບັບລົງວັນທີ 28 ສິງຫາ 2001 ອອກໂດຍຜູ້ວ່າການຂອງ ທະນາຄານແຫ່ງ ສປປ ລາວ ແລະ ຂໍ້ກໍານົດທີ່ກ່ຽວຂ້ອງອື່ນໆ, ທະນາຄານທຸລະກິດຕ້ອງໄດ້ແບ່ງສ່ວນຂອງກໍາໄລຫຼັງອາກອນຕາມຄວາມເໝາະສົມຢ່າງໜ້ອຍໃນອັດຕາ 5% ກໍາໄລຫຼັງອາກອນແຕ່ລະປີ, ຫຼັງຈາກຫັກຄ່າສູນເສຍໃຫ້ກອງທຶນສະສົມທີ່ໄດ້ກໍານົດໄວ້ຈົນທຶນດັ່ງກ່າວຮອດ 10% ຂອງທຶນຊັ້ນ 1. ຕາມການຮຽກຮ້ອງນີ້, ການບໍລິຫານຈະຕັດສິນອັດຕາສ່ວນຕາມແຕ່ລະປີ. ກອງທຶນໃນການຂະຫຍາຍທຸລະກິດ ແລະ ກອງທຶນອື່ນໆຈະຖືກສ້າງຂຶ້ນຕາມການຕັດສິນໃຈຂອງຄະນະກໍາມະການ.

## 31. ເງິນແຮສຳລັບຫຼັກຊັບມີໄວ້ເພື່ອຂາຍ

| | *ສຳລັບໄລຍະສາມເດືອນ ສິ້ນສຸດວັນທີ 31 ມີນາ 2018* | *ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2017* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ຍອດຍົກມາ | 2.186 | 8.014 |
| ສ່ວນປ່ຽນແປງສຸດທິໃນມູນຄ່າຍຸດຕິທຳຂອງ ການລົງທຶນການເງິນ ມີໄວ້ເພື່ອຂາຍ | (8.744) | (5.828) |
| | **(6.558)** | **2.186** |

## 32. ລາຍລະອຽດເພີ່ມເຕີມກ່ຽວກັບກະແສເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດລວມຢູ່ໃນໃບລາຍງານກະແສເງິນສົດສະເພາະກິດຈະການ ປະກອບມີມູນຄ່າຂອງເອກະສານລາຍງານຖານະທາງການເງິນສະເພາະກິດຈະການ ເຊິ່ງມີລາຍລະອຽດດັ່ງນີ້:

| | *31 ມີນາ 2018* | *31 ທັນວາ 2017* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ເງິນສົດ ແລະ ທຽບເທົ່າເງິນສົດໃນກຳມື | 2.120.565 | 1.911.462 |
| ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງ ສປປ ລາວ | 2.042.795 | 2.547.888 |
| ເງິນຝາກກະແສລາຍວັນຢູ່ທະນາຄານອື່ນໆ | 1.763.369 | 2.268.720 |
| ເງິນຝາກມີກຳນົດ ພາຍໃນ 90 ມື້ | 1.032.910 | 587.088 |
| | **6.959.639** | **7.315.158** |

## 33. ໜີ້ສິນ ແລະ ຄໍາໝັ້ນສັນຍາທີ່ອາດເກີດຂຶ້ນ

| | *31 ມີນາ 2018* | *31 ທັນວາ 2017* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ໜັງສືຄໍ້າປະກັນທາງການເງິນ | 342.308 | 312.618 |
| ໜັງສືສິນເຊື່ອກັບທີ່ | 117.952 | 242.997 |
| ໜັງສືສິນເຊື່ອເບື້ອນຊໍາລະ | 150.266 | 195.651 |
| ວົງເງິນສິນເຊື່ອໃຫ້ແກ່ລູກຄ້າ | 3.954.059 | 3.488.189 |
| ວົງເງິນສິນເຊື່ອໃຫ້ແກ່ທະນາຄານ | 548 | 548 |
| | **4.565.133** | **4.240.003** |

*ການຄໍ້າປະກັນທາງການເງິນ*

ໜັງສືສິນເຊື່ອ, ໜັງສືຄໍ້າປະກັນ (ລວມທັງໜັງສືສິນເຊື່ອເພື່ອຄໍ້າປະກັນ) ແລະ ໜັງສືໃດໜຶ່ງທີ່ເຮັດໃຫ້ທະນາຄານຕ້ອງເປັນຜູ້ຈ່າຍເງິນແທນລູກຄ້າໃນກໍລະນີທີ່ລູກຄ້າຜິດສັນຍາ. ໜັງສືຄໍ້າປະກັນ ແລະ ໜັງສືສິນເຊື່ອເພື່ອຄໍ້າປະກັນ ຖືວ່າມີຄວາມສ່ຽງຄ້າຍຄືກັບເງິນກູ້. ໜັງສືຄໍ້າປະກັນສາມາດເຮັດເປັນຮູບແບບໃບບິນແລກປ່ຽນ ຫຼື ໃນຮູບແບບໜັງສືສິນເຊື່ອບໍ່ສາມາດຖອນຄືນໄດ້, ໜັງສືຄໍ້າປະກັນເງິນລ່ວງໜ້າ ແລະ ໜັງສືຮັບຮອງໜີ້ຈາກບິນສ່ວນຫລຸດ (ລວມທັງໜັງສືສິນເຊື່ອເພື່ອຄໍ້າປະກັນ).

*ຂໍ້ຜູກພັນຍັງບໍ່ໄດ້ຖືກຖອນ*

ບັນດາຂໍ້ຜູກພັນສໍາລັບຕໍ່ອາຍຸສັນຍາສິນເຊື່ອແມ່ນມີໄວ້ສໍາລັບເງິນກູ້ ແລະ ເງິນກູ້ໝູນວຽນ. ຂໍ້ຜູກພັນໂດຍທົ່ວໄປມີມື້ຄົບກໍານົດທີ່ໄດ້ກໍານົດໄວ້, ຫຼື ສາເຫດຂອງການຢຸດຕິສັນຍາອື່ນໆ. ດັ່ງນັ້ນ, ຂໍ້ຜູກພັນອາດຈະໝົດກໍານົດໂດຍທີ່ຍັງບໍ່ໄດ້ຖືກຖອນ, ມູນຄ່າໃນສັນຍາທັງໝົດບໍ່ຈໍາເປັນຕ້ອງລາຍງານຢູ່ໃນລາຍງານກະແສເງິນສົດ.

ເຖິງຢ່າງໃດກໍຕາມ, ໂອກາດຄ່າເສື່ອມໜີ້ເສຍຈະເກີດຂຶ້ນແມ່ນຕໍ່າກວ່າມູນຄ່າທັງໝົດຂອງບັນດາຂໍ້ຜູກພັນທີ່ຍັງບໍ່ໄດ້ຖືກນໍາໃຊ້. ເນື່ອງຈາກວ່າ, ຂໍ້ຜູກພັນໃນການຕໍ່ອາຍຸສິນເຊື່ອແມ່ນຄວາມບັງເອີນ ໃນເມື່ອລູກຄ້າຍັງຮັກສາມາດຕະຖານສະເພາະທີ່ໄດ້ກໍານົດໄວ້. ທະນາຄານຕິດຕາມມື້ຄົບກໍານົດຂອງຂໍ້ຜູກພັນສິນເຊື່ອ, ເພາະວ່າຂໍ້ຜູກພັນທີ່ມີອາຍຸສັນຍາທີ່ຍາວນານ ແມ່ນມີຄວາມສ່ຽງຫລາຍກວ່າ ຂໍ້ຜູກພັນທີ່ມີອາຍຸສັນຍາສັ້ນ.

*ສັນຍາເຊົ່າຊື້*

ວັນທີ 31 ມີນາ 2018, ທະນາຄານບໍ່ໄດ້ເຊັນສັນຍາເຊົ່າໃນນາມທີ່ເປັນທັງຜູ້ໃຫ້ເຊົ່າ ຫຼື ຜູ້ເຊົ່າ ທີ່ຈະມີຜົນຕໍ່ກະແສເງິນສົດເຂົ້າ - ອອກ ໃນອະນາຄົດ.

## 34. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

*ການເຄື່ອນໄຫວກັບຄະນະອໍານວຍການ ແລະ ສະພາບໍລິຫານຄົນສໍາຄັນຂອງທະນາຄານ*

ຜົນຕອບແທນໃຫ້ແກ່ສະມາຊິກສະພາບໍລິຫານ ແລະ ຄະນະອໍານວຍມີດັ່ງນີ້:

| | *ສໍາລັບໄລຍະສາມເດືອນສິ້ນສຸດ ວັນທີ 31 ມີນາ 2018 ລ້ານກີບ* | *ສໍາລັບໄລຍະສາມເດືອນສິ້ນສຸດ ວັນທີ 31 ມີນາ 2017 ລ້ານກີບ* |
|---|---|---|
| ເງິນເດືອນ | 365 | 394 |
| ເງິນໂບນັດ | 264 | - |
| ເງິນເບ້ຍລ້ຽງຕໍາແໜ່ງ | 290 | 333 |
| | **919** | **726** |

ຍອດເຫຼືອທີ່ສໍາຄັນທີ່ກ່ຽວຂ້ອງກັບພາກສ່ວນທີ່ກ່ຽວຂ້ອງ ພາຍໃນງວດ ສໍາລັບໄລຍະສາມເດືອນສິ້ນສຸດວັນທີ 31 ມີນາ 2018 ມີລາຍລະອຽດດີດັ່ງລຸ່ມນີ້:

| *ພາກສ່ວນທີ່ກ່ຽວຂ້ອງ* | *ບົດອະທິບາຍ ຊ້ອນທ້າຍ* | *ລາຍການເຄື່ອນໄຫວ* | *ໜີ້ຕ້ອງຮັບ ລ້ານກີບ* | *ໜີ້ຕ້ອງສົ່ງ ລ້ານກີບ* |
|---|---|---|---|---|
| ທະນາຄານແຫ່ງ ສປປ ລາວ | *(i)* | ລາຍຈ່າຍດອກເບ້ຍຈາກເງິນກູ້ຢືມ ຈາກ ທຫລ | - | 22.488 |
| ກະຊວງການເງິນຂອງ ສປປ ລາວ | *(ii)* | ລາຍຮັບດອກເບ້ຍຈາກການລົງທຶນ ໃນພັນທະບັດຂອງກະຊວງການເງິນ | 35.382 | - |

## 34. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

*ການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງອື່ນໆ* (ຕໍ່)

ຍອດເຫຼືອທີ່ສໍາຄັນທີ່ກ່ຽວຂ້ອງກັບພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ມີນາ 2018 ມີລາຍລະອຽດຄືດັ່ງລຸ່ມນີ້:

| *ພາກສ່ວນທີ່ກ່ຽວຂ້ອງ* | *ບົດອະທິບາຍຊ້ອນທ້າຍ* | *ລາຍການເຄື່ອນໄຫວ* | *ໜີ້ຕ້ອງຮັບ ລ້ານກີບ* | *ໜີ້ຕ້ອງສົ່ງ ລ້ານກີບ* |
|---|---|---|---|---|
| ທະນາຄານ ແຫ່ງ ສປປ ລາວ | *(i)* | ເງິນກູ້ຢືມ ແລະ ດອກເບ້ຍຄ້າງຮັບຈາກ ທຫລ | - | 1.708.487 |
| | | ເງິນຝາກກະແສລາຍວັນ ຂອງ ທຄຕລ ຢູ່ ທຫລ | 2.042.795 | - |
| | | ເງິນຝາກພາກບັງຄັບ ຂອງ ທຄຕລ ຢູ່ ທຫລ | 1.344.975 | - |
| ກະຊວງການເງິນ | *(ii)* | ລົງທຶນໃນພັນທະບັດຂອງ ກະຊວງການເງິນ (ຕົ້ນທຶນ) | 3.721.103 | - |
| | | ດອກເບ້ຍຄ້າງຮັບ | 65.442 | - |
| ບໍລິສັດ ຫຼັກຊັບ ທຄຕລ-ກທ | *(iii)* | ບັນຊີເງິນຝາກກະແສລາຍວັນ | - | 375 |
| ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ | *(iv)* | ບັນຊີເງິນຝາກກະແສລາຍວັນ | 441.745 | 499.554 |
| | *(iv)* | ບັນຊີເງິນຝາກມີກໍານົດ | 120.000 | - |
| ທະນາຄານ ລາວ-ຝຣັ່ງ | *(iv)* | ບັນຊີເງິນຝາກມີກໍານົດ | - | 41.673 |
| ທະນາຄານ ລາວ-ຈີນ | *(iv)* | ບັນຊີເງິນຝາກກະແສລາຍວັນ | - | 7.379 |

*(i)* ຜູ່ຄຸ້ມຄອງໂດຍກົງ
*(ii)* ເຈົ້າຂອງໂດຍກົງ
*(iii)* ບໍລິສັດໃນເຄືອ
*(iv)* ບໍລິສັດຮ່ວມທຶນ

## 35. ລາຍໄດ້ຕໍ່ຮຸ້ນ

ມູນຄ່າຂອງລາຍໄດ້ຕໍ່ຮຸ້ນ ແມ່ນຄິດໄລ່ຈາກຜົນຫານລະຫວ່າງ ກໍາໄລຫຼັງຫັກອາກອນທີ່ຄາດວ່າຈະຕ້ອງຈ່າຍໃຫ້ກັບຜູ້ຖືຮຸ້ນສາມັນຂອງທະນາຄານ ກັບ ຈໍານວນສະເລ່ຍຂອງຮຸ້ນສາມັນທີ່ຍັງເຫຼືອພາຍໃນ.

ລາຍການດັ່ງລຸ່ມນີ້ສະແດງໃຫ້ເຫັນຂໍ້ມູນ ທີ່ໃຊ້ເຂົ້າໃນການຄິດໄລ່ ລາຍໄດ້ຕໍ່ຮຸ້ນ:

| | *ສໍາລັບໄລຍະສາມ ເດືອນສິ້ນສຸດວັນທີ 31 ມີນາ 2018* | *ສໍາລັບໄລຍະ 3 ເດືອນສິ້ນສຸດວັນທີ 31 ມີນາ 2017* |
|---|---|---|
| ກໍາໄລສຸດທິຫຼັງຫັກອາກອນທີ່ຄາດວ່າຈະຕ້ອງໄດ້ຈ່າຍໃຫ້ກັບຜູ້ຖືຮຸ້ນສາມັນບົນພື້ນຖານລາຍໄດ້ຕໍ່ຮຸ້ນທົ່ວໄປ (ລ້ານກີບ) | 137.352 | 61.124 |
| ຈໍານວນສະເລ່ຍຂອງຮຸ້ນສາມັນສໍາລັບລາຍໄດ້ພື້ນຖານຕໍ່ຮຸ້ນຫົວ) (ໜ່ວຍ | 207.723.300 | 136.577.600 |
| ມູນຄ່າຕໍ່ຮຸ້ນ (ກີບ) | 5.000 | 5.000 |
| ກໍາໄລຕໍ່ຮຸ້ນ (ກີບ) | 661 | 448 |

## 36. ນະໂຍບາຍບໍລິຫານຄວາມສ່ຽງ

***ຄໍານໍາ***

ຄວາມສ່ຽງໝາຍເຖິງຄວາມສ່ຽງໃນຕົວທີ່ເກີດຂຶ້ນກັບກິດຈະກໍາຂອງທະນາຄານ ໂດຍຜ່ານຕົວຊີ້ບອກທີ່ຊັດເຈນ, ຜ່ານການວັດແທກ ແລະ ການຄວບຄຸມ, ຂອບເຂດຄວາມສ່ຽງ ແລະ ການຄຸ້ມຄອງອື່ນໆ. ການບໍລິຫານຄວາມສ່ຽງ ແມ່ນສິ່ງທີ່ສໍາຄັນຕໍ່ຄວາມສາມາດສ້າງກໍາໄລຢ່າງຕໍ່ເນື່ອງຂອງທະນາຄານ ແລະ ພະນັກງານແຕ່ລະຄົນພາຍໃນທະນາຄານ ແມ່ນຕ້ອງຮັບຜິດຊອບຕໍ່ຄວາມສ່ຽງທີ່ເກີດຂຶ້ນ ເຊິ່ງກ່ຽວຂ້ອງກັບໜ້າທີ່ຂອງຕົນ.

ຈຸດປະສົງສໍາຄັນຂອງທະນາຄານໃນການບໍລິຫານຄວາມສ່ຽງແມ່ນເພື່ອໃຫ້ສອດຄ່ອງກັບລະບຽບຂອງທະນາຄານກາງ ແລະ ອີກເຫດຜົນໜຶ່ງແມ່ນຍ້ອນທະນາຄານໄດ້ຮັບຮູ້ເຖິງຄວາມສໍາຄັນຂອງການບໍລິຫານຄວາມສ່ຽງເພື່ອໃຫ້ສອດຄ່ອງຕາມການປະຕິບັດຂອງມາດຕະຖານສາກົນທີ່ດີທີ່ສຸດໃນການບໍລິຫານຄວາມສ່ຽງ. ຄະນະບໍລິຫານ ແລະ ຄະນະອໍານວຍການ, ພ້ອມດ້ວຍການສະໜັບສະໜູນຈາກຄະນະກໍາມະການບໍລິຫານຊັບສິນ ແລະ ໜີ້ສິນ ແມ່ນກໍາລັງກໍານົດຕົວຜັນແປທີ່ຊັດເຈນຂອງຄວາມສ່ຽງທີ່ສາມາດຍອມຮັບໄດ້ຂອງທະນາຄານ ແລະ ຄວບຄຸມການປະຕິບັດທີ່ກົງກັນຂ້າມກັບຕົວຜັນແປນີ້.

ສະພາໄດ້ແຕ່ງຕັ້ງຄະນະກໍາມະການບໍລິຫານຊັບສິນ ແລະ ໜີ້ສິນ ເຊິ່ງຮັບຜິດຊອບກ່ຽວກັບການຄວບຄຸມການຈັດການຄວາມສ່ຽງໂດຍລວມຂອງທະນາຄານ.

ທະນາຄານມີຄວາມສ່ຽງທາງດ້ານສິນເຊື່ອ, ຄວາມສ່ຽງສະພາບຄ່ອງ ແລະ ຄວາມສ່ຽງທາງດ້ານຕະຫລາດ, ຫລັງຈາກນັ້ນໄດ້ແບ່ງອອກເປັນກຸ່ມຄວາມສ່ຽງຍ່ອຍຄື: ຄວາມສ່ຽງການຄ້າ ແລະ ຄວາມສ່ຽງບໍ່ແມ່ນການຄ້າ. ນອກນັ້ນ, ທະນາຄານຍັງມີຄວາມສ່ຽງອື່ນໆອີກທີ່ເກີດຈາກການດໍາເນີນງານ.

ຂະບວນການໃນການຄຸ້ມຄອງຄວາມສ່ຽງເອກະລາດ ບໍ່ໄດ້ລວມເອົາຄວາມສ່ຽງທຸລະກິດ ເຊັ່ນ: ການປ່ຽນແປງຂອງສະພາບແວດລ້ອມ, ເຕັກໂນໂລຊີ ແລະ ອຸດສາຫະກໍາ. ນະໂຍບາຍຂອງທະນາຄານແມ່ນເພື່ອຄວບຄຸມຄວາມສ່ຽງທຸລະກິດຜ່ານຂັ້ນຕອນ ແລະ ແຜນຍຸດທະສາດຂອງທະນາຄານ.

## 36. ນະໂຍບາຍບໍລິຫານຄວາມສ່ຽງ (ຕໍ່)

***ໂຄງສ້າງຂອງການຄຸ້ມຄອງຄວາມສ່ຽງ***

ສະພາບໍລິຫານແມ່ນມີຄວາມຮັບຜິດຊອບສໍາລັບການບໍລິຫານຄວາມສ່ຽງໂດຍລວມ ແລະ ສໍາລັບການອະນຸມັດ ກົນລະຍຸດ ແລະ ຫລັກການບໍລິຫານຄວາມສ່ຽງ.

ຄະນະກໍາມະການບໍລິຫານຊັບສິນ ແລະ ໜີ້ສິນ ມີຄວາມຮັບຜິດຊອບໃນການພັດທະນາກົນລະຍຸດ ແລະ ຫລັກການໂດຍລວມ, ຂອບເຂດວຽກ, ນະໂຍບາຍ ແລະ ຂອບເຂດ. ພະແນກປະຕິບັດຕາມ ແລະ ຄວາມສ່ຽງ ແມ່ນຮັບຜິດຊອບໃນການຕັດສິນໃຈ ແລະ ຄວບຄຸມຄວາມສ່ຽງ ແລະ ລາຍງານໃຫ້ສະພາບໍລິຫານຮັບຮູ້.

ນະໂຍບາຍຂອງທະນາຄານແມ່ນຂັ້ນຕອນການຈັດການຄວາມສ່ຽງໂດຍທີ່ທະນາຄານໄດ້ຖືກກວດສອບປະຈໍາປີ. ເຊິ່ງຜ່ານການກວດສອບນີ້ຈະຮູ້ໄດ້ວ່າທະນາຄານສາມາດປະຕິບັດໄດ້ຕາມຂັ້ນຕອນທີ່ວາງໄວ້ຫຼືບໍ່. ພະແນກກວດກາພາຍໃນໄດ້ປຶກສາຫາລື ຜົນຂອງການປະເມີນຄວາມສ່ຽງ ແລະ ລາຍງານສິ່ງທີ່ພົບເຫັນ ແລະ ຄໍາແນະນໍາໃຫ້ຄະນະກໍາມະການກວດກາ.

## 37. ການບໍລິຫານທຶນ

ທະນາຄານໄດ້ຮັກສາທຶນສໍາຮອງຕໍ່າສຸດຕາມລະບຽບການເພື່ອໃຫ້ສອດຄ່ອງຕາມຂໍ້ກໍານົດເລກທີ 536/ກຄທສ/ທຫລ, ລົງວັນທີ 14 ຕຸລາ 2009 ອອກໂດຍຮັກສາການຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ແລະ ຄໍາແນະນໍາອື່ນໆ. ຈຸດປະສົງເບື້ອງຕົ້ນຂອງການບໍລິຫານທຶນຂອງທະນາຄານແມ່ນເພື່ອຮັບປະກັນວ່າທະນາຄານໄດ້ປະຕິ ບັດຕາມຂໍ້ກໍານົດທາງດ້ານເງິນທຶນຂອງທະນາຄານກາງ. ທະນາຄານຮັບຮູ້ເຖິງຄວາມຈໍາເປັນຂອງທະນາຄານເພື່ອຮັກສາການບໍລິ ຫານຊັບສິນ ແລະ ໜີ້ສິນໃຫ້ມີປະສິດທິພາບເພື່ອສ້າງສົມດຸນລະຫວ່າງການສ້າງກໍາໄລ ແລະ ຄວາມພຽງພໍຂອງທຶນ.

ອີງຕາມຂໍ້ກໍານົດເລກທີ 536/ກຄທສ/ທຫລ, ທຶນຕາມລະບຽບການຂອງທະນາຄານກາງຖືກວິເຄາະເປັນ 2 ລະດັບຄື:

- ທຶນຊັ້ນ 1 ປະກອບດ້ວຍ: ທຶນຈົດທະບຽນ, ຄັງສະສົມຕາມລະບຽບການ, ທຶນເພື່ອການຂະຫຍາຍທຸລະກິດ ແລະ ທຶນອື່ນໆ ແລະ ກໍາໄລລໍຖ້າແບ່ງປັນ;
- ທຶນຊັ້ນ 2 ແມ່ນມູນຄ່າເທົ່າກັບ 45% ຂອງການຕີມູນຄ່າຄືນເງິນແຮ ຫຼື ຕໍ່າກວ່າ 1,25% ຂອງຍອດລວມຄວາມສ່ຽງຂອງລາຍການໃນໃບລາຍງານຖານະການເງິນສະເພາະກິດຈະການ ແລະ ຍອດເຫຼືອຂອງເງິນແຮທົ່ວໄປພາຍໃນໄລຍະ

ຂອບເຂດຕ່າງໆແມ່ນຖືກນໍາໃຊ້ເພື່ອເປັນອີງປະກອບຂອງທຶນອີງໃສ່: ທຶນຊັ້ນ 2 ບໍ່ສາມາດເກີນທຶນຊັ້ນ 1 ໄດ້ ແລະ ໜີ້ສິນສໍາຮອງບໍ່ສາມາດເກີນ 50% ຂອງທຶນຊັ້ນ 1.

## 37. ການບໍລິຫານທຶນ (ຕໍ່)

ການວິເຄາະທຶນແມ່ນອີງຕາມຂໍ້ມູນທາງການເງິນທີ່ໄດ້ຈາກເອກະສານລາຍງານການເງິນສະເພາະກິດຈະການ ຕາມມາດຕະຖານສາກົນດ້ານການລາຍງານການເງິນ ເຊິ່ງມີດັ່ງຕໍ່ໄປນີ້ :

| | *31 ມີນາ 2018*<br>*ລ້ານກີບ* | *31 ທັນວາ 2017*<br>*ລ້ານກີບ* |
|---|---|---|
| ທຶນຊັ້ນ 1 | 1.867.177 | 1.729.826 |
| ທຶນຊັ້ນ 2 | (2.951) | 984 |
| ລວມທຶນ | **1.864.226** | **1.730.810** |
| ລົບ: ຫັກອອກຈາກທຶນ (ການລົງທຶນໃນນິຕິບຸກຄົນອື່ນ) | (561.623) | (561.623) |
| **ທຶນສໍາລັບການຄິດໄລ່ CAR (A)** | **1.302.603** | **1.169.187** |
| ຄວາມສ່ຽງສໍາຄັນຢູ່ໃນລາຍງານຖານະການເງິນ | 10.496.526 | 10.568.547 |
| ຄວາມສ່ຽງສໍາຄັນຢູ່ລາຍການນອກໃບລາຍງານຖານະການເງິນ | 2.301.724 | 2.172.751 |
| **ລວມຄວາມສ່ຽງສໍາຄັນຢູ່ຊັບສິນ (B)** | **12.798.250** | **12.741.298** |
| **ອັດຕາສ່ວນຄວາມພຽງພໍຂອງທຶນ (A/B)** | **10,18%** | **9,18%** |

## 38. ມູນຄ່າຍຸດຕິທໍາຂອງຊັບສິນ ແລະ ໜີ້ສິນທາງການເງິນ

ມູນຄ່າຍຸດຕິທໍາໝາຍເຖິງ ມູນຄ່າຊັບສິນທີ່ສາມາດແລກປ່ຽນເປັນເງິນ ຫຼື ການຊໍາລະໜີ້ສິນບົນພື້ນຖານລາຍການເຄື່ອນໄຫວ ໃນເງື່ອນໄຂແກ່ງແຍ້ງປົກກະຕິ. ເນື່ອງຈາກວ່າບໍ່ມີລາຄາສົມທຽບຂອງຕະຫລາດ, ຊັບສິນ ແລະ ໜີ້ສິນ ຂອງທະນາຄານຈຶ່ງບໍ່ສາມາດປະເມີນລາຄາຕາມຕະຫລາດໄດ້. ດັ່ງນັ້ນ, ມູນຄ່າຍຸດຕິທໍາຈຶ່ງຖືກປະເມີນແບບສົມມຸດຕິຖານອີງຕາມລັກສະນະຂອງຊັບສິນ ແລະ ໜີ້ສິນ. ຕາມຄໍາເຫັນຂອງຄະນະບໍລິຫານ ເງິນທີ່ກູ້ຢືມຈາກ ທຫລ, ມູນຄ່າຕາມບັນຊີຂອງ ຊັບສິນ ແລະ ໜີ້ສິນທາງການເງິນ ທີ່ຢູ່ໃນ ໃບລາຍງານຖານະການເງິນສະເພາະກິດຈະການແມ່ນຖືກຄາດຄະເນຢ່າງສົມເຫດສົມຜົນກັບມູນຄ່າຍຸດຕິທໍາ. ໃນການປະເມີນດັ່ງກ່າວ, ຄະນະບໍລິຫານຂອງທະນາຄານ ສົມມຸດຖານວ່າ ເງິນກູ້ ສ່ວນໃຫຍ່ຖືຈົນຄົບກໍານົດ ດ້ວຍມູນຄ່າຍຸດຕິທໍາ ເທົ່າກັບ ມູນຄ່າຕາມບັນຊີຂອງເງິນກູ້ທີ່ຖືກດັດແກ້ເງິນແຮຈາກການຫັກຄ່າເສື່ອມ.

## 39. ເຫດການທີ່ເກີດຂຶ້ນຫຼັງມື້ທີ່ອອກເອກະສານລາຍງານ

ບໍ່ມີເຫດການໃດເກີດຂຶ້ນຫລັງຈາກວັນທີ 31 ມີນາ 2018 ທີ່ມີຜົນກະທົບສໍາຄັນຕໍ່ໃບລາຍງານຖານະທາງການເງິນສະເພາະກິດຈະການຂອງທະນາຄານ.

## 40. ອັດຕາແລກປ່ຽນທີ່ນໍາໃຊ້ກັບສະກຸນເງິນຕາຕ່າງປະເທດ ທຽບເທົ່າເງິນກີບລາວໃນງວດ

| | *31 ມີນາ 2018* | *31 ທັນວາ 2017* |
|---|---|---|
| | *ກີບ* | *ກີບ* |
| ໂດລາ ສະຫະລັດ | 8.277,00 | 8.277,00 |
| ເອີໂຣ | 10.108,00 | 9.870,00 |
| ບາດໄທ | 265,77 | 253,97 |
| ປອນ ອັງກິດ | 11.361,00 | 10.947,00 |
| ເຢນ ຍີ່ປຸ່ນ | 76,25 | 72,09 |
| ໂດລາ ອົດສະຕາລີ່ | 6.215,00 | 6.350,00 |
| ຢວນ ຈີນ | 1.301,00 | 1.257,00 |

| ກະກຽມໂດຍ: | ອະນຸມັດໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ ນ. ລໍາມະນີແສງ ໄຊຍະເພັດ | ທ່ານ ນ. ພູແສງທອງ ອະນຸລັກຄໍາ | ທ່ານ ບົວວັນ ສີມະລີວົງ |
| ຫົວໜ້າພະແນກບັນຊີສັງລວມ | ຫົວໜ້າພະແນກກວດກາພາຍໃນ | ຮອງຜູ້ອໍານວຍການໃຫຍ່ |

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນະຄອນຫຼວງວຽງຈັນ, ສປປ ລາວ

9 ພຶດສະພາ 2018